ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ

# ໜອງຜີເຜດ

ແປຈາກ **La Mare au DIABLE**

ຂອງ **george SAND**

ໂດຍ

ທ້າວເກນ

ພິມເທື່ອທີສອງ ໑,໕໐໐ ສະບັບ

ທີ່ສຳນັກງານວັນນະຄະດີ

# ຄຳນຳໜ້າ

ໜັງສື "ໜອງພີເພດ" ເປັນໜັງສືອ່ານຫຼິ້ນ ແລະໄດ້ແຕ່ງຂຶ້ນເປັນພາສາຮ້ອຍແກ້ວ ຄືເປັນຄວາມເວົ້ນທັມມະດາສາມັນ. ຂ້າພະເຈົ້າໄດ້ລຽບລຽງ ແລະທ້ອນໂຮມໜັງສືເຫຼົ່ານີ້ມາດົນແລ້ວ ແຕ່ບໍ່ມີໂອກາດພໍທີ່ຈະພິມໄດ້ ເມື່ອໄດ້ຮັບຄວາມສນັບສນູນຈາກພວກເພື່ອນບ້ານ ທີ່ຫວັງຈະເຫິນພາສາຂອງຕົນດານເຣັດໄດ້ໄປເປັນໂດຍດີ ແລະໂອກາດກໍອຳນວຍໃຫ້ພໍສົມຄວນແລ້ວ ຂ້າພະເຈົ້າຈຶ່ງໄດ້ຈັດພິມຂຶ້ນເປັນທີແຣກ ເພື່ອແຜ່ພາຍໃຈຄວາມອັນປາກົດວ່າບໍ່ທັນເປັນທີ່ນິຍົມເທື່ອ ແຕ່ອາດຈະເປັນຄະຕິຢ່າງນຶ່ງແກ່ຜູ້ມັກສ້າງສາທາປໂຍດ ແລະລ້າງສ່ວຍຈິດໃຈຂອງຕົນໃຫ້ຊື່ນບານໄປໃນທາງດີແລະງາມ ເຖິງຈະທຸກໄຮ້ໄດ້ຈົນກໍຄຳແລ້ວ.

ຜູ້ອາວຸໂສ ແລະສລາດສລຽວໃນທາງອັກສອນສາດລາວພ້ອມດ້ວຍຄນະກອງວັນນະຄະດີ ກໍເຫັນວ່າເປັນທີ່ສົມຄວນແກ່ຄວາມປາຖນາຂອງສາທາຣະນະຊົນ ເພາະເປັນໜັງສືທີ່ກ່ຽວກັບການເຮັດໄຮ່ໄສ່ນາແລະປະເພນີອັນສັດຈິງ ເຊິ່ງສ່ວນຫຼາຍກໍແມ່ນການປະກອບອາຊີບອັນໂລກນິຍົມ ດ້ວຍອາຈຸ່ມຕົນ ແຂນດັນໄຖ ໃຫ້ຕາກແດດ ຫົວອາບນ້ຳຝົນ ຢູ່ໃນຄວາມຊື່ນແລະຄວາມໂສກຕາມພາວະເສົ້າໝອງ ແຕ່ເປັນໜ້າຊົມເຊີຍ ! ດັ່ງທ່ານຈະໄດ້ອ່ານຕໍ່ໄປນີ້.

ທ້າວເກບ

# ໑. ພໍ່ເຖົ້າເຈົ້າເຮືອນ

ວັນນຶ່ງ, ພໍ່ເຖົ້າເຕືອນລູກເຂີຍວ່າ: "ສີທົນເອີຍ ! ລູກເປັນໝ້າຍລູກສາວພໍ່ກໍໄດ້ສາມປີນີ້ແລ້ວ, ພໍ່ວ່າ, ຫາເອົາຄູ່ເອົາຄືນສາເດ... ລູກຊາຍກົກເຈົ້າກໍໄດ້ເຈັດປີເຂົ້ານີ້ ແລະອາຍຸເຈົ້າເອງກໍປ່າງເຂົ້າສາມສິບແລ້ວ; ຄຶດເບິ່ງຄັກ ໆ ດູລູກເອີຍ, ຄັນກາຍນີ້ໄປ, ພໍ່ວ່າ, ມັນຊິເຖິກສ້າງເຖິກສາໃດ. ລູກເຈົ້າທັງສາມກໍສອນໜ້າເດາະເຫຼາະແດະເຫຼະໝົດແລ້ວ. ແຕ່ນີ້ຄືນຫຼັງເຂົາກໍບໍ່ໄດ້ເຮັດໃຫ້ພວກເຮົາຫຍຸ້ງຍາກນໍາປານໃດດອກ; ແມ່ເຖົ້າແລະປ້າເຈົ້າກໍພາກັນລຸກລໍ່າຄໍ່າຄອຍຢູ່. ແລະໄດ້ພາກັນຮັກແພງເອົາເຂົາຕາມສະຖານອັນຄວນ. ທ້າວຄໍາຈັນເຈົ້າ, ຮອດປີນີ້ມາ, ກໍໃຫຍ່ແດ່ແລ້ວ, ພັດງົວຄວາຍປາຍເຂົາໄປກິນຫຍ້າກິນຍູ. ຫຼືຈູງມ້າຈູງລາໄປອາບນໍ້າກິນທ່າກໍເປັນແລ້ວ. ມັນບໍ່ໃຫ້ຍາກນໍາມັນປານໃດດອກບັກນີ້, ສ່ວນຫຼາຍກໍວິຕົກນໍາສອງຄົນນັ້ນ. ທາງຮັກທາງແພງກໍຮັກແພງຄືກັນໝົດທຸກຄົນທັ້ນແລ້ວ: ເພາະວ່າ, ຜູ້ໃດກໍລູກຜູ້ໃດກໍຫຼານ. ແຕ່ເມື່ອໜ້າຫ້າທົກໃຜຊິຫຼື ໆເຫັນໄດ້ວ່າມັນຊິເປັນໄປຢ່າງໃດ; ໜ້າສົມເພດເວທນານໍາລູກກໍາພ້າຫຼານກໍາພອຍ. ຕົກປີນີ້ມາພໍ່ແຮງເປັນຫ່ວງເປັນໃຍນໍາເຂົາ, ເພາະປ້າເຈົ້າກໍຊິອອກລູກມໍ່ ໆ ນີ້ ແລະຊິໄດ້ລູກ

ອ່ອນມາອຸ້ມມາເຈັ່ງປູ່ອີກ. ຄັນມື້ນຫ້ອງເມື່ອໃດ ຈຳເປັນເຂົາກໍຊິບໍ່ໄດ້ເວົ້ານຳລູກເຈົ້າປານໃດ. ຄືສາວຈັບເຣືອງເຈົ້ານັ້ນກໍດີ ແລະສ່ວນຫຼາຍແມ່ນຫ້າວຄຳວັນເຈົ້ານັ້ນ, ຫາກໍໄດ້ສີປີນີ້ນີ້ງ. ເກົ່ງໄພດສາແລ້ວບັກນີ້ນະ, ພວມກະດ້ານກະດຶງ, ປູ່ບໍ່ເປັນພາຍໃນຍັ່ງເວັນຍັ້ງຄືນເອົາສາຊື່ ໆ, ນີ້ຈັ່ງແມ່ນລູກໄດ້ພໍ່. ໃຫ່ງມາ, ບໍ່ປອດແລ້ວທາງດຸທາງວັນນີ້ ! ແຕ່ຄືດຍາກນຳແຕ່ບາດນັ້ນເຕັ້ນມັນຜ່າຍໄປທາງໂສກທາງເຫາວ ຫຼືທາງສັດສາວາສິງທັ່ນັ້ນແລ້ວ, ແມ່ເຖົ້າເຈົ້າກໍຊິບໍ່ມີເຫື່ອມີແຮງພໍຊິຄຸບຄວາເອົາທັນ. ຄັນຜູ້ຄອງທ້ອງຫາກອອກມາບານໃດ ຈຳເປັນແມ່ເຖົ້າເຈົ້າກໍຕ້ອງໄດ້ຊ່ວຍເຈັ່ງຊ່ວຍພາຍປູ່ອີກ. ວ່າປ່າງໜ້ອຍກໍປີນີ້ງກ່ອນ. ລູກຫຼານທັງຫຼາຍເຫຼືອອີກເຫຼືອອາງເຫຼືອເຫື່ອເຫຼືອແຮງພວກເຮົາກໍບ້ອນເປັນຈັ່ງຊີ້ແລ້ວລູກເອີຍ--- ພໍ່ບໍ່ປາກຮູ້ປາກເຫັນລູກຫຼານບໍ່ມີຜູ້ຫິວກັບນັບຊາ, ບໍ່ມີຜູ້ລ່ຳຜູ້ຄອອ, ປະໄວ້ຕາມດີນຕາມຫ້ຽາ. ເມື່ອຄຶດເຖິງຄວາມກັນດານອັນຊິບັງເກີດນາໃນພາຍໜ້າ, ພໍ່ກໍກິນເຂົ້າບໍ່ແຊບນອນກໍບໍ່ຫຼັບ. ຄຶດເບິ່ງມັນຖີ່ ໆ ລູກເອີຍ. ພໍ່ເຫັນດີວ່າ ໄປຊອກເອົາສາເມັ່ງນັ້ນ ເມັ່ງເຈົ້າໄດ້ກໍແມ່ນລູກສາວພໍ່ປູ່ຫັ້ນແລ້ວ, ເມື່ອຍາມປີເດືອນບໍ່ຖ້າເຮົາໃດ ! ພໍ່ວ່າ, ຕິກລິງສ່ານໍ່ ໆ ນີ້, ໃຫ້ເຈົ້າຄຶດເຫັນລູກເວົ້າແລະພໍ່ແມ່ນີ້ແດ່. ພວກເຮົາໜີດທຸກຄີນກໍຫວັງເພິ່ງພາອາໄສຊື່ງກັນແລະກັນ: ພວກເຮົາໜີວທຸກຄີນ ກໍໄດ້ຮ່ວມສຸກຮ່ວມທຸກກັນມາແຕ່ນານແລ້ວ.

- ຈັ່ງວ່ານີ້ແລ້ວ, ພໍ່ເອີຍ ! (ລູກເຂີຍຕອບ) ຄັນພໍ່ປາກໃຫ້ເອົາອີຫຼີ ນັ້ນກໍເວົ້ານັບຄັກສາ, ລູກກໍຄຶດເຫັນຢູ່ດອກວ່າ ພໍ່ແມ່ຄົງໄດ້ຮັບຄວາມລຳບາກຍາກແຄນນຳ. ສ່ວນລູກນີ້, ເວົ້າຕາມຊື່, ບໍ່ປາກເອົາເມັຽໃໝ່ກໍທໍ່ກັນກັບບໍ່ປາກຕາຍຈຸ່ມນ້ຳຫັ້ນແລ້ວ. ຜູ້ໃໝ່ນີ້ຈັກຊິເປັນແນວໃດ: ໂອນໍ ! ຜູ້ດີຊ້ຳວາຍຜູ້ຂີ້ຮ້າຍຊ້ຳພັດຍັງ ! ຜູ້ລ່ວງລັບໄປແລ້ວນັ້ນກໍຍິງແທ້ຍິງວ່າ, ສລາດສລຽວຄຶດຄອບຮອບສະຕິ, ຮູ້ຢູ່ຮູ້ກິນ, ຮູ້ດີຮູ້ງານ, ຮູ້ຮັກນັກຖນອມລູກຜົວ, ຮູ້ແຕ່ງຮູ້ແປງ, ບໍ່ມີທາງຕິໄດ້ ລູກມາສົມສູ່ຢູ່ກັບກໍຫວັງເປັນຢ້າວເປັນເຮືອນ, ເປັນແໜ້ນເປັນແກ່ນ, ເຖິງວ່າລົ້ມຫາຍຕາຍຈາກກັນ, ກໍບໍ່ໄດ້ຄິດວ່າຊິຫຼົງຊິລືມກັນຈັກເທື່ອ.

- ຄວາມລູກເວົ້ານີ້ ກໍແມ່ນບໍຣິສຸດແທ້ແລ້ວ, ສິເຫີນ ! (ພໍ່ເຖົ້າເວົ້າ) ພໍ່ກໍຮູ້ຢູ່ວ່າພວກເຈົ້າເປັນຫ່ວງນຳກັນກໍດີ, ແຕ່ວາວລາວຍັງເປັນຄົນນຳເຈົ້າ ໆ ກໍໄດ້ເພື່ອນພາລາວໃຫ້ໄດ້ຢູ່ສນຸກສຸກສະບາຍ. ຄັນແມ່ນແນວຕາຍຕາງເປັນ. ດຽວນີ້ເຈົ້າກໍຢູ່ປ່າຊ້າພຸ້ນແລ້ວແລ້ວ, ແລະນາງຄຳພົວຄົງຢູ່ເປັນຄົນນຳລູກແລະພໍ່ແມ່. ຍ້ອນເມັຽເຈົ້າດີ ເຈົ້າຈຶ່ງໝັ້ນຮັກປັກຈິດເຖິງພຽງນີ້. ພໍ່ບໍ່ປາກໃຫ້ເຈົ້າເປັນຫງ່ວມເປັນເຫງົາຫຼາຍ; ຄັນເຈົ້າບໍ່ມ່ວນບໍ່ຊື່ນ, ພວກເຮົາກໍເສົ້າໂສກແລະຫີນຫວາຍ ບໍ່ແມ່ນພໍ່ປາກໃຫ້ເຈົ້າລືມຄຳພົວດອກ, ເຮັດຈັ່ງໃດ. ຫັນນະຊາດຫາກຄາດມາແຕ່ພໍ່ພຽງນີ້. ເຖິງວັນສິບວັນພອນ

ມາພວກເຮົາກໍໄດ້ພາກັນຕັກບາດປາດນ້ຳ ແລະອາທິຖານວານຫາ
ປູ່ບໍ່ຂາດ. ຜູ້ນັ້ນລ່ວງລັບໄປກໍຄົງຮູ້ແຫຼະຕິ ວ່າພວກເຮົາບໍ່ໄດ້ຫຼົງ
ໄດ້ລືມລາວ. ປູ່ເມືອງຜີພຸ້ນ, ຄັນຄຳພີວຫາກປາກໄດ້ໄປເປັນ, ເມອ
ໃດລາວກໍຄົງມາບອກໃຫ້ເຈົ້າເອົາເມັຽໃໝ່ມາລ້ຽງລູກ ຊັ້ນແລ້ວລູກ
ເອີຍ ! ໃຫ້ເຈົ້າພິເຄາະເລາະຫາເບິງຜູ້ສິມຄວນ ພໍມາສືບໜ້າແທນ
ຕາສືບມູນແທນນັງຜູ້ເກົານັ້ນໄປ. ນີ້ກໍບໍ່ແມ່ນຂອງງ່າຍ, ແລ້ວກໍບໍ່
ແມ່ນຂອງຫາບໍ່ໄດ້ ຄັນໄດ້ແລ້ວເຈົ້າກໍຄົງຮັກຫອມເອົາເຂົາ ດັ່ງເຈົ້າ
ຮັກຫອມລູກສາວພໍ່ຫັ້ນແລ້ວ: ດ້ວຍວ່າ, ລູກກໍເປັນຜູ້ຈິບຜູ້ດີ, ຮູ້ເອົາ
ຈິດເອົາໃຈລູກເມັຽແລະພໍ່ເຖົ້າແມ່ເຖົ້າ.

- ນັ້ນກໍເອົາແຕ່ພໍ່ວ່າແລ້ວ, (ລູກເອີຍຕອບ): ລູກກໍຊິລອງ
ປະຕິບັດຕາມຄວາມປາຖນາຂອງພໍ່ເບິງ, ດັ່ງແຕ່ເກົາມາຫຼັງຫັ້ນ
ແລ້ວ.

- ອັນນີ້ພໍ່ທຳຄວາມບຸດິທັ[illegible]ກໍ່ເຈົ້າລູກເອີຍ, ດ້ວຍວ່າເຈົ້າກໍ
ເປັນຜູ້ຮູ້ຟັງຄວາມຊອບທັມແລະສັດຈິງ ຕໍ່ພໍ່ເຖົ້າເຈົ້າເຮືອນມາແຕ່
ນານແລ້ວ. ບັດນີ້ເຮົາຈິງພ້ອມພຽງຮຽງໜ້າກັນຊອກຫາເບິງ, ເມັຽ
ນັ້ນ; ສ່ວນຫຼາຍພໍ່ກໍບໍ່ຢາກໃຫ້ເຈົ້າຜູ້ໜຸ່ມຜູ້ນ້ອຍຫຼາຍ, ເພາະເຈົ້າ
ກໍແກ່ໂຕແລ້ວ. ສາວຂຶ້ນໃໝ່ໃຫ່ງລຸນມັກໃຈເບົາ ແລະເຂົາກໍຈະຕິ
ວ່າລູກເຈົ້າສາມຄົນນີ້ ເຫຼືອເຫືອເຫຼືອແຮງເຂົາ, ຊ້ຳບໍ່ແມ່ນລູກຄົງ.
ພໍ່ຢາກໃຫ້ເຈົ້າໄດ້ຜູ້ຫຸ່ນຜູ້ຫ່ຽງແດ່. ຮູ້ໄກ້ຮູ້ໄກ, ຮູ້ໜັກຮູ້ເບົາ--- ສ່ວນ

ຫຼາຍສາວໜຸ່ມສາວນ້ອຍ ບໍ່ຮູ້ສລາດທາງສ້າງທາງແປງ ແລະເຂົາກໍຈະຕິວ່າ ເຈົ້ານັ້ນເຖົ້າ ໆ ແກ່ ໆ ແລະຕິລູກເຈົ້າວ່າອ່ອນ ໆ ແອ ໆ. ລູກເຈົ້າຈະໄດ້ ທຸກກໍເພາະດັ່ງນີ້ແລ້ວ.

- ຈັ່ງຊີ້ດີພໍ່ເອີຍ (ລູກເຂີຍວ່າ) ຄັນເຂົາຂິ້ນເທັງເຕັງຮ້າຍລູກເຖົ້າ, ເຮັດກະພິດກະຟາດ ໃບ່ບຽດສຽດຄວາມ, ຂ້າດີບີໄບບດັ່ງນີ້ ກໍສຸດຄວາມຄິດແລ້ວ.

- ເອົາແຕ່ການມັນເປັນແລ້ວບ່ອນຫັ້ນ (ພໍ່ເຖົ້າຕອບ): ໄກ້ຖົດລັດລຽງເຮົາໝູ່ນີ້ ບີງຮ້າຍກໍມີ ບີງດີກໍມີ; ແຕ່ຄັນຫາກຊອກຫາບໍ່ໄດ້ຈັ່ງມັກ ກໍແມ່ນເຮົາຂີ້ຮ້າຍໂພດສາແລ້ວ.

- ອີຫຼີດອກເບາະພໍ່ (ລູກເຂີຍສອບລອບວ່າ) ຂອງວ່າປູ່ບ້ານເຮົາ ສາວຜູ້ຈິບຜູ້ດີກໍມີຖີມໄປ: ຄືສາວທອງໃບ, ສາວສີໄວ, ສາວບຸນເຮືອງ. ສາວອັນນີໝູ່ຫັ້ນ--- ຜູ້ໃດກໍ່ຜູ້ໃດກໍເອົາແຕ່ພໍ່ເປັນເທາະ ! ---

- ຟ້າວກ່ອນລູກເອີຍ ! (ພໍ່ເຖົ້າວ່າ) ຟ້າວກ່ອນ, ຟ້າວໄລ່ໄປຫຼາຍ, ສາວໝູ່ນີ້ພໍ່ວ່າບັງໜຸ່ມໂພດ. ນ້ອຍໂພດ, ທຸກໂພດ, ຫຼືງາມໂພດ. ພິຈາຣນາເບິ່ງກ່ອນ, ງາມບໍ່ໄດ້ປຽບກໍມີໃດ.

- ລູກເຂີຍຕອບໄປຊີງລ່າ ໆ ວ່າ: ຊິໃຫ້ລູກເອົາຜູ້ຂີ້ຮ້າຍຫວະຊັ້ນ ?.

- ບໍ່ວ່າ ຂີ້ຮ້າຍພໍ່ກໍບໍ່ປາກໃຫ້ເອົາ ເພາະຍັງຊິໄດ້ລູກໄດ້ເຕົ້ານຳກັນຢູ່. ຄັນໄດ້ລູກຜູ້ຂີ້ເຮື້ອຂີ້ຮ້າຍ, ມູດຍູດມືດຍືດ, ບໍ່ໃຊ່ຖືກໃຈພໍ່ ! ຄັນວ່າເປັນສາວຈ້ອຍ ໆ, ເນື້ອປອດກອດໝັ້ນ, ບໍ່ງາມບໍ່ຂີ້ຮ້າຍ, ເອີ ! ເອົາເຫຼາະ, ລູກເອີຍ.

- ລູກເຂີຍຍິ້ມຫົວແລ້ວຕໍ່ຄວາມໄປວ່າ: ຈັ່ງວ່ານີ້ແລ້ວ ຄັນເລືອກໄດ້ຈັ່ງພໍ່ວ່ານີ້ ກໍແມ່ນບີມີດເອົາສາທ່ນັ້ນແລ້ວ. ເປັນໝ້າຍຄືລູກນີ້ ຄັນບໍ່ເອົາຜູ້ຂີ້ຮ້າຍແລະຜູ້ທຸກແດ່ ຜູ້ຮັ່ງມີແຮງຊິໄກແລ້ວ.

- ບ່ໍາ, ເວົ້າບໍ່ໄດ້ໃດ, (ພໍ່ເຖົ້າຕອບ): ຊັ້ນຄັນເປັນໝ້າຍຄືກັນແລະບໍ່ມີລູກເດ. ຊິເອົາບໍ່ສີຫົນ? ພໍ່ເຫັນຢູ່ຜູ້ນຶ່ງດງອນີ້; ທັງຮັ່ງທັງມີ, ທັງດີທັງງາມ !

- ຈຸບັນນີ້, ລູກບໍ່ທັນຄຶດເຫັນໃຜນາ (ລູກເຂີຍຕອບ).

- ນີ້ແມ່ນ, (ພໍ່ເຖົ້າວ່າ): ແຕ່ຢູ່ອ້ອມແອ້ມເຮົານີ້ ພໍ່ກໍບໍ່ທັນເຫັນໃຜເທື່ອຄືກັນ, ຫາກມີ, ແຕ່ຢູ່ບ່ອນອື່ນພຸ້ນ.

- ຊິແມ່ນໃຜນໍ. (ລູກເຂີຍນ້ອນຄວາມ) ຄັນພໍ່ປະກົດເຫັນຜູ້ໃດຜູ້ນຶ່ງ ກໍລອງເວົ້າເບິ່ງດູ.

# ໔. ພໍ່ບາຜູ້ລຳຄັບ

- ອີຫຼີ ! (ພໍ່ເຖົ້າວ່າ) ພໍ່ເຫັນແລ້ວຜູ້ນຶ່ງ ເຂົາເປັນສກຸນ ສົມສກຸນແລະເປັນແມ່ໝ້າຍເພັງບຸສດີ, ຢູ່ບ້ານຫາດຫຼວງ.

- ລູກເຂີຍຕອບໄປເປັນສົງໄສວ່າ: ລູກບໍ່ຮູ້ຈັກຮອດຄົນ ຮອດ ບ້ານຮອດເຮືອນເຂົາ, ຈັກຢູ່ໃສ.

- ເຂົາຊື່ວ່າຄຳພັນ ຄຳ ໆ ຄືຜູ້ເນື້ອລາງເຈົ້າຫັ້ນແລ້ວ.

- ໂອຄຳວ່າດີ ລູກກໍຍິນດີເອີ້ນຢູ່ດອກຊື່ນີ້ ຄຳພັນ ! ຄຳ ໆ ! ບະຊິເປັນຕາຮັກດີຄຳນັ້ນບໍ່ແລ້ວ. ຄັນຊິໄດ້ເອີ້ນຊື່ນີ້ຢູ່ເລື້ອຍ ໆ ແຮງ ຊ້ຳຮ້າຍແລ້ວ.

- ເພວໃດລູກກໍຮັກເຂົາໂລດ. ເພາະເຂົາເປັນຜູ້ມີໜ້າມີຕາ ແລະມີບິດໃສໃຈກໍກວ້າງຂວາງ. ແຕ່ພໍ່ບໍ່ໄດ້ພົບເຂົາດົນແລ້ວ. ເຂົາ ກໍບໍ່ເປັນຜູ້ເຮີຜູ້ຮ້າຍປານໃດນາ. ຕາມພໍ່ໄດ້ເຫັນແຕ່ກີ້ກໍສົມຄວນຢູ່ ແຕ່ຫາກບໍ່ເປັນສາວຈ້ອຍ ໆ ທໍ່ນັ້ນແລ້ວ ອາຍຸດີຊິໄດ້ສາມສິບສອງປີ ນີ້. ເຂົາເປັນລູກຕະກຸນມູນໜ້າແທ້ ໆ ໃດ ເຊື້ອສາຍຂອງເຂົາກໍລ້ວນ ແຕ່ຜູ້ສາມາດ ເຂົາມີໄຮ່ນາຕາກ້າກວ້າງຂວາງ ແລະເງິນທອງຂອງ ຂາວເຂົາກໍມາກມູນ ບາງທີຊິປາກຂາຍຄົນເກົ່າໄປສ້າງດົນໃໝ່ບຸ. ພໍ່ເຫັນວ່າເພວໃດເຂົາຄົງປາກໄດ້ຜົວແລ້ວດຽວນີ້. ຄັນກີຊິບາມາຣະ ບາດເຈົ້າຫາກຕ້ອງຕາເຂົາ ໆ ຄົງບໍ່ຂືນພໍ່ດອກ.

- ພໍ່ໄດ້ຈ່າວຖາມເບິງແດ່ແລ້ວຫວະເຣື່ອງນີ້ ?

- ເອີ ! ພໍ່ໄດ້ເປາະໆ ເບິງແດ່ແລ້ວ ຍັງຖ້າແຕ່ພວກເຈົ້າບ່າວສາວ. ຄັນພວກເຈົ້າທັງສອງຫາກຖືກວ້ອງຄ່ອງກັນແລ້ວ ມັກກໍບໍ່ຍາກດອກ. ເຂົາກໍເປັນຜູ້ລຶ້ງແກວ່ນກັນກັບເຮົາ ສ່ວນຫຼາຍກໍສນິດສນິມກັນມາແຕ່ນານແລ້ວ. ລູກກໍຮູ້ຕວາຈານສົມສີ.

- ຮູ້ປູ່ດອກ ນີ້ຕລາດນັດບຸນທາດຫຼວງ ລູກກໍຍັງໄດ້ເຫັນພໍ່ຊຸມເຂົ້າຊຸມເຫຼົ້າກັນກັບເພິ່ນຢູ່ໃນຮ້ານເຂົ້າແກງ. ບໍ່ແມ່ນເວົ້າເຣື່ອງນີ້ແດ່ຫວະ ?

- ເວົ້າເຣື່ອງນີ້ແດ່ຫັ້ນແລ້ວ, ເມື່ອລູກພວມຂາຍຄວາຍຢູ່ນັ້ນ ລາວກໍໄດ້ສັງຊອມເບິງກິລິຍາທ່າທາງຂອງເຈົ້າ ແລະໄດ້ສັລເສີນວໍ່ພໍ່ຟັງວ່າ ເຈົ້າເປັນຜູ້ເອົາອົກເອົາໃຈໃສ່ໜ້າວຽກຂອງຕົນ ເປັນຜູ້ອົດພຽນ ມີນິດໄສໃຈຄືຍິ້ມແຍ້ມ ຂຍັນຫັນມັ້ງເບີກບານ ເປັນຜູ້ສງົບງຽບແລະບໍ່ທໍ້ຖອຍຕໍ່ຄວາມຍາກ. ເມື່ອພໍ່ໄດ້ເລົ່າໃຫ້ລາວຟັງວ່າ ພັດແຕ່ເຈົ້າມາສົມສູ່ກໍໄດ້ເກືອບສິບສອງປີນີ້ແລ້ວ ເຈົ້າກໍໄດ້ເອົາໃຈໃສ່ໃນທາງຮ່ວມມືກັນສ້າງສາ ແລະບໍ່ໄດ້ຂາດຄວາມປນາດຄວາມຈັກເຫື່ອ. ເມື່ອລາວເຂົ້າໃຈດີແລ້ວ ລາວກໍໝາຍປູ່ວ່າຈະເອົາເຈົ້າເປັນລູກເຂີຍ. ພໍ່ດີໃຈນໍາແຕ່ວ່າຍິ່ງຄົນນັ້ນເປັນຜູ້ມີຊື່ສຽງ ແລະຕາມທີ່ພໍ່ໄດ້ສັງຊອມມາ ຄົນຄອບຄົວເຂົາກໍລ້ວນແຕ່ຜູ້ລາບນິດທັງສິ້ນ.

- ຕາມທາງສຽງຄືພໍ່ຊິໃຝ່ໃຈໃນທາງລາບຍິດແດ່ເນາະ.

- ກໍຊັ້ນແລ໋ວ, ລູກເດຊັ້ນ ?

- ມັກກໍແມ່ນບໍ່ມັກກໍແມ່ນ ເອົາແຕ່ພໍ່ເປັນແລ້ວບ່ອນຫັ້ນ ລູກນີ້ບໍ່ຍິນຮ້າຍຍິນດີນຳອັນໃດປານໃດດອກ ແລະບໍ່ໄດ້ໄລພາສາລະ ໃນກນຳເງິນທອງເຂົ້າຂອງປານໃດ ລູກມັກເຮັດນຳແຕ່ໄຮ່ນາຕາກ້າ ຫຼືງົວຄວາຍປາຍເຂົ້າໄປຈັ່ງຊັ້ນ ແຕ່ສ່ວນມູນມັງສັງຂຍາແນວລະອຽດລະອໍ ເຊັ່ນເງິນຄຳກຳແກ້ວເຫຼົ່ານັ້ນ ລູກກໍບໍ່ໄດ້ຄິດໄດ້ອ່ານໄດ້ຈື ໄດ້ຈຳ. ໝົດຍັງກໍບໍ່ຮູ້ວ່າແລ້ວ ຄັນຜູ້ໃດຫາກມາກ່ຽວຂ້ອງຕ້ອງຖຽງ ເອົາກໍຊິຍົກໃຫ້ຊ້ຳສາ ບໍ່ປາກຍາດປາກຊິງວ່າຂອງເຈົ້າແລະຂອງຂ້ອຍ ບາງທີຢ້ານຫຼົງນັບເອົາຂອງເພິ່ນມາເປັນຂອງຕົນ, ຖ້າບໍ່ແມ່ນຂອງເລັກ ໆ ນ້ອຍ ໆ ງ່າຍດາຍ ແລະຈື່ໄດ້ຄັກແນ່ວ່າແມ່ນຂອງຕົນແລ້ວ, ລູກບໍ່ປາກເອື້ອເຟື້ອນຳປານໃດແລ້ວລູກນີ້.

- ຈັ່ງໃດກໍຕາມນັ້ນທະແມ, ຊັ້ນດີພໍ່ຈຶ່ງປາກໃຫ້ໄດ້ລູກໄດ້ເມັຽຜູ້ມີຫົວຄິດຫົວທາແດ່ ພໍມາກຸ້ມກາງຄອບຢ້າວຄົວເຮືອນ ໃນເມື່ອພໍ່ບໍ່ຢືນນຳ ຄັນລູກບໍ່ຫຸລະຫຸລັງນຳຊັບສິນເງິນທອງຂອງຕົນທີ່ຫາມາໄດ້ ແລະບໍ່ຍົກຂອງໃຫ້ໄວ້ແກ່ມັນດັ່ງນັ້ນ ກໍຈະບໍ່ເປັນການຖືກຕ້ອງຄ່ອງກັນກັບບຸນເກື້ອ ຜູ້ລູກຊາຍພໍ່ນັ້ນປານໃດແລ້ວ.

- ພໍ່ກໍບໍ່ມີວ່າຊິຕາຍໜີຈາກໃນມື້ ນີ້ ມື້ອື່ນດອກດີ ປ່າເປັນຫ່ວງເປັນໄຍນຳຫຼາຍເນາະ ຄັນຕາຍແລ້ວກໍບໍ່ມີຮູ້ເມື່ອ ລູກກໍບໍ່ມີ

ວ່າຊີຍາດມູນແຍ້ງນັງກັນກັບລຸງບຸນເກື້ອ ລູກກໍນັບຖືລາວປູ່ຄືກັນກັບ ພໍ່ຫັ້ນແລ້ວ ເຖິງມູນໄດ້ກໍແມ່ນສ່ວນຂອງລູກສາວພໍ່, ຂອງຫຼານ ລູກນີ້ສັນໃດຊີປູ່ສງົບສະບາຍ ຊີຖືກຕ້ອງຄ່ອງກັນກໍ່ເຮັດໄປທໍ່ນັ້ນແລ້ວ ພໍ່ກໍຄືກັນຫັ້ນດວາ, ລຸງບຸນເກື້ອກໍບໍ່ມີວ່າຊີອິນຂວາຍເອົາຂອງລູກ ຂອງຫຼານ ມາໃສ່ເອິກດີນຜູ້ດຽວດອກດີ, ດ້ວຍວ່າ, ເພີ່ນກໍຮັກຫຼານ ຄືກັນກັບລູກນີ້.

- ແມ່ນພໍ່ແລ້ວສີທົນ, ບຸນເກື້ອກໍຫາກເປັນລູກຊາຍດີຜູ້ນຶ່ງ ແລະເປັນອ້າຍກົກຂອງຜູ້ຫວັງດີຫວັງງານ ແລະນິບິດໃສໃຈຄໍອັນ ບໍຣິສຸດ. ບາງທີ ຄັນບຸນເກື້ອຫາກຕາຍກ່ອນເຈົ້າ ໃນເມື່ອລູກຫຼານ ບໍ່ທັນໃຫ່ງກ້າ ໜ້າບານເດ, ນີ້ກໍຄວນຄິດລ່ວງໜ້າໄວ້ກ່ອນລູກເອີຍ. ຄອບຄົວນຶ່ງຕ້ອງມີພໍ່ເຈົ້າເຮືອນເປັນຜູ້ແນະນຳ, ຕຸກເຕືອນຜູ້ບ້ງໜຸ່ມ ບ້ງນ້ອຍ, ຈັບບ່ອນຮ້າຍຍ້າຍໃສ່ບ່ອນດີ ຖ້າບໍ່ດັ່ງນັ້ນກໍຈະເປັນການ ຮ້ອງຟ້ອງກັນເຖິງກວ້ານເຖິງສານປູ່ບໍ່ແລ້ວເປັນຈັກເທື່ອແລ້ວ ແລະ ພນັກງານສານ ກໍຈະພິປອງໃຫ້ພວກເຈົ້າເສັງຊັບດັບທົນໄປລ້າ ໆ ດາຍ ໆ ດັ່ງນັ້ນແລ້ວ ພວກເຮົາຈຶ່ງບໍ່ປາກຮັບຮອງເອົາຜູ້ໃດຜູ້ນຶ່ງ ມາຕື່ມເຂົ້າໃນຄອບຄົວ ບໍ່ວ່າຍິງຫຼືຊາຍບໍ່ວ່າໃຜ້ຫຼືເອີຍ, ຖ້າຜູ້ນັ້ນ ຫາກບໍ່ປາກຄືດກຸ້ມເກື້ອເພື່ອແຜ່ລູກຫຼານເປັນຊາວສາມສິບ... ເມື່ອ ແມ່ເຜິ້ງແຕກເຕັນປ່ອງຮັງແລ້ວ ຈຳເປັນຕ້ອງອອກໄປສ້າງຮັງໃໝ່ ຕື່ມ ແລະຕົວໃດກໍຕ້ອງຊິດຊ່ວຍກັນອິນຂວາຍຫານ້ຳເຜິ້ງມາລ້ຽງຈຶ່ງຊີບ

ຊ່ວຍກັນ. ເມື່ອລູກມາສືບສູ່ປູ່ນຳ ເຖິງລູກສາວພໍ່ຫາກມີພໍຈັບພໍ ບາຍປູ່ກໍດີ, ກໍບໍ່ໄດ້ດີສືບບິນຫາລູກແດ່ປ່າງໃດ, ດ້ວຍວ່າລູກກໍບໍ່ໄດ້ ຫ້າຖອບກໍ່ ໜ້າວຽກທີ່ການເຖິງຮັ່ງມີເປັນດີນາພຽງນີ້, ຕາມບ້ານນອກ ຂອກວຽງເຮົາ, ກໍແນ່ນບ້ອນກຳລັງແຂນແລະນ້ຳໃຈຄືຈັ່ງລູກຫັ້ນ ແລ້ວ. ແຕ່ຜູ້ຍິງບໍ່ຄືຜູ້ຊາຍ ເຂົາເປັນຜູ້ເຮັດນຳວຽກບ້ານການເຮືອນ, ນ້ຽນມັດບັດຣີເງິນທອງເຂົ້າຂອງທີ່ຜົວຫາມາໄດ້, ຫັງຄົວຢູ່ແຕ່ງກິນ, ບົວຣະ ກັດຂັ້ວສີລູກເຕົ້າ--- ດຽວນີ້ເຈົ້າກໍເປັນພໍ່ລູກອ່ອນ ຊຶ່ງຍັງຈະ ຊອກຫາເມັຽໃໝ່ຢູ່ອີກ ຖ້າເຈົ້າບໍ່ເອົ້ານຳມູນມັງສັງຂບາລູກເກົ່າເມື່ອ ລູກໃໝ່ບໍ່ມີມູນນັ້ນເດ ເມື່ອເຈົ້າຫາກໝົດບຸນໄປກ່ອນເຂົານັ້ນເດ ພວກເຂົາກໍຈະໄດ້ທຸກລຳບາກໃນພາຍລຸນ. ສ່ວນລູກເມັຽໃໝ່ ກໍ ຕ້ອງນັບເຂົາເຂົ້າໃນເຊື້ອສາຍລາຍລ່ອງຂອງເຮົາ ແລະຈຳເປັນຕ້ອງ ຫາລ້ຽງເຂົາຢູ່ເໝືອນກັນ. ຖ້າລູກຈະປະໃຫ້ແຕ່ພໍ່ນີ້ອຸດໜຸນຄ້ຳຊູລູກ ຫຼານ ພໍ່ກໍບໍ່ຂືນ, ອີຫຼີ, ຕາມແຮງເຖົ້າຂອງພໍ່ນີ້ແລ້ວ, ແຕ່ຄວາມ ສຸກສະບາຍຂອງທຸກ ໆ ຄົນຫາກຈະລົດຍ່ອຍຖອຍລົງເປັນແນ່. ຖ້າ ວ່າເຊື້ອຊາດບາດວົງຂອງເຮົາ ຫາກພັດແຍກແຕກອອກເປັນກ້ວາງ ຂວາງ. ລົ້ນບ້ານເຫຼືອເມືອງເດ, ແຕ່ຫາກສົມບັດເຂົ້າຂອງບໍ່ມີມາ ຕື້ມຈຳນວນເກົ່າເດ ? ພໍ່ວ່າ, ບັດນັ້ນແລ້ວ, ເຖິງເຮົາຈະບືກບືນຢື້ນ ປົ່ນຈົນເກັດຫຼາຍກໍຕາມທ້ອນ, ຄວາມຂມອດຂອດໄຮ້ກໍຈະນຳມາ ຖຸນອງປູ່ຢ່າງບໍ່ສົງໃສ. ດັ່ງນັ້ນແລ້ວ, ຄວາມເຫັນຂອງພໍ່ ລູກເອີຍ,

ຊັ້ງເບິ່ງໃຫ້ມັນຄັກສາ, ແລະໃຫ້ລູກພີ່ເຄາະເອົາບິ່ງໝ້າຍຄືນບັ້ນໃຫ້ໄດ້ ລາບບິດຈຶ່ງຈະມີມາຕື່ມສ່ວນເກົ່າຂອງເຮົາແດ່ ແລະເມື່ອໜາພວກເຮົາຈຶ່ງຈະຄ່ອຍຢູ່ໃນຄວາມສຸກຂາຖາວອນໄດ້.

- ເອົາແຕ່ພໍ່ວ່າແລ້ວ (ລູກເຂີຍວ່າ), ຮ້າຍດີພີ່ຍອມຢ່າງໃດກໍ່ຊິລອງເບິ່ງ, ຄັນເຮົາຕ້ອງຕາເຂົາແລະເຂົາຖືກໃຈເຮົາແລ້ວ, ຫາກຊິຄ່ອຍເປັນໄປດອກວີ.

- ເອີ ! ຊັ້ນແລ້ວ, ໃຫ້ລູກໄປຫາເຂົາແລະເວົ້າລົມເຂົາເບິ່ງ

- ໃຫ້ໄປຫາບ້ານເຂົາ, ບ້ານຫາດຫຼວງພຸ້ນຫວະ ? ຊ້ຳແມ່ນອະດູໜ້າວຽກ, ຊິເອົາເວລາໃດໄປນໍ !

- ຖ້າຫວັງໝັ້ນຫວັງແກ່ນບໍ່າກັນ ກໍຕ້ອງເສັຽເວລາແດ່ຫັ້ນແລ້ວ. ຄັນເຈົ້າຫາກບໍ່ສິງສູ້ສິງໃສ, ບໍ່ໃສເຂົ້າໃສອອກ--- ເມື່ອລື້ງຮັກມັກແກວ່ນກັນແລ້ວຫາກຈະເປັນໄປດອກ, ນີ້ອື່ນໃຫ້ລູກວາງວຽກສາແຕ່ເວັນ, ກິນງາຍແລ້ວຈຶ່ງໄປ, ພໍ່ຕະວັນຕົກກໍຮອດດອກ. ດຽວນີ້ເດືອນກໍແຈ້ງ ທາງຫຽວກໍຍັງສະດວກ ແລະບໍ່ມີໄກເກີນສາມໂຍດ: ຢູ່ຂ້າງບ້ານພະຂາວຫັ້ນແຫຼະ, ເຮືອນເຂົາບໍ່ຢູ່ໄກຫາດປານໃດດອກ. ໃຫ້ລູກລັດໄປທາງຖິ່ນຕົມພື້, ໄປທາງບ້ານນາຄວາຍພື້ຈັ່ງຊິຮອດງ່າຍແດ່. ຂີ່ມ້າບັກສັງຂາວຫັ້ນໄປມັນຈຶ່ງອາດ.

- ໂອ໋, ອາກາດດີຈັ່ງຊີ້, ຍ່າງໄປກໍໄດ້ດອກ.

- ບ໋າ, ໄປຊອກລູກຫາເມັຽ, ຂີ່ມ້າຕົວງາມ ໆ ໄປມັນຈຶ່ງ

ດື ທ່າຍເດືອງໃໝ່ໜັ້ນໄປ, ດູເອົານົກຄໍ່ກັບໜໍ່ຫວາຍນີ້ໄປຕ້ອນຫົວ ພໍ່ສົມສີນຳແດ່, ບອກວ່າຂອງປາກພໍ່ເຖົ້າສຸທີສານ, ດັ່ງນັ້ນເພິ່ນກໍ ເຂົ້າໃຈໂລດດອກ. ແລ້ວລູກຈຶ່ງສົນທະນານຳເຂົາເຈົ້າເບິ່ງ. ມື້ອືນ ເປັນວັນສີນແລະເຈົ້າກໍຈະໄດ້ພັກວຽກ, ປາກຢູ່ຫຼີ້ນນຳເຂົາເຈົ້າອີກກໍ ໄດ້. ພາຍລຸນຈຶ່ງຄ່ອຍມາຄອບຄວາມຕໍ່ພໍ່ ເປັນແນວໃດກໍດີ.

- ສີທົນຕອບໄປໂດຍສງົບງຽບວ່າ: ຊຸນແລ້ວພໍ່ເອີຍ--- ແຕ່ ພາຍໃນຂອງລາວປານດູຄຶງໄຂ້.

- ສີທົນເປັນຜູ້ຄ່ອຍຢູ່ຄ່ອຍກິນແຕ່ໃດ ໆ ມາ ເໝືອນຊາວ ພໍ່ນາທັງຫຼາຍທີ່ດຸໜັ້ນ. ລາວເອົາເມັຽແຕ່ອາຍຸສິບແປດ ແຕ່ເວລາ ນັ້ນລາວກໍໄດ້ຮັກຫອມເອົາແຕ່ເມັຽຂອງດົນເປັນອາທິ ຜັດແຕ່ເປັນພໍ່ ໝ້າຍມາ. ເຖິງລາວເປັນຄົນຂຍັນໜັນມັງ ແລະມັກມ່ວນມັກຊື່ນກໍດີ ລາວກໍ ່ໄດ້ໄປແຊະແລະແຊກແລນນຳເສົ້າສາວຢ່າງໃດເລີຍ. ລາວ ຄືດວ່າ ການທ່ຽວສາວເປັນການເສັຽເວລາ ແລະປ່ອຍການທັງສອງ ກ້ຳສອງຝ່າຍ. ລາວດູສັດຈະຕໍ່ເມັຽຂອງ ລາວຜູ້ຕາຍຈາກນັ້ນສເນີ. ການທີ່ໃຫ້ລາວໄປຊອກເມັຽໃໝ່ນັ້ນ ເປັນການຂັດອົກຂັດໃຈລາວທີ່ ສຸດ, ແຕ່ລາວຫາກຂົມໃຈໄປຕາມຄວາມປະສົງຂອງພໍ່ເຖົ້າທີ່ນັ້ນ ! ດ້ວຍວ່າພໍ່ເຖົ້າກໍເປັນຜູ້ຄຸ້ມຄອງຄອບຄົວມາ ຫຼາຍຝ້າຫຼາຍປີແລ້ວ. ໂດຍໄດ້ນຳພາໃຫ້ຄອບຄົວນັ້ນຄົງຢູ່ໃນສຸຂເສີມເຕີມຄອງ. ດັ່ງນັ້ນ, ສີທົນຈຶ່ງໄດ້ເອົາໃຈໃສ່ໃນການສ້າງສາຫາປໂຍດສ່ວນຮວມ ອັນເປັນ

ການຮ່ວມສຸກທຸກສືບຕໍ່ກັນມາ. ປະການນຶ່ງ ພໍ່ເຖົ້າກໍ່ໄດ້ແນະນຳລາວມາຈົນລາວໄດ້ເປັນຄົນດີມີໄມ້ມື, ເຫດນີ້ສີທົນຈຶ່ງບໍ່ຄິດ ຂັດວາດພໍ່ເຖົ້າຂອງຕົນ ແລະເຖິງດັ່ງເຮັດໄປກໍເປັນການເນຣະຄຸນຕໍ່ຄວາມຊອບທັມແລະຄວາມຍຸຕິທັມ ອັນເປັນຄອງປະເສີດຂອງທຸກ ໆ ຄົນ.

- ສີທົນໄດ້ຮັບຄວາມໂສກເສົ້າແທບນ້ຳຕາໄຫຼ, ລາວຄິດວ່າ: ໃຫ້ໄປເອົາເມັຽໃໝ່ແໜງວ່າໃຫ້ລາວໜັກຢູ່ໃນຄວາມທຸກໂສກນຳເມັຽຜູ້ຕາຍນັ້ນເສັຽດີກວ່າ. ໜ້ອຍເທື່ອທີ່ສຸດທີ່ລາວບໍ່ໄປລັກໃຫ້ຫາເມັຽຢູ່ຜູ້ດຽວໃນແຈເຮືອນ ທັງຈົ່ມສົງສານຕົນເອງວ່າ ໂອຍນໍ ! ຫາໃດທຸກອົກທຸກໃຈທໍ່ເສັຽຂອງຮັກ ແລະໄດ້ຂອງຊັງບໍ່ມີແລ້ວ. ຫາຜູ້ສັດຈິງນີ້ຫາຍາກ, ແຕ່ຫາຜູ້ຄົດລ້ຽວນັ້ນຫາງ່າຍ, ຈັ່ງແມ່ນນໍ ! ຄວາມມັກຄວາມຮັກນີ້ສເມີດັ່ງປາຢໍາ, ແສນຈັກໄລລືມເສັຽຍິ່ງກະສັນແສນໂອ້ !. ລາວຄຶດວ່າ ຜູ້ທີ່ຈະຮ່ວມສຸກທຸກກັບໃນວັນໜ້ານີ້ ຊ້ຳບໍ່ເຄີຍໄດ້ເຫັນອົກເຫັນໃຈກັນຈັກເທື່ອ. ເຖິງລາວຮັບວ່າຈະໄປກໍ່ຍ້ອນພໍ່ເຖົ້າລາວດີນຳທີ່ສຸດ. ດັ່ງນັ້ນການວິວາຫະມຸງຄຸນໃນເວລາຈະມາຈິ່ງເປັນສີລ່ອຍລ້າແລະສົງໃສແກ່ສີທົນ. ລາວລຸກໄປເປັນຊືງລືງດັ່ງຄົນສຸດຄວາມຄຶດແລະເສັຽຂວັນ. ບໍ່ສາມາດຈະຄິດຫາຄວາມແກ້ໄຂເອົາຕົນລອດ. ບັດນີ້ຄວາມເຈັບແຄ້ນກໍທັບຢູ່ໃນທ້ອງໃຫ້ ລາວມຶນທຶນດັ່ງເຖົ້າໜັກດີ ແລະບໍ່ຫວັງເລີຍວ່າຈະຕໍ່ສູ້ກັບຄວາມກັນດານອັນມາປະຈົນໃນຄາວນັ້ນ.

- ເມືອນັ້ນ ພໍ່ເຖົ້າສຸທິສານກໍເຂົ້າໄປໃນເຮືອນ. ເປັນຍາມແລງຄ້ອຍຄ່ຳ ສີທິນກໍຢູ່ໃນພາວະອັນພຸ່ມພູ່. ລາວຄ່ອຍຫ່ຽວໄປອັດປ່ອງຮົ້ວທີ່ຄວາຍໝັ້ນຂອກເຮືອນ ໂດຍຍົກແໜງໜານຂຶ້ນທີບທັງໝູບກົກໄວ້ດ້ວຍກ້ອນຂີ້ໄດ. ເມືອນັ້ນ ສຽງກິດປຶດກໍສິ້ງແລງຈາກດອນໄມ້ອັນຂິວນິວທີ່ພຸ້ນ ! ມາບັນດານໃຫ້ລາວໂອ້ອ່າວຄະນຶງຫຼັງ ແລ້ວຄ່ອຍກັບເຂົ້າໃນເຮືອນ ເປັນຊຶ່ງດິນຫາກໍ່ລຸກປ່ວຍ.

24/VII
ຫ້າມຈຳໜ່າຍ

# ໓. ແມ່ປ້າຈຳປາ

- ພໍ່ເຖົ້າສຸທິສານ. ເມື່ອກັບມາເຮືອນ ໄດ້ພົບຍິງຄົນນຶ່ງທີ່ມາຂໍໄຟ ກຳລັງລົມກັບປູ່ກັບແມ່ເຈົ້າເຮືອນ ຍິງຄົນນັ້ນແມ່ນແມ່ປ້າຈຳປາ ລາວຢູ່ຕູບນ້ອຍພອຍຈົນຫຼັງນຶ່ງ ທີ່ໄກເລົ້າເຂົ້າຂອງເຖົ້າປະນານຊິ້ວລູກໜ້າ ແມ່ປ້າຈຳປາເປັນຄົນທຸກຈົນ ແຕ່ເປັນຍິງມັທຍັດແລະສານາດ ເຖິງສຖານທີ່ຢູ່ຂອງລາວຫາກແມ່ນຕູບຕອງກໍດີ ແຕ່ສະອາດແລະຮຽບຮ້ອຍ ເຄື່ອງນຸ່ງຂອງຖືລາວ ຊຶ່ງເປັນເຄື່ອງຫຍາບແລະຕາບຈູນໂດຍພາກພຽນ ສະແດງໃຫ້ເຫັນວ່າ ລາວເປັນຄົນຮັກຊາດອາຈນາໃນຄາວຍາກແຄນ.

- ເຈົ້າດຸດມາເອົາໄຟຍາມຄ່ຳເນາະແມ່ປ້າ (ພໍ່ເຖົ້າສຸທິສານເວົ້າ) ນອກນັ້ນ ເຈົ້າຍັງຕ້ອງການຫຍັງອີກແດ່ບໍ່ ?

- ຈຸບັນນີ້ບໍ່ທັນຕ້ອງການຫຍັງເທື່ອດອກ (ແມ່ປ້າຈຳປາຕອບ) ຂອບໃຈແລ້ວພໍ່ເຖົ້າເອີຍ ບໍ່ອີຫຼີ ກໍບໍ່ຟ້າວປາກກຸກກວນເຈົ້າເທື່ອ ບ່ອນຮັກຢ່າຟ້າວໃຫ້ເຫັນໃຈແມ່ນບໍ່ພໍ່ເຖົ້າ ?

- ເຈົ້າເວົ້າດັ່ງນີ້ກໍສຸດແລ້ວ ແຕ່ເຖິງຢ່າງໃດ ທາງນີ້ກໍຄອຍຊິດຊ່ວຍເຈົ້າຢູ່ດອກ.

- ຈັ່ງວ່ານີ້ແລ້ວ ພວມລົມກັບກັບແມ່ເຖົ້າຢູ່ນີ້ແລ້ວ ຂ້ອຍຄືດວ່າສີທົນ.ວິກລົງເອົາເມັ່ງແລ້ວ ວ່າຊັ້ນ.

- ໂອ໋ ຄັນແມ່ນຜູ້ຈັ່ງເຈົ້າກໍຫາທໍ່ເວົ້າຫັ້ນຊິເປັນຫຍັງເນາະ ຂ້ອຍຊິເວົ້າໃຫ້ພວກເຈົ້າຟັງສາ ສ່ວນສີທົນນັ້ນຕົກລົງວ່າຊິໄປຊອກເອົາເມັຍແລ້ວ ມື້ອື່ນລາວຊິໄປບ້ານທາດຫຼວງ ວ່າຊັ້ນ.

- ໂອຍ ອົດສາທຸທ້ອນ ! (ແມ່ເຖົ້າສຸທິສານວອນວ່າ) ຂໍໃຫ້ລາວໄດ້ຈັ່ງມັກຈັ່ງປາຖນາທ້ອນ ຂໍໃຫ້ລາວໄດ້ເມັຍຜູ້ຮູ້ຜູ້ດີ ສົມກາວດຸລາວໝັ້ນຫັ້ນທ້ອນ !

- ໂອ໋ ລາວຊິໄປຫາເອົາເມັຍວ່າດີ (ແມ່ປ້າຈຳປາແພງຄວາມ) ຊັ້ນກໍຂໍເພິ່ງຫຼາຍ ໆ ແດ່ທ້ອນ--- ວ່າງບຶ່ງນີ້ເຈົ້າກໍຍັງໄດ້ຖາມຂ້ອຍແລ້ວວ່າ ບໍ່ຕ້ອງການຫຍັງແດ່ບໍ່ວ່າຊັ້ນ ຂ້ອຍຄຸດຄຶດບໍ່ຊອດ ບັດນີ້ຂ້ອຍຂໍໄດ້ບ້ອນສ້ອນການແດ່ທ້ອນ.

- ຫາທໍ່ເວົ້າ (ພໍ່ເຖົ້າສຸທິສານເວົ້າ) ຫາທໍ່ເວົ້າຕ້ອງການຫຍັງກໍດີ. ຂ້ອຍປາກໃຫ້ເຈົ້າອອກປາກຢູ່ແຕ່ດົນພຸ້ນ.

- ຊັ້ນຂ້ອຍກໍຂໍເພິ່ງສີທົນເອົາອີຫຼ້າໃນເຮືອນຫັ້ນໄປນຳແດ່.

- ໄປໃສ ? ໄປທາດຫຼວງຫວະ ? (ພໍ່ເຖົ້າສຸທິສານເວົ້າ)

- ບໍ່. ບໍ່ໄປຮອດພຸ້ນດອກ. ໄປບ້ານພະຂາວ. ມັນຊິໄປຢູ່ພຸ້ນ. ປີໜ້າພຸ້ນແລ້ວຈັ່ງຊິໄດ້ຕ່າວ.

- ຮ້າຍ ! ເຈົ້າຊິປະໃຫ້ລູກໜີຈາກຊັ້ນຫວະ ? ດຽວວ່າມີແຕ່ລູກແລະແມ່ທໍ່ນັ້ນ.

- ກໍວາຍແລ້ວ, ຊິໄດ້ໃຫ້ມັນໄປເອົາບ່າວນານຳເພິ່ນ ຫຼອນ

ໄດ້ກິນໄດ້ແຖມກັບເລັກນ້ອຍ. ນີ້ກໍເປັນການຄັບແຄ້ນແຫນ້ນອົກຫັງ ລູກແລະແມ່ບໍ່ແພ້ແລ້ວ, ແຕ່ການຈຳເປັນ. ໂອຍ ! ໜ້າອີດູລູກຂ້ອຍ ! ວ່າຊິໃຫ້ມັນໄປແຕ່ຫົວປີພຸ້ນແລ້ວ ແຕ່ເປັນຄັບ ໆ ຄາ ໆ ປູ່ບໍ່ແລ້ວ. ດຽວນີ້ກໍເຫັນວ່າຫຼ້າສວາຍແລ້ວ, ແຕ່ເຮັດຈັ່ງໃດ. ຊິໄດ້ໃຫ້ມັນໄປສາກ່ອນ, ຊິໄປຢູ່ບ້ານພະຂາວວ່າຊັ້ນ. ນີ້ນັ້ນ ເຈົ້ານາເພີນທາງວຽງກາຍມາ, ເມື່ອເຫັນສຸວັນນີຂ້ອຍພວມລ້ຽງຄວາຍຢູ່ ເພີນດຸດວ່າ "ນີ້ອີຫຼ້າ ເຈົ້າຄືຊິບໍ່ມີວຽກປານໃດເນາະ, ຜູ້ຈັ່ງເຈົ້ານີ້ລ້ຽງຄວາຍແຕ່ຕົວດຽວມັນບໍ່ສົມນາ" ວ່າຊັ້ນ "ປາກໄປເອົາບ່າວນານຳພວກເຮົາບໍ່ ແລະເຮົາຈະມີຄວາຍໝູ່ຮ້ອຍໃຫ້ເຈົ້າລ້ຽງ ດຽວນີ້ກໍຫຼ້າແລ້ວ ແຕ່ນີ້ໄປຫາເອົາຂຶ້ນເລົ້າເຮົາຊິໃຫ້ສາມຮ້ອຍ" ວ່າຊັ້ນ. ລູກຂ້ອຍດູດບໍ່ຊ່າງຊິຕອບ ເມື່ອກັບມາເຮືອນເຫັນແມ່ເປັນຫ່ວງ ເປັນເຫງົາມັນກໍຢູ່ບໍ່ໄດ້ກິນບໍ່ເປັນ. ອະດູໜາວຊ້ຳຊິມາຮອດແລ້ວ ແລະສຸວັນນີ້ຂ້ອຍກໍໃຫຍ່ແດ່ແລ້ວ ຈຳເປັນຊິໄດ້ຊອກວຽກຫາການໃຫ້ມັນເຮັດຄືຊາວບ້ານເພີນທັງຫຼາຍ ຫຼອນໄດ້ສິນພີນແພວາມາຊິດຊ່ວຍແມ່ຜູ້ຊະຣາແລ້ວນີ້ເດ ຊັ້ນດອກ.

- ຄັນເງິນສາມຮ້ອຍ ຫາກພໍນັບເຫົາທຸກພວກເຈົ້າແມ່ລູກໄດ້ຕລອດເວລານັ້ນ ຂ້ອຍເອງກໍຄິງຫາໃຫ້ໄດ້ຢູ່ອີຫຼ້າ ! ເຖິງວ່າເງິນທອງເປັນຂອງຫາຍາກກໍດີ. ແຕ່ຕາມຈິງແລະຕາມຄວາມຊອບທັມ ກໍຕ້ອງບຶກບືນໄປເສັຽກ່ອນ ເພາະວ່າເຖິງປີນີ້ເຈົ້າ

ຫາກພົ້ນທຸກຍ້ອນເງິນຮາຍນີ້ ພາຍລຸນມາຄວາມຍາກຈົນກໍຈະມາຖຸນອງອີກຢູ່ ຖ້າລູກສາວເຈົ້າຫາກບໍ່ຮູ້ຈັກທຸກໄວ້ສາແຕ່ດຽວນີ້ ແລະນານໄປຄວາມຜູກພັນແລະຮັກແພງກັນຢ້ານບິງທະວີຂຶ້ນ. ໃຫ້ເອົາໃຈວ່າຄົນເຮົາເຖິງຮັກຫຼືຊັງກັນພຽງໃດ ກໍຕ້ອງໄດ້ພາກກັນເວລານຶ່ງ. ດຽວນີ້ສຸວັນນີເຈົ້າກໍໃຫຍ່ແດ່ແລ້ວ ຄັນຈະປະໃຫ້ຢູ່ແກ່ເຮືອນກໍຈະນານຄຸ້ນເຄີຍໃນທາງເຮັດທາງສ້າງ ແລະຄວາມປູ່ລ້າກໍຈະພາໃຫ້ລູກເຈົ້າເສັງຄົນເປົ່າ ໆ.

- ໂອ່, ທາງບ້າວຽກບ້າການນີ້ ບໍ່ມີທາງດີມັນປານໃດດອກ ຊິໃຫ້ມັນເຮັດມືຂັດຫຼາຍຢູ່ ດີບິງສາວບາງຄົນນັ້ນບໍ່ມີຈັກເທື່ອ. ມັນກໍເປັນບິງຜູ້ນຶ່ງສາມາດປານລູກເຈົ້າຮັ່ງມັ່ງມີພຸ້ນແລ້ວ. ຊງຊາໃຫງ່ນຄຳພຸ້ນແລ້ວລູກຂ້ອຍຜູ້ນີ້. ຂ້ອຍກໍຄຶດຢູ່ວ່າຊິໃຫ້ມັນມາເຂົ້າບ່າວນານຳເຈົ້າ. ດີກວ່າຊິໃຫ້ມັນໄປໃຊ້ສອຍຜູ້ອື່ນຜູ້ໄກ ທີ່ບໍ່ຮູ້ໜ້າລື້ງຕາກັນຈັກເທື່ອນັ້ນ, ຄັນເຈົ້າຊິເອົາ, ປີໜ້າ າຊິໃຫ້ມັນມາ ດຽວນີ້ ກໍຫຼ້າແລ້ວແລະຄົນເຈົ້າກໍພໍແລ້ວ. ຕິກອະດູໜ້າມາຈຶ່ງລອງສົນທະນາກັນອີກໃໝ່.

- ເອີ, ເຊັ່ນກໍດີແລ້ວ, ແຕ່ດຽວນີ້ໃຫ້ມັນໄປຮຽນຮັບໃຊ້ຜູ້ອື່ນສາກ່ອນ.

- ຊັ້ນແລ້ວ, ພົມຊາດຫາກຄາວມາແຕ່ພໍພຽງນີ້. ນີ້ເຊົ້ານີ້, ເຈົ້ານາເອົາໄດ້ໃຊ້ຄົນມາຊ້ຳຄວາມອີກ, ພວກຂ້ອຍແມ່ລູກກໍໄດ້

ຮັບຄວາມເຂົາເຈົ້າວ່າຈິໄປ ແຕ່ອີຫຼ້າຂ້ອຍບໍ່ຮູ້ຈັກທາງ ຂ້ອຍກໍບໍ່ທານໃຫ້ມັນໄປເດີກໄປໄກຜູ້ນຶ່ງຜູ້ດຽວ ຄັນລູກເຂີຍເຈົ້າຈິໄປຫາດຫຼວງນີ້ອີນນັ້ນຂໍເພີ່ງເອົາມັນໄປນຳແດ່ ຕາມເຂົາເຈົ້າວ່າບ້ານພະຂາວກັບບ້ານຫາດຫຼວງກໍບໍ່ໄກກັນປານໃດວ່າຊັ້ນ ຂ້ອຍກໍບໍ່ເຄີຍໄດ້ໄປທາງນີ້ຈັກເທື່ອ.

- ປູ່ຊ້າຍສວຍກັບຫັ້ນແລ້ວ, ສີທົນຫາກຈິພາໄປດອກ. ຈິໃຫ້ລາວໄປສິ່ງຮອດບ່ອນພຸ້ນຫວະ ? ຊ້ອນມ້າລາວຫັ້ນໄປ ມັນຈັ່ງຈິບໍ່ເປືອງຂາແດ່. ຫັ້ນເດ ! ລູກເຂີຍຂ້ອຍພວມກັບມາແຕ່ວຽກ--- ນີ້ນະ, ສີທົນ, ລູກສາວແມ່ປ້າຈຳປາ ນາງສຸວັນນີຈິໄປເຂົ້າບ່າວນານຳເພີ່ນຢູ່ບ້ານພະຂາວວ່າຊັ້ນ ເອົາລາວໄປພ້ອມແດ່ພີ້.

- ສີທົນຕອບໄປເປັນເຊີງຄຶດວ່າ: ເອີຊັ້ນກໍດີແລ້ວ ລູກຄອຍຈິດຊ່ວຍເພື່ອນຊາວດ້ວຍກັນສເນີ.

- ທັມມະດາໃຜໜໍຈະຝາກລູກສາວອາຍຸສິບສາມສິບສີ່ໄປນຳຊາຍສາມສິບປາຍ. ແຕ່ຮີດບ້ານເຄີຍຖືກັນວ່າ: ຄົນອາຍຸທໍ່ສີທົນນີ້ເປັນຄົນແກ່ແລ້ວ ເປັນທີ່ນັບຖືຂອງຄົນໜຸ່ມນ້ອຍ ຄືກັນກັບລຸງຫຼືອາວ ແລະຍິງສາວທໍ່ນາງສຸວັນນີ ນີ້ ຖືກັນວ່າຍັງເປັນເດັກນ້ອຍຢູ່ແລະເປັນທີ່ນັບຖືຂອງຜູ້ເຖົ້າຜູ້ແກ່ວ່າເປັນລູກເປັນຫຼານ. ແຕ່ສີທົນເຖິງອາຍຸພຽງນັ້ນກໍດີ ກໍຍັງເປັນຜູ້ແຂງແຮງຢູ່ກວ່າພວກພໍ່ນາຊາວບ້ານຈັ້ງດຽວກັນ ຊຶ່ງຖືກຊຸດໂຊມດ້ວຍວຽກໄຮ່ການນາທີ່ມີອາຍຸອ່ອນກວ່າລາວໃນລະວ່າງສິບປີ ແລະທີ່ຈິງສີສັນວັນນະຂອງສີທົນຍັງປຽບບ່າວສິບແປດໄດ້ຢູ່.

- ປະການນຶ່ງຣາສດອນບໍຣິເວນນັ້ນ ນັບໜ້າຖືຕາພໍ່ເຖົ້າສຸທິສານເພນທຸກຄົນ ແລະເຊື່ອໃສລາວຢ່າງຈິງໃຈ ດ້ວຍວ່າລາວເປັນຜູ້ໄວ້ເນື້ອເຊື່ອໃຈແກ່ຄົນທັງຫຼາຍ ເພາະລາວເປັນຜູ້ເຖົ້າທີ່ຊອບທັມ ແລະປະພຶດຕົວໄປທາງຍຸຕິທັມສເມີ, ສີທົນເປັນພໍ່ໝ້າຍໄປຊອກເມັຽ ແລະສຸວັນນີເປັນເດັກສາວຊຶ່ງຢູ່ໃນຄວາມທຸກຈົນ ແລະຜູ້ໃດກໍເອົາໃຈໃສ່ໜ້າທີ່ໃນການນັ້ນ. ຖ້າສີທົນຫາກຫຼົງຄິດບຽດບຽນເອົາໃນໂອກາດເຊັ່ນນີ້ ຊາວບ້ານຄົງຈະຫ້ຽງຫັ່ນແລະນິນທາເອົາເປັນແນ່ ແລະຊາຍຜູ້ນີ້ກໍຈະເສັຽໜ້າຕາແລະຊື່ສຽງບ້ອນທັງຄອບຄົວການທີ່ອະນຸຍາດສຸວັນນີຊ້ອນມ້າໄປນຳນັ້ນ ພໍ່ເຖົ້າສຸທິສານກໍບໍ່ມີຄວາມລະແວງໃຈຢ່າງໃດ ເພາະລາວເຄີຍເຫັນອົກເຫັນໃຈສີທົນມາແລ້ວ. ສ່ວນແມ່ປ້າຈຳປາກໍເຊັ່ນດຽວກັນ ຖ້າລາວຫຼົງອອກປາກສັ່ງວ່າໃຫ້ສີທົນດູແລແລະປ້ອງກັນລູກສາວຂອງຕົນດັ່ງນັ້ນ ກໍປ້ານເປັນການດູໝິ່ນສີທົນອີກ. ດັ່ງນັ້ນໃນມັນຈຶ່ງເພີກເສີຍແລະໄວ້ວາດເຊີງ, ໄປເປັນທັມມະດາ. ສຸວັນນີສດຶກຂຶ້ນມ້າທັງນ້ຳຕາໄຫຼ ສີທົນກໍເມົາຄຶດນຳແຕ່ຄວາມໂສກແຄ້ນຂອງລົນ ທັງຄຶດເອັນດູແມ່ແລະລູກທີ່ຈະພັດພາກຈາກກັນ--; ແລ້ວກໍເຈັຽອະຈາກໄປໂດຍຄວາມສງົບເໝືອນຜູ້ມີຂັນຕີກ່ອນຕຣາຍ. ພີ່ນ້ອງຊາວບ້ານທີ່ໃກ້ຄຽງ ເວລານັ້ນກໍພາກັນຮ້ອງສັ່ງເປັນແຊວ ໆ ແຕ່ສຸວັນນີບໍ່ຫານຕອບ ເພາະກຳລັງກືນຄວາມໂສກແຄ້ນລົງທ້ອງ.

# ໔. ຄຳຈັບເດັກສລອກກອກ

- ມ້າຕົວນັ້ນແກ່ແລ້ວ ແຕ່ຍັງຂຍັນຫັນມັ່ງຢູ່. ມັນຄ້ຳພາຍິງຊາຍທັງສອງໄດ້ຢ່າງສະບາຍ. ເມື່ອມັນໄດ້ຫຼອບຫູແລະຮ່ອນບ້ວງໃຫ່ງແລ້ວ ມັນກໍກ້າວໄປເປັນຫຼວາດ ໆ ສົມຊື່ວ່າບັກສັງຂານ ເມື່ອລົງບລ້ອງສນາມຫຍ້າທີ່ຄອດງໍໄປຢູ່ນັ້ນ ສັງຂານກໍຫຼຽວເຫັນແມ່ມັນຕົວຊື່ວ່າສັງຄີ ແລ້ວກໍທົ່ງສັ່ງ. ສັງຄີຫຍັບເຂົ້າໃກ້ເຂດຮົ້ວທັງທົບຕີນໃຫ້ດັງຂຶ້ນ ແລ້ວກໍແລ່ນເລາະຮົ້ວນັ້ນໄປຕາມລູກຊາຍ. ຄັນເຫັນລູກຣີບແລ່ນໜີປະໄກແລ້ວ ສັງຄີກໍທົ່ງຕອບແລ້ວປຸດປີ້ນຢູ່ເປັນຊື່ງລື່ງ ທັງແຫງນດັງຂຶ້ນຟ້າສືບເອົາກິ່ນຕາມສາຍລົມ ທັງຄາບຄຳຫຍ້າຢູ່ບໍ່ຫານກິນ.

- ຄາວນັ້ນ ສີທົນກໍອອກປາກເພື່ອອີ່ນອອຍເພື່ອນທາງຂອງຕົນໃຫ້ສວ່າງເຫງົາວ່າ, ສັດກໍຍັງຮູ້ບິນຖົມທຸກວທນານຳລູກເນາະ! ຂອງໝູ່ນີ້ພາໃຫ້ອາວສະເດືອກ ເຖິງການທີ່ອາວບໍ່ທັນໄດ້ສັ່ງລາສຸວັນກ່ອນຈາກໄປ. ບັກຊົວນັ້ນ ຈັກມັນທັນຜ່າຍໄປທົບໃດ ແລງວານນີ້ ກ່ອນຊິເຂົ້າບ່ອນນອນມັນກໍແອ່ວໄປນຳເປັນຊົວໂມງ ນີ້ເຊົ້ານີ້ຊ້ຳໜ່ຽວວອນອີກ ໂທ! ຈັ່ງແມ່ນມັນທະເລາະຖຸແລງເປັນໃດບັກນີ້ ເມື່ອເຫັນວ່າຊິບໍ່ໄດ້ໄປນຳແລ້ວ ອັນຍານ້ອຍເພີ່ນກໍຄຽດຕວາ ແລ້ວກໍເລີຍລັກໜີໄປທາງທົ່ງພຸ້ນ ຈົນບໍ່ໃຫ້ເຫັນໜ້າໜິດນີ້ເອົາສະຊື່ ໆ.

- ສຸວັນນີ: ເວົ້າຂຶ້ນທັງເຊັດນ້ຳຕາ ຫຼານ--- ຫຼານໄດ້ເຫັນ ເຫັນ---ມັນ--- ມັນແລ່ນຫຼົບຢູ່ຕາມພຸ່ມໄມ້ກັບລູກຕາສຸລາຫຼານແຫນ ແຫນວ່າມັນຄົງໜີຈາກເຮືອນແຕ່ດົນແລ້ວ ເພາະວ່າຫຼານໄດ້ເຫັນ ມັນຊອກປີດກິນໝາກປີງກີວຢູ່ ຫຼານຈຶ່ງໄດ້ປັ້ນເຂົ້າປ່າຍໄຂ່ໃຫ້ມັນ ຮອງທ້ອງ ມັນໄດ້ຕອບຫຼານວ່າ "ຂອບໃຈຫຼາຍ ໆ ເນີ ນ້າສາວ ສຸວັນນີເອີຍ ຄັນເຈົ້າໄປເຮືອນຂ້ອຍ ໆ ຊິເອົາເຂົ້າຕົ້ມປ່າຍກ້ວຍຕ້ອນ ເຈົ້າ" ອາວສີຫົນເອີຍ ຈັ່ງແມ່ນເຈົ້າໄດ້ລູກຜູ້ດີ ມີລູກຜູ້ປະກອບ !.

- ສີຫົນ: ເອີ ບາງທີກໍດີດອກ ແຕ່ບາດເມື່ອເຮັດບໍ່ຖືກໃຈ ມັນ ໆ ກໍຈະເປັນຜາຍຕ່າງໄປໂລດ ຄັນແມ່ເຖົ້າບໍ່ເປັນຫ່ວງນຳກໍຄືຊິ ເອົາໄປມັນນຳສາດອກ. ເປັນໜ້າອິດູແຕ່ມັນໃຫ້ຈົ່ມໃຫ້ວ່າຫັ້ນແລ້ວ

- ສຸວັນນີ: ຮວ້າຍ ! ເປັນຫຍັງຈຶ່ງບໍ່ເອົາມັນມານຳຊັ້ນ ອາວ ? ຫຼານບໍ່ມີວ່າຊິໃຫ້ມັນກຸກມັນກວນຍ້ອນດອກ ເດັກນ້ອຍ ຄັນ ແຕ່ງຖືກໃຈມັນແລ້ວມັນກໍດີດອກ.

- ສີຫົນ: ບໍ່ເປັນຕາເອົາມັນໄປນຳດອກ ໄປຈັ່ງຊີ້ ພໍ່ເຖົ້າ ກໍບໍ່ພ້ອມ ອາວນີ້ ສ່ວນຫຼາຍດຸດບໍ່ຄືດຄືເພິ່ນ ປາກລອງໃຈເຂົາເບິ່ງ ເຂົາຊິເຮັດນຳພໍພຽງໃດ ເດັກໜ້າຮັກໜ້າດູຈັ່ງຊີ້ ເຂົາຊິບິນດີນຳບໍ່ ແລ້ວກໍຈັກຊິເວົ້າໄປເຮັດຫຍັງເນາະສຸວັນນີ ເວົ້າໄດ້ເຈົ້າກໍບໍ່ມີຮູ້ສົນຮູ້ ຫາງນຳ.

- ສຸວັນນີ: ເປັນຫຍັງຊິບໍ່ຮູ້ ຫຼານຮູ້ຈັກແລ້ວ ໆ ວ່າອາວຊິ

ໄປເອົາເມັຽນະ ແມ່ຫຼານກໍຍັງໄດ້ເວົ້າໃຫ້ຟັງ ແລ້ວເພິ່ນກໍໄດ້ເຕືອນຫຼານວ່າ ບໍ່ໃຫ້ເວົ້າໄປເວົ້າມາທາງໃດ ບໍ່ວ່າທາງພຸ້ນທາງພີ້ ເຣື່ອງນີ້ອາວຢ່າສົງໄສເທາະ ຫຼານບໍ່ມີໃຫ້ຜິດໄປທາງໃດ.

- ສີຫົນ: ເອີ ຊັ້ນແລ້ວ ອັດເອື້ອນໄວ້ສາ ເພາະຍັງບໍ່ທັນຄັກທັນແນ່ ບາງທີອາວບໍ່ຖືກຕາຍິງຄົນນັ້ນກໍມີ.

- ສຸວັນນີ: ອາວສັງມາຊ່າງເວົ້າແທ້ ເປັນຫຍັງຊິບໍ່ຖືກ ຄົນຄືອາວນີ້.

- ສີຫົນ: ຈັກແລ້ວ ໃຜຊິຫຼີງເຫັນ ຂອງວ່າອາວມີລູກທັງສາມຄົນ ບາດເຂົາກໍວ່າລູກອາວເຫຼືອເຫື່ອເຫຼືອແຮງເຂົາຫັ້ນເດ ຊ້ຳເຂົາກໍບໍ່ເປັນແນ່ຄືງ.

- ສຸວັນນີ: ແມ່ນຢູ່ ແຕ່ລູກອາວບໍ່ຄືເດັກນ້ອຍທັງຫຼາຍ.

- ສີຫົນ: ອີຫຼີ ຫວະ ?

- ສຸວັນນີ: ອີຫຼີ ຫັ້ນແລ້ວ ເພາະລູກອາວບໍ່ເປັນຜູ້ຂີ້ດຽດຈັ່ງໃຣ ຮູ້ຈັກຖ້ອຍຮູ້ຈັກຄວາມ ທັງເປັນໜ້າຮັກໜ້າອີດູອີກຊ້ຳ.

- ສີຫົນ: ມີແຕ່ບັກຄຳຕັນຫັ້ນແລ້ວ ເກັ່ງກວ່າໝູ່ປູ່ຫັ້ນ.

- ສຸວັນນີ: ຂອງວ່າມັນຍັງເດັກນ້ອຍ ມັນກໍດີ້ຫັ້ນດີ ແຕ່ມັນຫາກດີ້ຮູ້ຈັກຄວາມ.

- ສີຫົນ: ແມ່ນ ມັນຮູ້ຈັກຄວາມຢູ່ແຕ່ບັກນີ້ ທາງກ້າຫານອີກຊ້ຳ ງົວປ່າກະທິງເມີຍມັນກໍບໍ່ຢ້ານແລ້ວ ຄັນປະຕານໃຈມັນ ໂທ ! ດຸດປືນຂຶ້ນຫຼັງມ້ານຳອ້າຍມັນພຸ້ນຕວ່າ.

- ສຸວັນນີ: ຄັນວ່າຫຼານແມ່ນອາວຫວະ ຫຼານຊິເອົາຜູ້ກົກຫັ້ນມານຳ ແນວໃດມັນກໍເຮັດໃຫ້ເພິ່ນຮັກອາວໂລດ ເພາະມັນເປັນເດັກນ້ອຍດີ.

- ສີຫົນ: ຈັ່ງວ່າ ຄັນຄືກຍິງຜູ້ຮັກເດັກນ້ອຍບັງແຄວນແດ່.

- ສຸວັນນີ: ບັງມີບໍ່ ຜູ້ຍິງບໍ່ຮັກເດັກນ້ອຍນັ້ນ.

- ສີຫົນ: ອາວຄິດວ່າ ແນວໃດກໍມີ ແຕ່ຄືຊິບໍ່ຫຼາຍປານໃດ ອັນນີ້ແລ້ວມັນຊິພາໃຫ້ອາວອຸກໃຈຫຼາຍ.

- ສຸວັນນີ: ອາວບັງບໍ່ໄດ້ພົບເອົາເຈົ້າຈັກເທື່ອຫວະຊັ້ນ ?

- ສີຫົນ: ຫຼານກໍບັງບໍ່ຮູ້ຫັ້ນເດ ຊິໃຫ້ອາວເຫັນເຂົາຈັ່ງໃດ? ຄັນເຫັນກໍປ່ານບໍ່ຮູ້ຈັກອາວນີ້ ອາວກໍບໍ່ເຄີຍໄດ້ປມາດໃຜຈັກເທື່ອດອກ ຄັນເຂົາເວົ້າດີນຳກໍເຊື່ອວ່າດີ ແຕ່ອາວໄດ້ຖືກເທື່ອນຶ່ງແລ້ວເປັນຈັ່ງຊີ້ກິນແໜງເທົ່າທຸກວັນນີ້ "ແນວປາກຫວານຈັ່ງອ້ອຍ ໃຈລ້ຽວໝາກກະດອນນັ້ນ" ອ້າຍດຸດບໍ່ປາກເວົ້າ.

- ສຸວັນນີ: ເພິ່ນວ່າເຂົາເປັນຍິງດີ ແລະສລາດສລຽວແທ້ວ່າຊັ້ນເດ.

- ສີຫົນ: ໃຜ ?--- ພໍ່ເຖົ້າຫວະ ?

- ສຸວັນນີ: ແມ່ນແຫຼະ ພໍ່ເຖົ້າອາວວ່າ.

- ສີຫົນ: ຄັນເປັນຈັ່ງຊັ້ນກໍດີຫັ້ນແລ້ວ ແຕ່ວ່າເພິ່ນເອງກໍບໍ່ຮູ້ຈັກຄັກວ່າ ເຂົາເປັນຈັ່ງໃດດອກ.

24/VII

- ສຸວັນນີ: ຊັ້ນກາ--- ເມືອອາວໄປພົບເຂົາ ອາວຈິ່ງຄ່ອຍສົ້ງຊອມເບິງຊັ້ນກວາ ວ່າແຕ່ຢ່າ ເກີ ເຮີນນັ້ນເທາະ.

- ສີທົນ: ເນາະ ! ສຸວັນນີ ອາວກໍປາກໄດ້ຫຼານໄປນຳຣອດບ້ານເຂົາພຸ້ນເດ ບາດແລ້ວຈິ່ງຄ່ອຍລັດມາຫານາໄຣ່ດຽວ ຫຼານຜູ້ຊ່າງສົ້ງຊອມວາສນາອາຈີນຂອງຄົນ ພາດທ່າອາວພາດພັ້ງກໍບັງຊິມີຜູ້ຄວັກແດ່.

- ສຸວັນນີ: ອຸ່ຍບໍ່ແລ້ວ ! ອາວສີທົນ ບໍ່ເຣັດເດີກຈັ້ງຊັ້ນນະ ຫຼານກໍຢ້ານຫຼົງຖ້ອຍຫຼົງຄວາມຄືກັນ ຄັນວ່າເວົ້າບໍ່ຫວນບໍ່ຕວງ ປະກາລະນຸງຄຸນຂອງອາວຊ້ຳຊີຮ້າງສາແລ້ວ ພໍ່ເຖົ້າແມ່ເຖົ້າອາວພັດຊີຄືວ່າເປັນນຳຫຼານ ດຽວນີ້ຫຼານເປັນຫ່ວງນຳແມ່ພໍ່ແຮງແລ້ວ ບັງຊີຫາຄວາມອຸກຖວາມອັ້ງມາໃສ່ຫົວໃຈ ໃຫ້ແມ່ຫຼານໄດ້ເສົ້າໝອງນຳອີກ ນີ້ຊ້ຳຮ້າຍແລ້ວ.

- ໃນເວລາລົມກັນໄປມາຢູ່ນັ້ນ ປັກສັງຂານກໍບິນສະເດີດຫັງແຮງ ຫັງຫູກໍຊີ້ຊັນໄປເບື້ອງໜ້າ ໆ ແລ້ວອ່ວາຍຄືນຫັງຄ່ອຍປ່ອງເຂົ້າໃກ້ ໆ ພຸ່ມຜັກກູດ ມັນເລີຍເຫັນງົງທີ່ໝາໃຫ້ມັນກິນ ສີທົນສ່ອງເຂົ້າໄປພາຍໃນທີ່ຫຼູບຮ່ອງກ້ອງພຶດໄມ້ອັນບັງຂຽວປົກຢູ່ ກໍປະກົດເຫັນຂອນໄມ້ ຄຶດວ່າແມ່ນລູກຄວາຍຄ່ອນ ຈິ່ງທ້ອງຂຶ້ນຫັງແຮງວ່າ: ສັດຫຼົງໜູໃດນີ້ ຕາຍແລ້ວຕີລັງມາບໍ່ກິງ ເຈົ້າຂອງເຂົາຊອກຫາປູແລ້ວປານນີ້--- ເບິງດູ.

- ສຸວັນນີຮ້ອງຂຶ້ນວ່າ  ບໍ່ແມ່ນສັດອັນນັ້ນະ  ເດັກນ້ອຍນະ ທ້າວຄຳຈັນເຈົ້າຫັ້ນດວ່າ.

- ສີທົນ:  ພ່ອງລົງມ້າ ພ່ອງຈົ່ມໄປວ່າ ທັມມະຊາດ  ເບິ່ງ ມັນນອນຫັ້ນດູບັກນີ້ນະ  ບໍ່ຮູ້ຈັກເຮືອນຈັກຊານ  ມານອນຢູ່ທາງຫ້ວຍ ໂກນຮ່ອງ  ບ່ອນງູງ້ຽວຂ້ຽວກະປອມຈັ່ງຊີ້ນໍ !  ສີທົນກໍຄ່ອຍໂຈ່ມເອົາ ລູກຊາຍຂຶ້ນ  ຄຳຈັນກໍມືນຕາແລະຫົວດໍ່ພໍ່  ທັງຄວ້າກອດຄໍທັງເວົ້າ ວ່າ  'ອີພໍ່ຂ້ອຍເອີຍ !  ເອົາລູກໄປນຳແດ່ເນີພໍ່.

- ແມ່ນແຫະເນາະ !  ໄປທາງໃດມຶງກໍລ່ຳໄລນຳແຕ່ແນວ ດຽວນີ້  ມຶງມາເຮັດຫຍັງຢູ່ນີ້  ບັກຊິວ ?

- ຄຳຈັນ:  ລູກຄອຍທາງຫາພໍ່  ຄອຍຕາມຄອຍຕຸດເລີຍ ເຊືອບໄປ.

- ສີທົນ:  ເອົາແຫຼະບາດນີ້  ບັກຫຼ້າ  ລູກໄດ້ເຫັນພໍ່ແລ້ວ ຮີບກັບຄືນເມືອເຮືອນສາໄວ ໆ  ຄັນລູກຢາກທັນແລງນຳເພິ່ນນະ.

- ຄຳຈັນ:  ເວົ້າໄປທັງສົດາເພິ່ງຈະໃຫ້ວ່າ  "ຊັ້ນພໍ່ຊິບໍ່ເອົາ ລູກໄປນຳຫວະ ?"

- ສີທົນບໍ່ທານບັງຄັບລູກ  ເລີຍເອົາອຳນາດພໍ່ເຖົ້າແມ່ເຖົ້າ ມາອ້າງວ່າ  "ລູກຍັງຮູ້ຈັກປູ່ຫັ້ນເດ ວ່າພໍ່ເຖົ້າແມ່ເຖົ້າບໍ່ໃຫ້ໄປນຳກໍດີ"

- ແຕ່ເດັກບໍ່ຟັງແລ້ວກໍຮ້ອງໄຫ້ຂຶ້ນໜັກສຽງຄໍ  ສົນໃຈຄຽດ ທັງຈົ່ມວ່າ  "ພໍ່ກາບັງເອົາສາວສຸວັນນີໄປນຳຫັ້ນເດ  ເອົາລູກໄປນຳ ແດ່ກາຊິບໍ່ໄດ້ເອົາຫວະ"

- ພໍ່ຕອບລູກວ່າ ໄປບໍ່ໄດ້ດອກ ເພາະຕ້ອງໄດ້ຂ້າມດົງເລິກປ່າຊຶມ ມີແຕ່ເສືອສາງຄາງລາຍຊອກກິນເດັກນ້ອຍ ບັກສັງຂານມັນກໍໄດ້ບອກແລ້ວແຕ່ເວລາອອກບ້ານມາພຸ້ນ ວ່າຊິໄດ້ແຕ່ສອງຄົນທໍ່ນັ້ນ ແລະບ່ອນຊິໄປນັ້ນ ຫາທີ່ຢູ່ບ່ອນນອນໃຫ້ເດັກນ້ອຍກໍບໍ່ມີ ແຕ່ເຖິງຈະອິ່ນອອຍດ້ວຍຄວາມອ່ອນຫວານປານໃດ ເດັກນັ້ນກໍບໍ່ຟັງເລີຍລົ້ມກົ້ງເກືອກລີ້ເລືອລີງປ່າຫຍ້າ ທັງຮ້ອງໄຫ້ໄປຈົ່ມຂຶ້ນວ່າ ພໍ່ບໍ່ຮັກບໍ່ເພງຕົນ ຄັນບໍ່ເອົາໄປນຳມັນກໍຈະຜ່າຍໜີໄປທາງອື່ນ ຈະບໍ່ກັບຄືນຫາບ້ານຫາເຮືອນເລີຍ.

- ສີທົນເປັນບິດາມຸທຸຕໍ່ລູກ ແລະມີໃຈອ່ອນເໝືອນຜູ້ຍິງເມື່ອຄຶດເຖິງການທີ່ແມ່ເຂົາລົ້ມຫາຍຕາຍຈາກມາ ຄຶດເຖິງເມື່ອບໍ່ມີຜູ້ອິ່ນອອຍ ຜູ້ຖນອມທອມລ້ຽງ ເປັນລູກກຳພ້າແມ່ດັ່ງນັ້ນ ຄວາມໂສກແຄ້ນກໍແລ່ນເຂົ້າມາຄຳຫົວໃຈໃຫ້ເກີດເວທນາຈິດຂຶ້ນ ທັງທຳໃຫ້ລາວລະວັ່ງລະເວ່ ບໍ່ຫານຮ້າຍຫຼືຕົບຕີລູກຂອງຕົນ ແລ້ວກໍອົດກັ້ນໄວ້ບໍ່ໃຫ້ສຸວັນນີເຫັນ ຈົນເຫື່ອຍ້ອຍໜ້າຕາແດງ ຈົນນ້ຳຕາໄຫຼອອກນຳລູກ ແຕ່ຕີຕາງຮ້າຍຊັງບັງວ່າເພື່ອຂົ່ມໃຈໄວ້. ເມື່ອລາວງວາກໜ້າຫານາງສຸວັນນີ ເພື່ອສະແດງຄວາມອົດກັ້ນຂອງຕົນ ກໍເຫັນນ້ຳຕາຍ້ອຍໜ້າຢູ່ກ່ອນແລ້ວ ແລະລາວເອງກໍເລີຍທົນບໍ່ໄດ້ ເຖິງທຳກົນກຳຮາບນາບສຽງປານໃດ ນ້ຳຕາລາວກໍຍັງເລື່ອນໄຫຼຢູ່ສເໝີ.

- ເມື່ອນັ້ນ ນາງສຸວັນນີຈຶ່ງທ້ວງໄປວ່າ ໃຈອາວສັງມາແຂງແທ້ ຄັນແມ່ນຫຼານບໍ່ມີອົດໄດ້ເຖິງປານນີ້ ຄຶດເບິ່ງຄວາມຍິນ

ທຸກຍິນຍາກເຂົາຫັ້ນແນ--- ເອົາເທາະອາວ ເອົາມັນໄປນຳລາ ນ້າເຈົ້າກໍເຖິງຂີ້ຣອດສານຄົນປູ່ ໃຫ້ມັນນັ່ງເບື້ອງໜ້າເຮົາຫັ້ນ ຄັນບໍ່ຊັ້ນຫຼານຊິບ່າງເອົາ ຍັງຊິດີກວ່າໃຫ້ຫຼານຢູ່ໃນຄວາມໂສກເສົ້າ.

- ສີຫົນຄຶດຢາກໃຫ້ມີຜູ້ພ້ອມຕົນຢູ່ເກືອບໃຈຂາດ ຈຶ່ງເວົ້າໄປວ່າ ກໍວ່າຊັ້ນແດ່ ບັກສັງຂາບມັນຄືຫັງງນີ້ ຂີ້ຕີນອີກລອງຄົນກໍຍັງຊິໄດ້ຄັນບໍ່ມີບ່ອນນັ່ງນະ ແຕ່ໄປໜ້ານີ້ຊິເຮັດຈັ່ງໃດ ຄັນມັນຫາວເດ ຫິວເຂົ້າເດ ຫິວນ້ຳເດ--- ເຖິງຍາມແລງມາໃຜຊິກ່ອມ ຕື່ນເຊົ້າມາໃຜຊິສ່ວຍໜ້າ ຜັດຖ່າຍສິ້ງເສື້ອໃຫ້ມັນ ອາວບໍ່ຫານຊິເຮັດໃຫ້ບິງຕ່າງໜ້າເຫັນພື້ນແລ້ວ ຈັກໜ່ອຍເຂົາຊິວ່າຄົນບໍ່ມີວາດມີເຊິງ ຫາກໍ່ພົບກັບເທື່ອດຽວກໍຫາຄວາມຍາກມາໃສ່ໂລດ.

- ສຸວັນນີ: ລອງເບິ່ງສາກ່ອນ ຄັນເຂົາເຈົ້າວ່າຈັ່ງໃດກໍໃຫ້ມັນຮູ້ສາຊັ້ນຕວ່າ ອິດເຊື້ອເທາະອາວ ບາດແລ້ວ ຄັນເຂົາບໍ່ເວົ້ານຳຄຳຈັນລູກຂອງອາວນີ້ ຫຼານຊິເປັນທຸລະດອກ ຫຼານຊິນຳໄປເອົາຣອດເຮືອນເຂົາພຸ້ນ. ເມື່ອຜັດຖ່າຍເຄື່ອງນຸ່ງຂອງຄື ໃຫ້ມັນດິບດີແລ້ວຫຼານຊິເອົາມັນໄປຫຼີ້ນເທິງຫຼີ້ນນານຳ ນັ້ນໜ້າມາກໍຊິພາມັນໄປຫຼີ້ນມ່ວນຊື່ນຢູ່ອີກໜິດນຶ້ ຊິບໍ່ໃຫ້ມັນຂາດມັນເຂີນຫັງງຈັກສິ່ງຈັກຢ່າງດອກ.

- ສີຫົນ: ມັນຊິສົນເຈົ້າຫັ້ນບ່າ ມັນຊິວຸ້ນຊີວາຍເຈົ້າໝົດນີ້ຊິ ໆ ແລ້ວ.

- ສຸວັນນີ: ບໍ່ເປັນຊັ້ນດອກ ຫຼານເຮງຊິຊື່ນຊິມ່ວນແລ້ວ ພໍໃຫ້ມັນເປັນເພື່ອນຫຼານແດ່ ຈັ່ງຊິບໍ່ໂສກບໍ່ເຫງົາປານໃດໃນເວລາ ຢູ່ບ້ານເພິ່ນ ຕາງໃຫ້ຫຼານວ່າຫຼານຍັງຢູ່ບ້ານເຮົາເອງພຸ້ນແດ່.

- ເດັກນັ້ນເມື່ອເຫັນວ່ານາງສຸວັນນີພ້ອມດິນແລ້ວ ກໍໂດດ ຈ່ອງເຊີງສົ້ນຂອງລາວໄວ້ຈົນແກ່ນກັ້ກ ແລະເມື່ອເຫັນວ່າພໍ່ດີນລົງຄໍ ແລ້ວ ສອງມືນ້ອຍຂອງມັນ ຊຶ່ງຊ້ຳເຫຼ້າດ້ວຍແສງພະອາທິດ ກໍ ຄວ້າກຳແຂນນາງ ທັ່ງທືບເຕັ້ນເຜັ່ນຂະໂຍງໂດຍຄວາມຊື່ນຊົມ ທັງ ກ້ຽວກອດແລະດຶງແຂນນາງໄປຫາມ້າໂດຍຮີບຮ້ອນ ຕາມພາວະ ຂອງເດັກໃນເວລາອອນຊອນໃຈ,

- ນາງສຸວັນນີກໍເລີຍອຶນອອຍເອົາເດັກທັງເວົ້າວ່າ ເມື່ອຄ່ຳ ຄືນມາຄັນເຈົ້າໜາວໃຫ້ບອກສາວເພີນັກຫຼ້າ ສາວຊິກອດຊິດຸ້ມເອົາ ໄປຂໍອະພັຍນຳພໍ່ເຈົ້າສາ ວ່າລູກຊິບໍ່ເຮັດຄືເກົ່ານີ້ຈັກເທື່ອດອກພໍ່ ເອີຍຊິບໍ່ເຮັດແທ້ ໆ ອີຫຼີ ຊິບໍ່ເປັນຈັ່ງຊີ້ອີກຈັກເທື່ອ ໄດ້ຍິນບໍ່ ?

- ສີທິນ: ພ່ອງເຊັດນ້ຳຕາໃຫ້ລູກດ້ວຍຜ້າມິນ ພ່ອງເວົ້າ ໄປວ່າ ເອີ ! ເອີ ! ຈັ່ງຊັ້ນແລ້ວ ໃຫ້ແຕ່ຂ້ອຍເອົາໃສມັນຢູ່ເລື້ອຍຫັ້ນ ແລ້ວເນາະ ມັນຊິໄດ້ດື່ມແລ້ວສຸວັນນີ ທີ່ຈິງເຈົ້າກໍເປັນຜູ້ມີໃຈມຸທຸ ອ່ອນຫວານແທ້ ໆ ສຸວັນນີແຕ່ເປັນຫຍັງເຈົ້າຈິງບໍ່ມາເຮັດນານຳ ພວກເຮົາແຕ່ຫົວປີພຸ້ນສາ ອາວກໍຍັງຊິໄດ້ເພິ່ງພາອາໄສເບິ່ງລູກ ເບິ່ງເຕົ້າຊ່ອນແດ່ ແລະອາວກໍຍັງຊິໄດ້ຈ່າຍເງິນໃຫ້ເຈົ້າຕາມສົມ

ຄວນ ຍັງຊີດີກວ່າໃຫ້ອ້າຍງີນງວາໄປຫາບິງຜູ້ທີ່ດີຕາງຮັກລູກແລະ ທະເລາະຜິວນັ້ນ.

- ສຸວັນນີ: ຢ່າເວົ້າມາເທາະແນວບໍ່ຈີບບໍ່ງາມນັ້ນ ພ່ອງເວົ້າພ່ອງຄວາຈັບໃຫ້ງມ້າ ເພື່ອໃຫ້ສີຫົນໃຈນລູກຂຶ້ນນັ່ງເບື້ອງໜ້າ ບ່ອນກວ້າງຂວາງແລະປູດ້ວຍໜັງຟານອັນອ່ອນ ໆ ສຸວັນນີຕອບຄວາມໄປອີກວ່າ ຄັນເມັ່ງອາວບໍ່ຮູ້ຮັກລູກ ປີໜ້າຫຼານຊິໄປຢູ່ນຳ ຢ່າເປັນຫ່ວງນຳຫຼານເທາະ ຫຼານຫາກຊິພາມັນຢູ່ກີນມ່ວນຊື່ນ ຈີນລືມຫຼັງໜຶ່ງ ໆ ພຸ້ນແຫຼະ.

# ໕. ຕາມທົ່ງທາມ

- ເມື່ອເດີນທາງຕໍ່ໄປປະມານຄາວນຶ່ງ ສີທົນກໍຄຶດສະເດືອກ ແລະໂອ້ໂອຍຂຶ້ນວ່າ ໂຫ ! ຈັ່ງແມ່ນລືມ. ຄັນບໍ່ເຫັນໜ້າອັນຍານ້ອຍ ເພິ່ນນີ້ກັບເມືອເຮືອນ ທາງບ້ານຊິບໍ່ກອງປະໂຫຫວະ ເພາະໃດເພິ່ນ ກໍຊອກຫາເປັນວຸ້ນ ໆ ຢູ່ແຫຼະ ຈັກຊິຄຶດທ່າໃດ.

- ຈັກໜ່ອຍຈຶ່ງຄ່ອຍສັ່ງເມືອນຳພວກພັນພືນຢູ່ແຄມທາງ ນີ້ ໃຫ້ເຂົາເຈົ້າເມືອຄອບເພິ່ນວ່າອາວໄດ້ເອົາມັນໄປນຳແລ້ວຊັ້ນຕວາ.

- ແມ່ນແຫຼະເພາະສຸວັນນີ້ຫຼານບັງຄຶດຊອດ ບາດວ່າອາວ ດຸດລືມທຶບໄປ.

- ຫັ້ນເດ, ເຂົາເຈົ້າຢູ່ຫັ້ນເດ.

- ເອີ, ດີແລ້ວ ເຂົາເຈົ້າເຫັນຈັ່ງຊີ້ແລ້ວ ເຂົາເຈົ້າຫາກຊິ ເມືອຂ່າວໃຫ້ພວກເພິ່ນຮູ້ຈັກດອກ.

- ເມື່ອຄຶດຖ້ວນຖີ່ແລ້ວ ສີທົນກໍຊັກມ້າແລ່ນ ແລະຄຳຈັບ ກໍ່ຊຸບສະອຶກສະອ້ອຍ ຈົນລືມວ່າຕົນໄດ້ກິນງາຍແລ້ວ ຊ້ຳການກະ ທົກກະເທືອນບາດມ້າທຳໃຫ້ເຂົາທ້ອງຄອນ ເມື່ອໄປໄດ້ປະມານຊົ່ວ ໂມງນຶ່ງຫຼັກ ເດັກຈຶ່ງຄ່ອຍຫາວສະງາບສະເງີບຂຶ້ນທັງໜ້າລ່າ ຈົນ ໄດ້ອອກປາກເສັ່ງວ່າຕົນຫິວເຂົ້າ.

- ສີທົນຫວງໄປວ່າ  ນັ້ນ ! ກໍມາແລ້ວເນາະ !  ມັນຊິຜິດ
ຄວາມໄປໃສ  ເກີນວ່າຮູ້ຈັກສາ.

- ບ້າກໍຫິວ, (ຄໍາຈັນເວົ້າ)

- ເອີຊັ້ນ,  ຄ້າຍແລງຄືຊິຮອດໂຮງເຂົ້າແກງແມ່ດ່ຽງດອກ.
ສຸວັນນີ  ກິນເຫຼົ້ານໍາກັນຈັກໜ່ອຍບໍ ?

- ບໍ່, ຂອບໃຈແລ້ວ  ເກີດມາຫຼານບໍ່ເຄີຍກິນເຫຼົ້າກິນຢາ.
ໃຫ້ອາວເຂົ້າໄປສາກັບຄໍາຈັນ  ຫຼານຊິຈັບມ້າໄວ້ຖ້າ.

- ຮ້າຍ ! (ສີທົນຕ້ອຍໄປວ່າ)  ອາວດຸດຄຶດຮອນ ໆ ໃດ
ວ່າຫຼານຊິກິນເຂົ້າຊຸມນໍາ  ນີ້ເຊົ້ານີ້ຫຼານກໍຍັງໄດ້ປັ້ນເຂົ້າບ່າຍໄຂ່ໃຫ້
ລູກອາວຖຸບທ້ອງຫັ້ນເດ  ຊ້ໍາຫຼານກໍຍັງບໍ່ທັນໄດ້ປັ້ນເຂົ້າເຊົ້າ  ເອີ້ນ
ກິນເຂົ້ານໍາກັນກໍບໍ່ກິນ  ໄດ້ແຕ່ໃຫ້ປູ່ບ້ວຍ ໆ.

- ໂອຍ ! ຫຼານບໍ່ປາກອີຫຼີ  ຂອງວ່າຫຼານເປັນທຸກນໍາແມ່
ໃຫ້ບາບເທາະຄັນຄຶດປາກເມັດນຶ່ງ  ດຽວນີ້.

- ອຸສາກິນຈັກໜ່ອຍເທາະຕື້ນ້ອງ  ຈັກໜ່ອຍມັນຊິເມື່ອຍ
ແລ້ວ ຄາວທາງເຮົາຍັງໄກ ຄັນໄປຮອດບ່ອນແລ້ວບໍ່ແມ່ນເນວຊິຖາມ
ກິນເຂົ້າກ່ອນຖາມຂ່າວ  ອ້າຍກໍບໍ່ຫິວຄືກັນແຕ່ຊິພານ້ອງກິນ  ອ້າຍ
ນີ້ບໍ່ໄດ້ກິນແລງກໍຄືຊິອົດໄດ້ຈົນຮອດບ່ອນເຖິງທີ່ພຸ້ນແຫຼະ.  ເມື່ອອ້າຍ
ເຫັນພວກເຈົ້າສອງແມ່ລູກໃຫ້ຕໍ່ກັນ  ອ້າຍກໍເປັນຄ້ອຍເປັນຄັ່ງ  ເອົາ
ເທາະ ?  ອ້າຍຊິມັດມ້າໄວ້ປາກປະຕູເຂົ້ານີ້ດອກ  ໄປ ! ອຸສາເອົາ
ເທາະນາ.

- ເມື່ອໄດ້ຍິນສີຫົນເອີ້ນຕົນເປັນນ້ອງ ແລະລາວເອງເປັນອ້າຍ ສຸວັນນີກໍໜ້າແດງຂຶ້ນແລະບໍ່ປາກ. ທັງສາມກໍພາກັນເຂົ້າໄປໃນໂຮງເຂົ້າແກງແມ່ດຽງ--- ຄາວນຶ່ງເຂົາເຈົ້າກໍຍົກພາເຂົ້າມາສູ່.

- ເຂືອກໍພາກັນກິນ ສ່ວນຄໍາຈັນນັ້ນຫິວຫຼາຍຈຶ່ງໄດ້ເຖົາດົນກວ່າຊົ່ວໂມງ ສີຫົນຈຶ່ງຊວາດຮູ້ເມື່ອເຖິງຄາວທາງ ນາງສຸວັນນີເມືອຫົວທີກໍກິນພໍແຈະ ໆ ເລັ່ງ ໆ ແຕ່ຄາວນຶ່ງກໍເຫັນວ່າແຊບວ່ານົວເຂົ້າ ດ້ວຍວ່າ. ດົນອະຫວ່າງສິບສາມສິບສີ່ບໍ່ຫ່ອນຊິຮາມຄວາມກິນໄດ້ດົນ. ອີກປະການນຶ່ງອາກາດກໍສົດໃສ ແລະຄວາມສອາດສເອີຍແຫ່ງທົ່ງກວ້າງນາໜາ ແລະຄວາມເລົາໂລມອັນອ່ອນຫວານຂອງສີຫົນພາໃຫ້ນາງນີມານະຂຶ້ນ. ນາງຄ່ອຍອຸສາປະໂລມຂວັນຕົນເອງໂດຍນຶກວ່າ "ອະດູນຶ່ງກໍບໍ່ດົນປານໃດນາ ບຸດນຶ່ງກໍຮອດ ຄາວນຶ່ງກໍກາຍ ແລ້ວກໍຈະໄດ້ກັບຫາບ້ານຫາເຮືອນ ໄດ້ເຫັນໜ້າເຫັນຕາແມ່ແລະປູ່ເປັນສຸກນໍາພີ່ນ້ອງຊາວບ້ານ. ອະດູໜ້ານາ ພໍ່ເຖົ້າສຸທິສານກໍຈະເອົາເຂົ້າບ່າວມານໍາ" ແຕ່ເມື່ອນາງຢູ່ໃນຄວາມສະບາຍໃຈດັ່ງນີ້ ສີຫົນກໍຫຼົງພານຄວາມຄິດເສັ່ງ ໂດຍຊີບອກນາງສ່ອງໄປຕາມປ່ອງສາຂາໃຫ້ຄອຍຖືນຫຼັງ ເພື່ອຊົມອາວາດອັນແຈ່ມໃສ ຊົມຝູງພຸ່ມໄມ້ໃບຂຽວດົກທີ່ດຽງຣະດາດໄປຕາມທົ່ງ ອັນມອງເຫັນສຸດຊົ່ວຕາສຸວັນນີຈຶ່ງສົ້ຖາມຫາບ້ານເຮືອນຂອງຕົນ ຍັງຈະຄອຍເຫັນຢູ່ບໍ່---

- ສີທົນຫຼຽວບອກວ່າ ເບິ່ງແນ ພຸ້ນເດ ! ນັ້ນເຮືອນອ້າຍ ນັ້ນເຮືອນນ້ອງ ເດ ! ເຫັນບໍ່, ບ່ອນປີກຈີກນັ້ນ ! ນັ້ນ ໆ ຄືນນິນ ພຸ້ນ ປູ່ຖຽງຫຼັງໂບດຫັ້ນນະ !

- ສຸວັນນີຄອຍໄປທັງໂອ່ຍຄາງວ່າ "ໂອຍ ! ຫັ້ນເດເຮືອນ ນ້ອງເຫັນແລ້ວ. ປານນີ້ແມ່ນ້ອງໄຫ້ຫາປູ່ຍ້ອນ ໆ ເພາະນໍ !"

- ອ້າຍດຸດຄຶດຜິດໄປສາກແລ້ວ ບໍ່ຊີ້ໄຫ້ເຫັນສາຍທັງດີກວ່າ ຈັກອ້າຍເປັນຫຍັງບຸນນີ້ ລະອັງລະເອງນິດນີ້ຈ້ານແມ່ນອ້າຍໂລເລໂດ ສຸວັນນີ ໄປເທາະ ! ຕະເວັນບຖ້າເຮົາໃດ ອີກຈັກຊື່ອໂມງພໍເດືອນພົ້ນ ປາຍໄມ້ທາກຊິເປັນແດ່ດອກ.

24/VII

- ທັງສາມກໍພາກັນຜ່ານທົ່ງກວ້າງຫຼາຍຜັກກູດໄປ ແລະ ເພື່ອບໍ່ປາກໃຫ້ນາງສາວແລະລູກຂອງຕົນຫອດຫິວຫຼາຍ ສີທົນກໍ ກົດມ້າຄ່ອຍຍ່າງ. ເມື່ອໄປຮອດທາງແວ່ເຂົ້າປ່າ ຍາມນັ້ນດວງພະ ຈັນກໍພົ້ນພຸ່ງແລ້ວ.

- ສີທົນເຄີຍໄດ້ຫຍ່ວແຕ່ທາງໄປບ້ານຫົວຊຽງ ແຕ່ລາວຄຶດ ວ່າ. ເມື່ອລັດໃສ່ທາງໄປບ້ານພະຂາວໂລດເຫັນຈະນໍ່ກວ່າ ແຕ່ທາງ ເສັ້ນນີ້ ເມື່ອລາວໄດ້ເອົາງົວໄປຂາຍຕລາດນັດທາດຫຼວງ ກໍບໍ່ເຄີຍ ໄດ້ຫຍ່ວຈັກເທື່ອ, ກ່ອນຈະເຂົ້າປ່າໄປ ກໍຈັບໄດ້ຄວ້າເຄິ່ງທາງທາງເສັ້ນ ນີ້ປູ່ເປັນຊົ່ວຄາວ ເມື່ອລັດເຂົ້າໄປກໍບໍ່ຖືກທາງທີ່ໝາຍ ແລະບໍ່ຮູ້ເມືອ ວ່າວົນປິ່ນຫຼົງໃສ່ບ້ານທາດຫຼວງ ແລ້ວກໍກັບປິ່ນໄປທາງບ້ານ ຫົວຊຽງ.

- ສິ່ງທີ່ພາໃຫ້ເຂົາເຈົ້າຫຼົງກ້ານັ້ນ ແມ່ນໝອກທີ່ເປັນອາຍຂຶ້ນມາພ້ອມຍາມຄ່ຳ ຊຶ່ງຄວາມເປືອກເປັນທຳໃຫ້ເລື່ອນລອຍຢູ່ຕາມໜ້າດິນ. ເມື່ອເດືອນສິ່ງແສງໃຫ້ສັບປົນໝອກນັ້ນ ຄວາມມືນທຶບຍິ່ງກຸ້ມກົ້ວທົ່ວທຸກຫົນ ທີ່ຈິງແມ່ນນ້ຳທີ່ທ້ົງແລະຊຸ່ມຊື່ນຢູ່ຕາມວ່າງພຸ່ມໄມ້ແລະບ່ອນຫຍ້າ ທີ່ມະຫອດມະແຫດຢູ່ຕາມປູມແຈນັ້ນເອງ ເຂົ້າອູດຂຶ້ນຟຸ້ມໄປໃຫ້ມືດມົນຈົນບໍ່ເຫັນທີບ ຈົນຮູ້ເມື່ອແຕ່ບັກສ້າງຂາບບຶກບຶນແລະດອດຂາອອກຈາກຕົມ ໃຫ້ດັງຈິວ ໆ ເຈັ້ງ ໆ ທັ່ນນັ້ນ.

- ເມື່ອໄດ້ພົບທາງເສັ້ນນຶ່ງພໍໄຕ່ຕາມໄດ້ ສີຫົນກໍ່ຫຼຽວງວາກພຸ້ນພີ້ເພື່ອສືບຫາວທາທີ່ຢູ່ແຫ່ງຕົນ ເລີຍເຫັນວ່າຕົນຫຼົງທາງ ດ້ວຍວ່າທາງເສັ້ນທີ່ພໍ່ເຖົ້າສຸທີສານໄດ້ຊີ້ແຈ່ງໃຫ້ໄຕ່ຕາມນັ້ນເພີນກໍໄດ້ບອກຄັກແລ້ວວ່າ ມັນນີ້ມດອນແລ້ວກໍຕ້ອງໄດ້ນຳທາງແຍກເສັ້ນນຶ່ງເປັນສີດ້ອຍ ໆ ລົງໄປ ແລະລອດລ້ຽວຕາມທົ່ງກວ້າງສອງຟາກຂ້າງແມ່ນຫ້ວຍນ້ຳ ແລະຫ້ວຍນັ້ນມີແຊນຫາດ ແລະເຖົ້າໄດ້ຊ້ຳຄວາມອີກວ່າ ເມື່ອຂ້າມຫ້ວຍທັງສອງນັ້ນໃຫ້ລະວັງດີມາກ ດ້ວຍວ່າຫ້ວຍຣະດູບໍ່ທັນຂາດແຫ້ງເທື່ອ ສີຫົນບໍ່ເຫັນຮອດທາງລົງ ຮອດທົ່ງກວ້າງ ຮອດຫ້ວຍນ້ຳ ເຫັນແຕ່ໝອກຂາວຕເລີດໄປດັ່ງແດນໝອກກ້ວມ ແລ້ວກໍ່ຢຸດເພື່ອຄອຍວ່າທາງຖຽງບາໃດນຶ່ງ ຫຼືຄົນຜູ້ໃດຜູ້ນຶ່ງພໍກາຍມາ ແຕ່ບໍ່ປະກົດເຫັນສິ່ງໃດເລີຍພໍຊີ້ທາງໃຫ້ໄດ້ ລາວຈຶ່ງກັບເຂົ້າດອນຂອງເກົ່າ ເວລານັ້ນເປືອໝອກຍິ່ງຄຸມທຶບ

ເຄືອບບຶງສົງແສງເສົ້າ ທາງທຽວບຶງຜາງຮ້າຍແລະເປັນບ່ວນ ສັງ ຂານເກືອບພາດລົ້ມທັງສອງທີແລະລ້າເມື່ອຍເພາະເຈັ່ງໜັກ ຖ້າ ມັນບໍ່ຄອຍລະວັງ ເຫັນຈະພາຜູ້ຂີ່ປູ່ເທິງຫຼັງຂອງມັນໂດນງ່າໄມ້ ໃຫ່ງ ທີ່ໄຂວ່ຂືນຢູ່ພຽງຫົວໃຫ້ໄດ້ເຈັບເປັນແຜ່ ດ້ວຍເຫດນີ້ໜວກ ສີຫົນຈຶ່ງກົກຈາກຫົວ ຈົນໄດ້ຊອກກັບເປັນອີດອ່ອນຈຶ່ງຄ່ອຍເຫັນ ຄຳ ຈັນ ງໍ່ຮູ້ເມື່ອເຖິງແລ້ວກໍປະໃຫ້ພາໄປເໜືອນໃຫ່ປຽກ ແຕ່ໄດ້ກອດພໍ່ ໄວ້ເປັນແໜ້ນແກ່ນ ຈົນຜູ້ກົດໃຫ້ງຄຶກກຶດຂວາງ.

- ສີຫົນອອກປາກທັງປຸນບ້າວ່າ ມັນເປັນແນວໃດສາ ! ດຶງອັນນີ້ກໍບໍ່ກວ້າງພໍຊິຫຼີ້ງ ຄັນບໍ່ແມ່ນຄົນບ້າເຫຼົ້ານະ ! ເຮົາຄວ້າງ ຄຸ້ງງປູ່ນີ້ກໍເກືອບສອງຊົ່ວໂມງແລ້ວກໍຍັງບໍ່ພົ້ນໄດ້ ບັກສັງຂານກໍສຸດ ປັນຍາ ຍັງແກ່ຄວາມຄຶດນັ້ນຊິກັບຄືນບ້ານເກົ່າທີ່ນັ້ນ ເປັນບຳມັນນີ້ ແຫຼະ ! ຄັນມັນຢາກຄືນບ້ານບໍ່ໃຊ່ຍາກກໍ່ນີ້ ລອງປ່ອຍໃຫ້ມັນໄປ ຕາມໃຈມັນເບິ່ງດູ ແນວໃດກໍແມ່ນບ້ານພຸ້ນແຫຼວເປັນເຂດ. ຄັນຊິ ກັບຄືນຫຼື ພັກຣອນຊິຣອດແລ້ວ ຄັນຊິໃຫ້ກັບຄືນຂອງເກົ່າຕາມທາງ ຫຼົບລີ້ນຈັ່ງຊີ້ ເຂົາພັດຊິວ່າເປັນບ້າແລ່ວ ຈັກຊິເຮັດແນວໃດ ດົນກໍ ບໍ່ເຫັນຟ້າຫຼັງງຈັກດີ້ ຄັນຊິວົນຢູ່ໃນໝອກເວນອັນນີ້ ບັກຫຼ້າຊ້ຳຊິ ເປັນກວັດ ແລະພາດທ່ານ້ຳລົ້ມເສັງກາງທາງເດ ແນວໃດກໍເຕັງ ບັກນ້ອຍບໍ່ດ້ອງສົງໃສແຫຼະ.

- ເອົາເທາະສີຫົນ (ສຸວັນນີເວົ້າໄປວ່າ) ຢ່າຊູຊີຫຼາຍ ໄປ

ລົງ ! ເອົາລູກອ້າຍມາບ້ອງຊືກອດພັນໄວ້ໃຫ້ແກ່ນ ໆ ໃຫ້ຄັກກວ່າຕຸ້ມຜ້າພຸ້ນເຫຼາະ ຄັກມັນພິກຄືງໂຕມັນຈັ່ງຊິບໍ່ເປື່ອຍແດ່ ແລະອ້າຍກໍບັງຊີຂັບນ້ຳໄປໄດ້ສະດວກ ທັງຊິໄດ້ເຫັນຊ່ອງທາງຕໍ່ໄປໃນເວລາພົ້ນຕລອດລອດຝັ່ງແລ້ວກໍດີ.

- ເຖິງປຸ່ນແປງໄປຢ່າງໃດກໍດີ ກໍພໍແຕ່ຫ້າມບໍ່ໃຫ້ເອົາເຈົ້າຕົກນ້ຳທີ່ນັ້ນ ດ້ວຍວ່າເວລານັ້ນເປືອຫນອກບິງຖອຍລົງປູຫນ້າດິນທີ່ເໜືອກຊຸ່ມນັ້ນແລ້ວ ຈະໄປຫນ້າກໍຍາກແຄນ ຝົດເຄືອງອິດອ່ອນແລະບຸດຖຽວກໍຫິບທ່າວ ແລ້ວກໍເລີຍພາກັນປຸດ. ຈຳເພາະຖືກໃບນໂຄກນ້ອຍທີ່ມີ ຣົມ ຕົ້ນໄມ້ໃຫ່ງ. ສຸວັນນີປຽກຊຸ່ມຫມົດປານລອຍນ້ຳແຕ່ບໍ່ຈົ້ມວ່າຍາກຫຼືໂສກແຄນຢ່າງໃດ ມີແຕ່ລະວັງເດັກໃຫ້ດີທີ່ນັ້ນ. ນາງນັ້ງຖູ້ເຂົ້າລົງເທິງດິນຊາຍ ສ່ວນສີຫົນເມື່ອໄດ້ຫ້ອຍສາຍໃຫ້ງບັກສັງຂານໄວ້ງ່າໄມ້ແລ້ວ ກໍເລາະລຽບໄປມາຫາຊ່ອງທາງ.

- ດີນນັ້ນບັກສັງຂານອຸກທາດ ຍ້ອນການເດີນທາງນີ້ເຫຼືອທີ່ສຸດ. ມັນກໍດີດສົ້ນຂື້ນຫມົດກຳລັງແອວຂອງມັນຈົນສາຍໃຫ້ງຫຼຸດແລະສາຍຮັດອານມ້າຂາດ. ເມື່ອມື້ນແລ້ວມັນກໍສັກຂະໂຍງຂື້ນສູງຖ້ວມຫົວປະມານສິບບາດ ແລ້ວກໍບຸປ່າໄປເສັຽຄາບ ໆ ດັ່ງບໍ່ທຸຣະນຳເຈົ້າຂອງຜູ້ຂັບຂີ່ ຫຼືການຄົ້ນຄວ້າຫາຊ່ອງທາງເດີນຕໍ່ໄປ.

- ເມື່ອຄຸບຄວານຳບໍ່ທັນແລ້ວ ສີຫົນຈື່ງອອກປາກວ່າເອົາເຫີບາດນີ້ ! ບັງແຕ່ພົ້ນຕີນນີ້ເຫຼາະຊິພາໄປ ພາອ້ານຫ້ວຍ ອາໄລ

ຕໍ່ແນວອືນບໍ່ໄດ້ດອກ. ຄັນທາງທຽວແມ່ນແຕ່ນ້ຳຫ້ວຍ ຫາກຊິຢູ່ເທິງດິນດອກດີ ບໍ່ມີໄປທາງໃດສຸດກຳລັງແລ້ວບາດນີ້ ຈຳເປັນຕ້ອງຖ້າໃຫ້ໝອກຫາຍເສັຽກ່ອນ ບໍ່ມີເກີນນຶ່ງຫຼື ສອງຊົ່ວໂມງໄປດອກດີ. ຄັນແຈ້ງຕາມາເຊົ້າແລ້ວ ເຮົາຈຶ່ງຊອກຫາບ່ອນແວ່ນອນເຊົາ ນຳຖຽງໄຮ່ຖຽງນາແຫ່ງໃດແຫ່ງນຶ່ງ ຊຶ່ງປະກົດວ່າຢູ່ແຄມດອນນີ້. ດຽວນີ້ແນວໃດກໍໜີ ຈາກນີ້ບໍ່ພົ້ນແລ້ວ ນີ້ກໍແມ່ນໂສກ ນັ້ນກໍແມ່ນໜອງຢູ່ເລິກ ໆ ພຸ້ນ ຈັກແມ່ນຫັຽງຕໍ່ແມ່ນຫັຽງ ຈັກອັນໃດຕໍ່ອັນໃດ ຕາສອງບໍ່ເຖິງ ປານເຂົ້າຖ້ຳເອົາຊື່ ໆ! ຍ້ອນຄວາມຫຼົງໄຫຼ ຈັກຮອດໃສຕໍ່ຮອດໃສ...

## ໙. ໃຕ້ປ່າໝາກກໍ່

- ສຸວັນນີເວົ້າຂຶ້ນວ່າ ນີ້ນະ ! ອ້າຍສີທົນ ເຮົາມາພາກັນອົດເບື້ອນເອົາເທາະ ເຮົາໄດ້ຢູ່ບ່ອນໃນນີ້ຈັ່ງຊິກໍບໍ່ມີພໍຮ້າຍປານໃດ ຝົນກໍບໍ່ມີວ່າຊິຮົ່ວເປື້ອຍໝານີ້ລົງຮໍາເຮົາດອກກີ ຄັນຊິກໍ່ພື້ນດັງໄຟກໍບັງພໍໄດ້ຢູ່ ຮາກໄມ້ວາຍປົ້ນທີ່ເປັນດັງຢູ່ນໍາໝູ່ນີ້ກໍຫາພໍໄດ້ ອ້າຍບໍ່ໄດ້ຖືກັບເຫຼັກໄຟມານໍາແດ່ຫວະ ?

- ວ່າງທຶ່ງບໍ່ມີແລ້ວບໍ ແຕ່ງຽວນີ້ຫາກຢູ່ນໍາຖົງວ່າງນ້ຳກັບຕຸ້ມນົກກໍ່ອັນຊິເອົາໄປວ້ອນພໍ່ເຖົ້າເຜັງພຸ້ນໝົດ. ນ້ຳຂີ້ຮ້າຍຕົວນັ້ນຫອບເອົາໄປນໍາໝົດ ເສື້ອຕຸ້ມກໍປ້ອນໄປນໍາກັນ ປານນີ້ເກາະໝານຂາດມຸ່ນໝົດແລ້ວຕີ.

- ຜ້າຮອງອານກໍຢູ່ຫັ້ນເດ ສີທົນຖົງກໍຢູ່ປາຍວີນເຈົ້າຫັ້ນເດ ພວມບັກສັງຂານໂດດໄປຫັ້ນ ສາຍຮັດຕ່າງກໍຂາດເລີຍຕົກມ້ວນລົງນໍາກັນ.

- ຈັ້ງແມ່ນທັນນະຊາດ ! ຢູ່ນີ້ອີຫຼີ (ສີທົນຫ້ວງວ່າ) ບາດນີ້ຄັນເຮົາງົມງວາຫາເອົາພື້ນມາດັງຝົງກໍໄດ້ແລ້ວ ຊັ້ນນະ.

- ຊິບາກຫັຽງ ໄມ້ລໍາເທົ້າກະແດ້ງງໍພໍເປັນດັງ ອ້າຍກໍປຽບຢູ່ຫັ້ນເດ ເອົາຜ້າຮອງຫຼັງມ້ານມາໃຫ້ນ້ອງກ່ອນແດ່.

- ນ້ອງຊິເຮັດຫັຽງ ?

- ຊິແປງບ່ອນໃຫ້ນັກນ້ອຍ--- ບໍ່---ບໍ່ປູຈັ່ງຊັ້ນດອກປີ້ນຂຶ້ນ ມັນຈັ່ງຊິບໍ່ກີ້ງອອກໃສ່ທາງຂີ້ເຮີຈັ່ງຊີ້ເດ. ຍັງອຸ່ນອາຍຫຼັງມ້າປູ່ເນາະ ເອົາກ້ອນຫີນຢູ່ຕໍ່ໜ້າອ້າຍຫັ້ນມາໃຫ້ແດ່ ນ້ອງຊິໜູນຂ້າງມັນໄວ້.

- ບໍ່ເຫັນດອກ ອ້າຍນີ້! ນະຕາອ້າຍຈັ່ງແມ່ນເຊີ້ ບາດ ຕານ້ອງດຸດປານຕາແມວເອົາຊີ້ ໆ.

- ແລ້ວ ໆ ເດີ້! ເອົາເສື້ອຕຸ້ມອ້າຍມາ ຊິປົກຕີນນ້ອຍ ໆ ແດງ ໆ ນີ້ໃຫ້ມັນ ກັບແພຕຸ້ມນ້ອງແດ່ ຊິຫົ່ມໃຫ້ມັນ ນ! ເຫັນບໍ່ ເບິ່ງດູສິຫັ້ນ ອຸ່ນໃດນ້ອງວ່າ.

- ໂບ່ ແທ້ ໆ ເນາະ! ນ້ອງສັງຊ່າງບິວຣະບັດຕຸ້ມຕອນ ເດັກເລັກເດັກນ້ອຍເອົາແທ້.

- ອ້າຍດຸດສິງໃສໜັດຊູ່ສິງຊູ່ແມວເນາະສິຫັ້ນ ອ້າຍດຸດລືມ ແລ້ວຫວະວ່ານ້ອງເປັນຄົນລ້ຽງສັດນະ ແຕ່ປູ່ກາງທົ່ງແດ່ນແດ້ ຝົນ ຕົກລົມແຊະ ໆ ດັ່ງກອງຮ້າກໍ່ບັ່ງລຸກວານ ໆ ຫັ້ນເດ.

- ເອີ ອັນນັ້ນແມ່ນຄວາມຊຳນານຂອງຄົນລ້ຽງສັດ ອ້າຍ ພັດເປັນຄົນໄຖນາ ກໍຮູ້ເຮັດນຳແຕ່ງົວຄວາຍແລະຄາດໄຖນາແຕ່ຢ່າງ ເປັນພຸ້ນແຫຼະດີ.

- ສົມພໍອ້າຍແຮງແຂນກວ່າມືຫັ້ນແຫຼະເນາະ ຝົນຈຸ່ປູ່ຫັ້ນ ລອງເປົ່າເບິ່ງມັນຊິລຸກບໍ່ ເອົາກັບແຫຼັກໄຟກັບຂີ້ຝອຍແຫ້ງມາ ເອົາ ແຫຼະບາດນີ້ ເປົ່າດຸ ອ້າຍບໍ່ເປັນພຍາດປອດຕວາ.

- ສີຫົນພ່ອງເປົ່າໄຟປານສຽງສູບເຫຼັກ ພ່ອງເວົ້າຂຶ້ນວ່າ "ຄືຊິບໍ່ດອກ" ດາວນຶ່ງໄຟກໍລຸກຂຶ້ນຣິບ ໆ ຫົວທີສ່ານແສງແດງ ແລ້ວກໍຊັດແປວຂຽວຂຶ້ນ ບາດໜອກມົນໃຫ້ອາກາດອຸ່ນທີລະໜ້ອຍ ໃນອ້ອມຮອບເຈັດສອກ.

- ບັດນີ້ ນ້ອງຊິນັ່ງປ້ອງຂ້າງບັກນ້ອຍໄວ້ ເພື່ອລະວັງໄຟ ປ້ານມັນພົ້ງໃສ່ ໃຫ້ອ້າຍຮັກສາຈຸພື້ນເປົ່າໄຟຂຶ້ນໄວ້ໃຫ້ລຸກ ອ້າຍສີຫົນ--- ບາດນີ້ຄືຊິບໍ່ປ້ານຫວັດປ້ານໄອສັງແຫຼະ.

- ແທ້ເນາະ ຈັ້ງແມ່ນນ້ອງເປັນບີງມີສະຕິ ເມື່ອຄຳຄືນ ດັ່ງໄຟກໍຍັງລຸກປານໜໍ່ມີນເອົາຊື່ ໆ ອ້າຍຮູ້ເມື່ອຄືງມາແດ່ແລ້ວ ບາດນີ້ ຫົວໃຈກໍນາຍອອກຍ້າວ ໆ ໄວ່າງນຶ່ງນີ້ຈັ້ງແມ່ນອຸກຫາດ ຂອງວ່າແຂ່ງຂາປຽກອີນໜົດ ຄືດວ່າຊິໄດ້ໜົກເບົ່າປູ່ຈັ້ງຊິເທົ້າແຈ້ງ ພຸ້ນຕີ.

- ໂນໄຫຫຼາຍມັນກໍເປັນຊັ້ນແລ່ວ.

- ຊັ້ນນ້ອງບໍ່ໂນໄຫຈັກເທື່ອຫວະ ?

- ບໍ່ ນ້ອງບໍ່ເຄີຍໂນໄຫ ຈັກຊິໂນໄຫໄປເຮັດຫັຽງ.

- ແມ່ນປູ່ດອກ ແຕ່ບາງທີຄວາມໂກດຮ້າຍຫາກເປັນວິທີ ດັບອຸກະທາດ ຄັນບໍ່ຮ້າຍມັນກໍບໍ່ສວ່າງ ໂອຍນໍ ໃຜຊິເວັ້ນໂນໄຫໄດ້ ຈັກຄົນເດ ສ່ວນຫຼາຍຄືຈັ້ງນ້ອງຜູ້ຂັດສົນຈົນໃຈປູ່ສເມີນັ້ນ ເຮັດຈັ່ງໃດ ຈິ່ງປູ່ໄດ້.

- ແມ່ນແລ້ວ ພວກນ້ອງສອງແມ່ລູກເປັນຄົນຈົນກໍຈິງ ແຕ່ບໍ່ເຄີຍໂມໂຫຈັກເທື່ອ.

- ຕໍ່ໜ້າວຽກທີ່ການ ອ້າຍກໍບໍ່ເຄີຍໄດ້ທໍ້ຖອຍຈັກເທື່ອ ແຕ່ຄັນອຸກໃຈມາມັນຫາກເປັນສາຍຕ່າງໄປໂລດ ດ້ວຍວ່າອ້າຍກໍໄດ້ພ້ອມພິວພ້ອມເມັ້ງສ້າງແປງມາບໍ່ຂາດ ແຕ່ນີ້ຕໍ່ໄປຄັນອ້າຍບໍ່ລະເຫີ້ຍວຽກການ ຄົງໄດ້ເປັນສຸກສະບາຍໄປປູ່ດອກ ບໍ່ວ່າໃຜ ໆ ກໍຕ້ອງພົບກັບເວລານຶ່ງ ແຕ່ທຸກວັນນີ້ກໍບໍ່ແມ່ນອ້າຍເປັນທຸກຍ້ອນຂາດເຂີນດອກ.

- ແມ່ນແລ້ວ ອ້າຍເປັນທຸກນຳເມັງ ໂອຍ ! ໜ້າອີດູຕົນຊາດລາວ !

- ຈັ່ງຊີ້ແຫຼະເນາະຄົນເຮົາ.

- ນ້ອງກໍຄຶດຮອດຄຶດເຖິງລາວຢູ່ ສີທົນເອີຍ ເພາະລາວກໍເປັນຜູ້ຈົບຜູ້ດີ ເອົາເທາະ ຢ່າເວົ້າມາເທາະຄວາມນັ້ນ ຄຶດນາພໍນ້ຳຕາອອກ ນີ້ ນີ້ນ້ອງແຮງເປັນເສົ້າເປັນໝອງໝົດນີ້.

- ແທ້ແຫຼະເນາະ ! ລາວກໍຮັກກໍເພງນ້ອງຄືອຸທອນກ້ອນດວງກັບນີ້ ສຸວັນນີ ລາວກໍໄດ້ອຸດໜູນຄ້ຳຊູພວກເຈົ້າແມ່ລູກມາຢູ່---ຮອ້າຍ ! ນ້ອງວຸດໄຫ້ກວະ ! ຢ່າໄຫ້ນາ ອ້າຍແຮງບໍ່ປາກໄຫ້.

- ໂປດ ! ອ້າຍກໍບັງໄຫ້ເດ ອ້າຍປາກໄຫ້ກໍໄຫ້ທະເນ ໄຫ້ນຳເມັງຊີວິດໃຜ ນ້ອງກໍບັງໄຫ້ນຳຄືກັນ.

- ສຸວັນນີ ໃຈນ້ອງສັ່ງນ່າປະເສີດແທ້ ອ້າຍນີ້ບໍ່ໄດ້ໄຫ້ຕໍ່

ນ້ອງສາຄືຊິບໍ່ສວາງ  ຫຍັບເຂົ້າມາໃກ້ ໆ ພົ້ນະນ້ອງ  ຫຍັບຕີນມາຂາງໄຟນີ້ ສີ້ນນ້ອງດຸດປຽກໝົດເນາະ  ໂອຍ ! ໜ້າອີດູ ຫຍັບເຂົ້າອ້າຍຊິຮັກສາບັກນ້ອຍປ່ຽນດອກ ໃຫ້ນ້ອງຜີງໄຟດັບດີສາ.

- ເອົາແຫຼະ  ນ້ອງອຸ່ນຢູ່ດອກ  ຄັນອ້າຍປາກນັ້ງກໍພື້ເຊີງຜ້າອອກຫະແຜ  ນ້ອງຢູ່ຈັ້ງຊີ້ກໍສະບາຍຢູ່ດອກ.

- ສີທົນພ້ອງເວົ້າພ້ອງນັ້ງລົງ  ຄຽງຂ້າງນາງສຸວັນນີວ່າທີ່ຈິງເຮົາຢູ່ບ່ອນຈັ່ງຊີ້ກໍພໍຢູ່  ຫັນຫາວາຍນຳແຕ່ຫົວເຂົ້າທັ່ນນັ້ນແຫຼະເກົ້າໂມງກາງຄືນແລ້ວເດີ້. ໄຕ່ຕາມທາງຊິວຮ້າຍຈັ່ງຊີ້  ດຸດເປັນຫອດເປັນຫົວ  ນ້ອງເດບໍ່ຫົວເຂົ້າຫວະ.

- ສຸວັນນີຕອບໄປວ່າ  ນ້ອງຫວະບໍ່ຫົວຈັກດີ້  ນ້ອງບໍ່ເຄີຍກິນເຂົ້າວັນລະສີ່ຄາບຄືອ້າຍ  ລາງເທື່ອນ້ອງກໍເຄີຍໄດ້ນອນທ້ອງເປົ່າຫົວທັ່ງນີ້ຊິພໍເປັນຫຍັງເນາະ.

- ສີທົນເວົ້າໄປທາງຫົວເຍີ້ນວ່າ  ເນາະ  ດີໃດ  ແມ່ເຮືອນຜູ້ຈັ່ງຊີ້  ມັນຈິງບໍ່ເປືອງອັດດີ.

- ສຸວັນນີເຂົ້າໃຈຊີ້  ແລະບໍ່ຄິດສະເດືອກເຖິງບັນຫາຂອງພໍ່ນາ  ຈິ່ງຕອບໄປວ່າ  ນ້ອງບໍ່ທັນເປັນແມ່ເຮືອນນາ  ອ້າຍຝັນຫວະ ?

- ຄືຊິແມ່ນ  ຫົວທ້ອງນີ້ນະພາໃຫ້ໄປໄປໃລ ໆ ເລ ໆ !

- ສຸວັນນີຕອບໄປທາງຊຶ່ນແດ່ວ່າ  ຈັ່ງແມ່ນໂລພາເນາະຄັນອົດພໍ່ຊົວໂມງບໍ່ໄດ້  ກໍນິກເປົ່າອ້າຍທັ່ນເດ  ໄຟຈີ່ກໍພໍມີຕວາ.

- ໂອເນາະ ! ນ້ອງບັງຄຶດຊອດເນາະ ເສັຽທີແຕ່ແມ່ນຂອງປາກຫາພໍ່ເຖົ້າໃໝ່ທີ່ນັ້ນແຫຼະ.

- ນິກຄໍ່ທັງຫົກໂຕກັບກະຕ່າຍອີກໂຕນຶ່ງ... ຊິກິນໝົດພຸ້ນຫວະຈັ່ງຊິພໍ.

- ປູ່ບ່ອນຈັ່ງຊີ້ ຊິໃຫ້ໄປຄົວກິນຈັ່ງໃດ ເຄື່ອງແຕ່ງປູ່ແຕ່ງກິນກໍບໍ່ມີ ຈັກໜ່ອຍມັນຊິເປັນຂີ້ເຖົ່າໝົດແຫຼະ.

- ນ້ອງຊິເປັນທຸຣະດອກ ໝົກໃນຂີ້ເຖົ່າກໍບໍ່ມີ ໃຫ້ມັນຂົວຄວັນໄຟຫັ້ນ ປູ່ທັງປູ່ນາອ້າຍບໍ່ເຄີຍໄດ້ພົກໄດ້ໝູນາປີ້ງມາຈີ່ຈັກເທື່ອຫວະ ໂອເນາະລືມໄປ ດຽວວ່າອ້າຍເປັນຄົນລ້ຽງສັດຊັ້ນດອກ ເອົາຫຼົກນົກໂຕນີ້ໃຫ້ແດ່ ຄ່ອຍ ໆ ແດ່ມັນຊິໄປດແລ້ວ.

- ນ້ອງກໍເອົາໂຕນຶ່ງມາຫຼົກໃຫ້ເບິ່ງແດ່ເດ.

- ຕາຍ ! ຊິກິນຮອດສອງໂຕພຸ້ນຫວະ ເຫັນແຕ່ພີເປົ້າພີໄພງດອກຈັ່ງຊີ້ ເອີ ເອົາແຫຼະຫຼອນແລ້ວແຫຼະ ນານ້ອງຊິຈີ່.

- ສຸວັນນີ ນ້ອງຄືຊິເປັນແມ່ຄົວລະອຽດແທ້ ໆ ເນາະ ຫາກບໍ່ເຫັນມີນ້ຳໃຫ້ກິນ ໃຫ້ອ້າຍກິນນ້ຳບວກນີ້ຫວະ.

- ເພິ່ນປາກກິນເຫຼົ້າໃດຫັ້ນ ເນາະ ! ເອັນອີນາຍແມ່ດຽງເອົາມາໃຫ້ທະເນ "ເອົາເຫຼົ້ານາຄວາບອຸ່ນຍາພໍ່ນາແດ່ຊັ້ນຕອງ"

- ຈັ່ງແມ່ນຮ້າຍເນາະສາວອັນນີ້ ເວົ້າສຽດໃດຫັ້ນ ຄັນບັນມີນ້ອງຊິກິນນຳບໍ່ຊັ້ນ.

- ນ້ອງຫວະ ? ພັດແຕ່ເກີດມາ ຫາກໍໄດ້ຊີມວ່າງກິນເຂົ້າ ສວາຍຢູ່ຮ້ານເຂົ້າແກງແມ່ດ່ຽງທໍ່ນັ້ນແຫຼະ ຖ້າອ້າຍບັ່ງຢູ່ດີ ໆ ຊິຫາ ໃຫ້ກວດນຶ່ງພຽງຄໍດຽວນີ້ ເຫຼົ້າໂຫຍ່າງແຊບ ໆ ຫວານ ໆ ຊ້ຳ.

- ຣວ້າຍ ! ສຸວັນນີ ນ້ອງເອົາມາແຕ່ໃສ, ຈິ່ມມິນເອົາຫວະ ?

- ຊັ້ນຢູ່ໂຮງເຂົ້າແກງ ອ້າຍບໍ່ໄດ້ຫຼິ ງຊື້ຣອດສອງກວດພຸ້ນ ຫວະ ກວດນຶ່ງອ້າຍກໍກິນກັບບັກນ້ອຍຫັ້ນເດ ກວດນຶ່ງອ້າຍກໍໄດ້ເອົາ ມາວາງໄວ້ຕໍ່ໜ້ານ້ອງ ແຕ່ນ້ອງຫາກກິນພໍແຕ່ແຈະ ໆ ເລັງ ໆ ນີ້ ແຫຼະ, ອ້າຍບໍ່ໄວ້ໃຈ, ເລີຍໃຊ້ຄ່າໝົດທັງສອງກວດ.

- ແລ້ວເຮັດຈັ່ງໃດ ?

- ເຮັດຈັ່ງໃດ, ກວດຍັງເຕັມນ້ອງກໍໄດ້ຈັບຍັດໃສ່ກະຕ່າມາ ນີ້ເດ ເພາະນ້ອງຄຶດວ່າ ມານຳທາງອ້າຍກັບບັກນ້ອຍຊິຫິວຊັ້ນດອກ ນີ້ເດເຫຼົ້ານັ້ນ.

- ຈັ່ງແມ່ນນ້ອງຄຶດຊອດຈອດເພື່ອເພາະ, ອ້າຍບໍ່ເຄີຍໄດ້ ເຫັນຜູ້ຍິງຈັ່ງນ້ອງນີ້ຈັກເທື່ອ. ຄຶດເບິ່ງດູ ! ບານອອກມາແຕ່ໂຮງ ເຂົ້າແກງ ໃຫ້ຢູ່ບ້ວຍ ໆ, ປານນັ້ນຍັງງຶມຄຶດນຳເພີ່ນກວ່າຕົນເອງ ຊາຍໃດໄດ້ນ້ອງເປັນເມັຽ ເຫັນຈະບໍ່ເສັຽໜ້າເສັຽຕາແກ່ຜູ້ໃດແລ່ວ.

- ຂໍໃຫ້ໄດ້ຈັ່ງຄຳສັບຄຳປາກຫ້ອນ, ນ້ອງບໍ່ປາກໄດ້ແທ້ ໆ ແນວຄົນຂີ້ຮ້າຍນັ້ນ. ມາເດີ. ມາກິນຍັງມີກໍ່ເຈົ້າເດີ, ພອມສຸກດີ, ກຳລັງແຊບກຳລັງນົວ, ເສັຽເດີແຕ່ນໍ້າເຂົ້າທໍ່ນັ້ນແຫຼະ ອຸສາກິນ ໜາກກໍ່ຕ່າງເອົາເພາະເພາະ.

- ຣວ້າຍ ພັດເອົາໝາກກໍ່ມາແຕ່ໃສອີກ.

- ຊິພໍ່ຈື່ດອງ້ຫັງງເນາະ, ມານຳທາງກໍປົດເອົາ ໆ ນຳວ່າ ແລ້ວກໍບັດໃສ່ຖົງຈົນເຕັມ, ນີ້ເດ.

- ໝາກກໍ່ສຸກຊ້ຳພັດວ່າ.

- ເອົາຈິດເອົາໃຈໄປໄວ້ໃສຈັ່ງຊິບໍ່ສຸກ ນ້ອງກໍໄດ້ໝົກແຕ່ໄຟ ພວມລຸກພຸ້ນເດ ຂອງເຄີຍເຮັດຢູ່ ເມື່ອຢູ່ທົ່ງຢູ່ນາກໍດີ.

- ໂອ່ເນາະ ຊົ້ນມາຮ່ວມແລງກັບເທາະສຸວັນນີ ອ້າຍປາກດົນເພື່ອຄວາມຢູ່ດີມີແຮງຂອງນ້ອງ ແລະຊິໃຫ້ພອນນ້ອງໄດ້ຜົວຜູ້ຮູ້ໄດ້ຮູ້ຜູ້ດີ ນັ້ງລີງນີ້ ໃຫ້ນ້ອງປາຖນາເອົາເອງຈັ່ງໃດກໍດີ ແລ້ວເວົ້າໃຫ້ອ້າຍຟັງແດ່.

- ຊິໃຫ້ນ້ອງເວົ້າຈັ່ງໃດ ສີທົນ ຂອງວ່ານ້ອງບໍ່ໄດ້ຄຶດຫາຈັກເທື່ອ.

- ສີທົນ ພ່ອງເວົ້າພ່ອງກິນໝຸມ ໆ ຕາມກຳລັງພໍ່ນາ ວ່າຈັ່ງໃດນ້ອງ ບໍ່ຄຶດຫາຈັກເທື່ອອີຫຼີ ຫວະ ຊິບໍ່ເອົາຈັກເທື່ອຫວະ? ແຕ່ເຖິງຫິວແລະກິນແຊບປານນັ້ນ ລາວກໍບັງຕັດຕ່ອນແຊບມາສູ່ເພື່ອນທາງຂອງຕົນຢູ່ ແຕ່ນາງບໍ່ຮັບເອົາເປັນເດັດຂາດ ແລະບົນດີກິນໝາກກໍ່ແຕ່ສອງສາມໜ່ວຍທໍ່ນັ້ນ. ເມື່ອເຫັນວ່າສຸວັນນີບໍ່ຕອບຄວາມໃດ ສີທົນກໍຖາມຕໍ່ໄປອີກວ່າ ຈັ່ງໃດນ້ອງ ບໍ່ຄຶດປາກໄດ້ລູກໄດ້ຜົວສັງຫວະ ? ນ້ອງກໍເຖິງອາຍຸແລ້ວເດ.

- ຈັກແລ່ວ ນ້ອງຍັງພວມທຸກພວມຍາກຢູ່ ກ່ອນຊິສ້າງ ຄອບສ້າງຄົວ ຢ່າງນ້ອຍກໍຕ້ອງມີເງິນມີຄຳແດ່ ດັ່ງນັ້ນນ້ອງຈຶ່ງປາກ ຊອກຫາໄປຈັກຫ້າຫົກປີອີກເສັຽກ່ອນ.

- ຫນ້າອີ່ດູເນາະ ! ອິດພໍ່ເຖົ້າອ້າຍໃຫ້ຈັກເລັກຈັກໜ່ອຍ ແມ ພໍ່ມາຊ່ວຍດອງນ້ອງນີ້ດອກ.

- ຂອບໃຈຫຼາຍ ໆ ແລ້ວ ສີທົນ ຄົນທັງຫຼາຍຮູ້ຈັກເຂົາ ພັດຊິວ່າຈັ່ງຊັ້ນຈັ່ງຊີ້ໃຫ້ນ້ອງແລ້ວ.

- ເຂົາຊິວ່າຈັ່ງໃດ ມີແຕ່ວ່າອ້າຍນີ້ຊະລາແລ້ວ ບໍ່ສົນເອົາ ນ້ອງເປັນເມັຽ ເຂົາບໍ່ຖືວ່າອ້າຍ ວ່ານ້ອງ.

- ສຸວັນນີ ເວລານັ້ນກໍຫ້ວງໄປວ່າ ຣວ້າຍ ອ້າຍສີທົນລູກ ເຈົ້າຕື່ນແລ້ວເດ !

## ໗. ທົ່ດົງສັ້ງວອນ

- ຄໍາຈັບລຸກຂຶ້ນມາ ທັງຄວາເຄັງຫງ່ວພຸ້ນພໍ້ເປັນຊຶງລຶງ.

- ສີທົນຈົ່ງທ້ວງວ່າ ທື່ເບິ່ງດູ ! ມັນບໍ່ຄຶດນຳຫຍັງແຫຼະ ມັນຄຶດແຕ່ແນວຊິບັດໃສ່ປາກມັນຫັ້ນແຫຼະບັກອັນນີ້. ເອົາມາພໍ ໆ ສຽງປືນໃຫ່ຽມັນກໍບໍ່ໄດ້ຍິນ ບາດວ່າສຽງສິບເຫງົ້ລະໜ້ອຍດຸດມື້ນ ຕາໂພ້ໂວ້ຂຶ້ນໂລດ.

- ສຸວັນນີວ່າ ແຕ່ອ້າຍບັງນ້ອຍກໍ່ຊິຄືກັນຫັ້ນແລ້ວ. ຣີບມາ ບັກຫຼ້າ ເຈົ້າຊອກຫາຫຼັງມຸ້ງຫວະ ເປັນຣິນຂຽວໃດນີ້ນີ້. ພໍ່ເຈົ້າ ພວມກິນແລງ ຣີບມາຄັນເຈົ້າຊິກິນນຳເພິ່ນນະ. ຮູ້ວ່າຈະຊິແອ່ວກິນ ສາວກໍໄດ້ແບ່ງໄວ້ໃຫ້ນີ້ເດ ! ສາວບັງບໍ່ໄດ້ແຕະໄດ້ຕ້ອງຈັກດີ້ ສ່ວນ ຂອງເຈົ້ານັ້ນ.

- ສຸວັນນີມາກິນພ້ອມກັນບາ (ສີທົນເວົ້າວ່າ) ຄັນຊັ້ນອ້າຍ ກໍ່ຊິບໍ່ກິນຊ້ຳໃດນີ້ ຄືວ່າອ້າຍໂລພາສາລະໂນກເອົາແທ້ ນ້ອງຈິ່ງອິດ ປູ່ອິດກິນຍ້ອນ ອື ! ບໍ່ກິນຊ້ຳດອກ ຄັນນ້ອງບໍ່ກິນພ້ອມນະ ລູກອ້າຍ ກໍ່ຊິບໍ່ໃຫ້ມັນກິນຄືກັນ.

- ຊ່າງເທາະອ້າຍເອີຍ ຕາມແຕ່ສອງຄົນນ້ອງເພາະ ຄັນ ປາກຫາກຊິພາກັນກິນ ນີ້ນ້ອງບໍ່ປາກ ບັງປາກຕັ້ງແຕ່ບ່າວຄໍາ

ຈັບອ້າຍຫັ້ນແຫຼະ ເບິ່ງແມ ເບິ່ງມັນກິນຫັ້ນແມ ເປັນໜ້າແຊບ ໜ້ານົວແທ້ ໆ ກໍ ໃຫ້ມາຄືຊິສູ້ວງກດັບການບໍ່ປອກແລ້ວ.

- ທີ່ຈິງຄຳຈັນກໍໄດ້ສະແດງກິລິຍາທ່າທາງໃຫ້ເຫັນວ່າລູກເສືອກໍເປັນເສືອ: ພໍກິນອີ່ມມາຍັງຄວາເຄີງ ບໍ່ທັນຮູ້ສຶກວ່າຕົນຢູ່ໃສ ເປັນຢ່າງໃດກໍໃດກັດຕ້ວຍ ໆ ໂລດ ເມື່ອອີ່ມແດ່ແລ້ວກໍມີນານະອຶ້ນດັ່ງລັດທິເດັກນ້ອຍທັງປວງ ແລ້ວກໍສະແວງປາກຮູ້ປາກເຫັນ ສະຕິແລະຄວາມຄຶດກໍລັ່ງໄຫຼອອກມາກວ່າເວລາທັມມະດາແລ້ວ ກໍຖາມຫາເຫດການ ບ່ອນຢູ່ທີ່ກິນໃນປັດຈຸບັນ ເມື່ອເຂົ້າໃຈວ່າຕົນຢູ່ກາງປ່າແລ້ວກໍຍິບຖ້າມ ແລະຖາມພໍ່ວ່າ ໃນປ່ານີ້ ມີເສືອບໍ່ ?

- ພໍ່ຈຶ່ງຕອບວ່າ ບໍ່ມີດອກ ປ່າປ້ານ.

- ລູກເວົ້າໄປອີກວ່າ ພວມຫັ້ນພໍ່ຍັງວ່າມີຫັ້ນເດ ຄັນວ່ານ້ອຍມານຳຮອດກາງປ່າ ໝາໃນຊິເຈາະຕາພໍ່ວ່າຊັ້ນກໍ ?

- ສີທົນແກ້ບໍ່ໄດ້ກໍເວົ້າໄປວ່າ ເບິ່ງດູໂອຫານມັນນັ້ນ.

- ສຸວັນນີຕ້ອຍໄປວ່າ ມັນກໍແມ່ນຕວາ ອ້າຍກໍໄດ້ເວົ້າອີຫຼີຫັ້ນແລ້ວມັນຈິ ດີ ໄດ ແຕ່ ນີ້ບັກຫຼ້າໃຫ້ເຈົ້າເຂົ້າໃຈໄວ້ວ່າ ພໍ່ເຈົ້າບໍ່ຕົວະຈັກເທື່ອ. ເມື່ອເຈົ້າຍັງນອນຫຼັບ ໝູ່ເຮົາກໍໄດ້ຜ່ານດົງໃຫ່ງມາດຽວນີ້ເຮົາຍັງຢູ່ໃນດອນນ້ອຍ ໆ ບ່ອນນີ້ບໍ່ມີສັດຮ້າຍດອກ.

- ດອນນ້ອຍໄກດົງໃຫ່ງແທ້ຫວະ (ຄຳຈັນຖາມ)

- ໄກເຕີບ (ສຸວັນນີຕອບ) ແຕ່ໝາໃນບໍ່ທ່ອນອອກຈາກດົງ

ໃຫ່ງມາຈັກເທື່ອ ຄັນມັນອອກມາພໍ່ເຈົ້າກໍຂ້າເອົາຊັ້ນຕາວ.

- ສາວກໍຊິຂ້ານໍາຫວະ ?

- ພ້ອມກັບຂ້ານີ້ໝົດຊູ່ຄົນແຫຼະ ເຈົ້າກໍຊິຊ່ວຍຂ້າຕາວປັກຫຼ້າ ເຈົ້າກໍບໍ່ປ້ານໃດເນາະ ຄັນມັນມາເຈົ້າກໍຕີປົວະ ໆ ເອົາຊັ້ນຕາວ ເນາະ.

- ຖ້າຈັບອວດຕົວະຂຶ້ນອີກວ່າ ເອົາມັນໂລດຫັ້ນແລ່ວ ຄັນມັນມາ ເຮົາພ້ອມກັບຂ້າເນາະສາວ.

- ສີທົນເອົ້າຕໍ່ສຸວັນນີວ່າ ບໍ່ມີໃຜຊ່າງເວົ້ານໍາເດັກນ້ອຍຄືນ້ອງຈັກຄົນດອກ ສຸວັນນີນ້ອງຫາກໍ່ສອນສາວ ສົມພໍນ້ອງຈື່ຄວາມເລົ່າໂລມຂອງແມ່ນ້ອງຫັ້ນແຫຼະເນາະ ຜູ້ໜຸ່ມຊ່າງເວົ້ານໍາຜູ້ນ້ອຍກໍ! ສາວແກ່ແມ່ໜ້າຍ ອ້າຍດຸດປ້ານບໍ່ເປັນຈັ່ງຊີ້ ປ້ານແຕ່ບໍ່ຮູ້ໜ້າວຽກຂອງແມ່ເຮືອນຫັ້ນແຫຼະ ຈັກໜ່ອຍດຸດເລົ່າໂລມອື່ນອອຍລູກເລັກເດັກນ້ອຍ ກໍປ້າຍບໍ່ເປັນຊໍ້າ ອ້າຍວ່າ.

- ເຫດໃດຈຶ່ງວ່າຊັ້ນ ສັງຊ່າງເວົ້າປມາດຜູ້ທີ່ຕົນຈະໄປສົນສູ່ເຖິງພຽງນີ້.

- ເອົາແຫຼະ ປ່າເອົ້າເຖິງຍິງຜູ້ນັ້ນເທາະ ຊິປາກໄດ້ເຮັດຫັງງ ບຶງບໍ່ເຄີຍໄດ້ເຫັນໜ້າກັນຈັກເທື່ອນັ້ນ. ດຽວນີ້ອ້າຍປາກໄປໃຫ້ມັນຮອດມັນເຖິງຊ້ຳສາ ຈັ່ງຊິບໍ່ໄດ້ໄປອີກຈັກເທື່ອ.

- ຄຳຈັບຕ້ອບໄປວ່າ ເປັນຫັຽງພໍ່ຈຶ່ງເວົ້າຫາແຕ່ເມັຽ ໆ ດຽວວ່າເມັຽພໍ່ຕາຍແລ້ວ.

- ໂອຍລູກເອີຍ ລູກຍັງບໍ່ລືມແມ່ເຈົ້າຜູ້ພັດພາກຈາກໄປແທ້ນໍ.

- ລູກຍັງບໍ່ລືມ ຂອງວ່າລູກເຫັນເພິ່ນເອົາແມ່ລູກໃສ່ໃນຫີບຂາວ ໆ ງາມ ໆ ນັ້ນປູ່ ແລ້ວແມ່ເຖົ້າເພິ່ນຈູງລູກໄປຫາເອົາດິນແປະໃສ່ຫົວ ພວມນັ້ນ ແມ່ດຸດຂາວ ໆ ໜາວ ໆ ແລະແລງໃດແມ່ປ້າກໍໄດ້ພາລູກສາທຸ ໆ ເທວະດາ ໃຫ້ພາແມ່ໄປຢູ່ເທິງຟ້າຢູ່ເດືອນພຸ້ນພໍ່, ແມ່ເຮົາໄດ້ຢູ່ພຸ້ນອີຫຼີ ຫວະ ?

- ພໍ່ກໍປາຖນາປາກໃຫ້ແມ່ຂອງລູກ ເຖິງທີ່ພຸ້ນຫັ້ນແລ້ວ. ລູກເອີຍ ແຕ່ເຮົາຕ້ອງໄຫວ້ວອນເຖິງປູ່ສເມີ ແມ່ລູກຈຶ່ງນຶກວ່າລູກຮັກແລະນັບຖືເພິ່ນຢູ່ທຸກເວລາ.

- ລູກຊິນັບຫາເພິ່ນ ຊຸ້ນນະແລງມື້ ນີ້ດຸດລືມໄປ ແຕ່ລູກຈົ່ມຜູ້ດຽວບໍ່ໄດ້ ໃຫ້ບ້າສາວສຸວັນນີພາເວົ້າແດ່.

- ມາບັກຫຼ້າ ສາວຊິພາໄຫວ້ພຣະ ມາຄູ່ເຂົາລົງຕັກສາວນີ້.

- ເມື່ອນັ້ນ ເດັກກໍຄູ້ເຂົ່າລົງເທິງຕັກນາງສາວ ແລ້ວເອົາມືນ້ອຍນັບແລະວ່າໄປ ແຕ່ຫົວທີກົຈົ່ມໄປໂດຍຄວາມລະວັງຕັ້ງໃຈດ້ວຍຈື່ຄັກໃນຕອນວັນ ກາຍນັ້ນກໍສຸດຮ້າຍໄປເປັນສິງໃສ ແລະໄດ້

ຈະສຸດບິດທີ່ໃດແຮງຊ້າເຂົ້າ ໆ ເວົ້າໄດ້ແຕ່ເທື່ອລະຄຳຕາມສົບບາງສາວໄປ ເມື່ອເຖິງບັ້ນທຸກບັ້ນປາກ ເດັກນັ້ນກໍ່ເຊື່ອບຫຼັບໄປ ແລະມຸບຫົວເຂົ້າວ່າງເອິກຂອງນາງສຸວັນນີ ແລ້ວມືນັ້ນກໍ່ຄ່ອຍ ໆ ມາຍອອກ ແລະຕົກຫງາຍລົງເທິງຫົວເຂົ່າຕົນເອງ.

- ເມື່ອນັ້ນແສງສວ່າງຂອງກອງໄຟກາງກາດ ກໍ່ຮຸ່ງສ່ວນທົ່ວໄປ. ສີທົນກໍ່ຈຶ່ງເບິ່ງລູກຂອງຕົນດັ້ງແບງເທວະດານ້ອຍທີ່ທອດກາຍລົງວ່າງອາງຂອງນາງສາວ ຊຶ່ງເວລານັ້ນກຳລັງລະຜົມຜິວຂຽວເທົາອ່ອນ ອັນຈິ່ງກີສນານາລາລິດອອກເມື່ອຂາງໄຟ. ສີທົນກໍ່ອ່ອນນ້ອມຄ້ອມຈິດເຖິງພຸທສາສນາ ແລະຈິດວິງວອນເຖິງຄຳຜົວຂອງຕົນສີທົນໂຍບບັ້ງລົງໂດຍມຸທຸຈິດ ທັງຊອກຫາຂໍ້ຄວາມເພື່ອສະແດງກະຕັນຍູຕໍ່ນາງສຸວັນນີ ຊຶ່ງໄດ້ທຳຄວາມຮັກພັກດີຕໍ່ຕົນ ແຕ່ປາກບໍ່ອອກ ໄດ້ແຕ່ທັງບເຂົ້າຫານາງ ແລ້ວຄວາຈູບຈອມຂວັນລູກຂອງຕົນທີ່ຢູ່ໃນອາງຂອງນາງສາວ ແລ້ວກໍ່ສລົບກັບໄປເປັນຊົ່ວຄາວ ຈົນແກະລົບອອກຈາກຈອມຂວັນລູກຂອງຕົນກໍ່ເບື້ອນຍາກ.

- ສຸວັນນີທັງເວົ້າທັງຄ່ອຍປູ້ສີສະສີທົນອອກວ່າ ຢ່າກອດມັນແຮງຫຼາຍມັນຊີວົນ ປະໃຫ້ນ້ອງເອົາມັນນອນ ເຫັນບໍ່ມັນພອນເຊື່ອບຊາບຝັນເຖິງສວັນພົບຢູ່ດຽວນີ້.

- ແລ້ວສຸວັນນີກໍວາງເດັກລົງ ແຕ່ເມື່ອທອດກາບລົງເທິງໜັງຟານອ່ອນທີ່ສຳລັບຮອງຫຼັງມ້ານັ້ນແລ້ວ ຄຳຈັນກໍສະດຸ້ງຕື່ນແລະຖາມວ່າ ແມ່ນປູ່ເທິງຫຼັງມ້າຫວະ ແລະຫາງຕາກໍເຜີເບິ່ງເຟືອນໄມ້ໃບລະວ່າງນຶ່ງບາທີ ໂດຍບໍ່ພົບຕາ. ເມື່ອຮູ້ສຶກຄັກແນ່ ແລະຈຳໄດ້ຍັງເຫດການທີ່ຕົນໄດ້ຜ່ານມາໃນຕອນວັນ ອັນພາໃຫ້ເຊື່ອນຫຼັບໄປນັ້ນກໍເວົ້າໄປອີກວ່າ ພໍ່ຂ້ອຍເອີຍຄັນພໍ່ຊິເອົາເມັຽໃໝ່ຢ່າລືມນ້າສາວສຸວັນນີເນີ.

- ແລ້ວ ໂດຍບໍ່ຄອຍຖ້າຄວາມຕອບຖາມປະການໃດ ໆ ຄຳຈັນກໍເຊື່ອນຫຼັບໄປອີກ.

## ໗. ຫນາວນ້ຳຫມອກ

- ນາງສຸວັນນີບໍ່ໄວ້ໃຈຍັງວາຈາອັນແປກປລາດ ທີ່ຫຼຸດອອກມາຈາກສົບຂອງເດັກ ແຕ່ນາງຫາກຖືເອົາຍັງຄວາມໄວ້ເນື້ອເຊື່ອໃຈຕໍ່ກັນແລະກັນ. ນາງອຸ້ມເອົາເດັກໂດຍຄວາມພາກພຽນ ທັງລຸກທ່ຽວໄປມາເພື່ອຮັກສາຟືນໄຟໃຫ້ຮຸ່ງສເມີ. ເມື່ອເຫັນວ່ານ້ຳຫມອກອັນເລື່ອນລອຍຢູ່ເທິງໜ້າໜອງທີ່ຢູ່ຄຽງນັ້ນ ຍັງບໍ່ທັນເສື່ອມຫາຍເທື່ອ ນາງຈຶ່ງບອກສີທັນມານອນເສັ່ງທີ່ຂອກຂ້າງກອງໄຟ ແລ້ວເວົ້າໄປວ່າ. "ນ້ອງປ້ານອ້າຍຊິເປັນຄືເກົ່າ ເພາະອ້າຍຊິງລຶງຢູ່ບໍ່ປາກ ແລະແສງຕາກໍເກີເບິ່ງແຕ່ແປວໄຟ ຄືລູກຂອງອ້າຍວ່ານີ້ງັ້ນ. ມາ, ມານອນສາເປີ ນ້ອງຊິເປັນຜູ້ຮັກສາລູກແລະອ້າຍເອງດອກ.'

- ພໍ່ນາຕອບໄປວ່າ: ໃຫ້ນ້ອງຫັ້ນນອນ ອ້າຍຊິເປັນຜູ້ເຝົ້າພວກເຈົ້າທັງສອງ ເຖິງນອນກໍບໍ່ມີຫຼັບ 'ເພາະຮ້ອຍອັນພັນແນວຄືຫົວຢູ່ຮືດ ໆ ດຽວນີ້.

- ສຸວັນນີສຽດຄວາມໄປວ່າ; ຕາຍ ! ເປັນຮ້ອຍເປັນພັນພຸ້ນຫວະ ໂພດດອກ ລາງຄົນຄິດແຕ່ແນວດຽວກໍຍັງຢູ່ໄດ້ຫັ້ນເດ.

- ຄັນບໍ່ເຖິງນັ້ນ ກໍຄົງມີແນວນຶ່ງຕິດສມອງຢູ່ແຕ່ຊົ່ວໂມງມານີ້.

- ນ້ອງຊິທວາຍເບິງເນີ ຄວາມຄຶດຂອງອ້າຍນັ້ນ ໃນຊົ່ວໂມງກ່ອນກັບດຽວນີ້.

- ເອີນ້າ ! ເອົາ ຄັນທວາຍຖືກນະ ສຸວັນນີ້ນ້ອງເວົ້າເອງແຮງຄັກ ເກີນດີໃຈສາແຫຼະ.

- ຊົ່ວໂມງກ່ອນນັ້ນອ້າຍຄຶດປາກກິນເຂົ້າ, ດຽວນີ້ອ້າຍຄຶດປາກນອນ.

- ສຸວັນນີ້ ນ້ອງຄຶດວ່າອ້າຍແມ່ນແມວກິນຫຍ້າຫວະ ຈັງແມ່ນເວົ້າສຽດເວົ້າສວຍໃຫ້ອ້າຍດອກນ້ອງກໍດີ ຮູ້ຈັກແລ້ວວ່ານ້ອງບໍ່ປາກເວົ້າປາກລິນນຳອ້າຍ ໄປນອນຊ້ຳສາໄປ ດີກວ່າຊິມາເວົ້າຫຼີ້ນສ້ອຍນຳຜູ້ງວ້າງຜູ້ເຫງົາຈັ້ງຊີ້.

- ສຸວັນນີ້ ພ່ອງນອນລີງຂອກຂ້າງເດັກ ພ່ອງໝູນສນະຫຼັງມ້າແລະເວົ້າວ່າ ຄັນປາກລິນກໍລິນດີ ອ້າຍພວມຫັນຫວາຍເນາະຊັ້ນ ສິທິນ ດິນຊາຍສັງຂີ້ໃບ່ຍແທ້ ນ້ອງກໍອຸກໃຈຢູ່ໝີວນີ້ດີກັບຫັ້ນແລ້ວ ຊິໃຫ້ນ້ອງເວົ້າຈັ່ງໃດອີກແດ່ ?

- ເອີ, ຈັ້ງວ່າຫັ້ນແລ້ວ ອ້າຍກໍດີນຳເຣືອງນີ້ແລ້ວນ້ອງເອີຍ ດ້ວຍວ່ານ້ອງກໍຈະພັດພາກຈາກແມ່ ໄປຢູ່ບ້ານເພີ່ນເມືອງທ່ານ ຖືກຮ້າຍຈ້າຍຫານ ທີ່ງລິ້ນນາສນີມເມືອຮອດຣະດູໄມ້ລົ່ນໃບເຫຼືອງ ນານງົວຄວາຍອຶດຫຍ້າອຶດຄານັ້ນ ອ້າຍກໍປ້ານນ້ອງເປັນໄຂ້ເປັນໜາວ ແລະເປັນທີ່ຄັບແຄ້ນແໜ້ນຫົວໃຈຂອງຜູ້ລ້ຽງຄວາຍ ຜູ້

ຍິນມັກຮັກວຽກ ແລະນ້ອງກໍຈະໄດ້ຢູ່ບຳຄົນຕ່າງດ້າວຂ້າວຕ່າງເຮືອນ ຜູ້ບໍ່ຮູ້ຮັກກະຣຸນາ. ອີກປະການນຶ່ງ ເຂົາກໍຈະບໍ່ຮູ້ວ່ານ້ອງເປັນຄົນຢ່າງໃດ. ນີ້ແລ້ວນ້ອງເອີຍ ຄັນບໍ່ເວົ້າເສັ້ງມັນກໍບໍ່ສວ່າງ ແລະອ້າຍກໍພໍປາກພານ້ອງກັບເມືອບ້ານຫາແມ່ຊ້ຳສາ ຍັງຊິດີກວ່າໄປຢູ່ບ້ານພະຂາວພຸ້ນ.

- ອ້າຍຄືດນຳຈັ່ງຊີ້ກໍດີແລ້ວ ແຕ່ຫາກເວົ້າບໍ່ແມ່ນນ້ອງວ່າບໍ່ຄວນຫາລືຄວາມອ່ອນຊ້ຳລ້າດອຍວໍ່ຜູ້ຮັກແພງກັນ ກວ່າຈະເລົ່າເຣື່ອງທຸກເຣື່ອງຍາກຂອງນ້ອງມາຈັ່ງຊີ້ ແທນງວ່າເລົ່າໂລມຄວາມດີຄວາມງາມ ຄືເມືອເຮົາຢູ່ບ້ານນາໄທຫັ້ນດີກວ່າ.

- ນ້ອງຊິໃຫ້ອ້າຍເວົ້າຈັ່ງໃດ ດ້ວຍວ່າພວມນັ້ນກໍມີຄວາມເຫັນຢ່າງນຶ່ງ ແລະດຽວນີ້ພັດປະກົດເປັນໄປຈັ່ງຊີ້ເດ; ແທນງວ່າຫາເອົາຜົວຊ້ຳເສັ້ງດີກວ່າ.

- ອຸ້ຍ ! ມັນຊິເອົາໄດ້ບໍ ນ້ອງຍັງຊີ້ແຈ່ງໃຫ້ອ້າຍຟັງຢູ່ເດ ແລະເມືອເຫັນວ່າເອົາບໍ່ໄດ້ແລ້ວ ນ້ອງກໍເລີຍບໍ່ຄິດຫາຊ້ຳ.

- ຄັນມີຜູ້ຊິເອົາເດຊັ້ນ ນ້ອງຄືດມັກຜູ້ຈັ່ງໃດເວົ້າເບິ່ງດູ ອ້າຍຄິດເຫັນຢູ່ຜູ້ນຶ່ງດຽວນີ້.

- ຄິດເຫັນຊື່ ໆ ບໍ່ແມ່ນມີແຜ້ ນ້ອງບໍ່ມີຄິດໃຫ້ມັນເມືອຍແລ້ວ.

- ຄັນຜູ້ນັ້ນຫາກເປັນຜູ້ຮັ່ງມີເດ ຊິເອົາບໍ່ ?

- ບໍ່, ບໍ່ເວົ້າແທ້ແລ້ວນີ້ ດ້ວຍວ່ານ້ອງທຸກຍາກ.

- ຄັນຜູ້ນັ້ນຫາກພໍປູ່ພໍກິນເດຊັ້ນ ຊິເອົາບໍ່ ? ຜູ້ເຂົາມີປ້າວ ມີເຮືອນ ມີພໍ່ແມ່ພີ່ນ້ອງ ໄດ້ປູ່ດີກິນດີນຸ່ງຖືດີ ແລະອະນຸຍາດໃຫ້ນ້ອງຊ່ວຍແມ່ນ້ອງນັ້ນຊິເອົາບໍ່ ?

- ໂອ໋ ຄັນເປັນຈັ່ງຊັ້ນກໍດີແລ້ວ ເພາະນ້ອງປາກຊ່ວຍແຕ່ແມ່ຂອງນ້ອງທ່ນັ້ນແລ້ວ.

- ສີທົນຕອບໄປອີກວ່າ ຄັນຫາກບຸນຮອດບອດກ້ຽວ ແລະຜູ້ນັ້ນຫາກບໍ່ແມ່ນຜູ້ບ່າວເດຊັ້ນ ຊິເອົາບໍ່ ?

- ຫື ! ຂໍອະພັຍນຳຫຼາຍ ໆ ເທາະບ່ອນນີ້ນະສີທົນ ນັ້ນນາກນຳແຕ່ບໍ່ປາກໄດ້ຜົວເຖົ້າຫັ້ນແລ້ວ.

- ເຖົ້າບໍ່ໜຸ່ມ ພໍ່ປານອ້າຍນີ້ເດຊັ້ນ.

- ອາຍຸພໍ່ປານອ້າຍກໍນັບວ່າເຖົ້າແລ້ວ ສ່ຳອາວສ່ຳລຸງແລ້ວ ບໍ່ດີບໍ່ ງາມປານອ້າຍກໍພໍປານນັກກີນັ້ນເທາະ ແຕ່ນັກກີກໍບໍ່ງາມຄືອ້າຍດອກ.

- ສີທົນເວົ້າໄປທັງວື່ນວິນວ່າ ນ້ອງດຸດມັກນັກກີລ້ຽງໝູຫັ້ນຫວະ ນັກກາບັນຄືກາສັດໂຕນັ້ນລ້ຽງຫັ້ນຫວະ ?

- ນ້ອງບໍ່ມັກເອົາດອກວາມັນນັ້ນ ນັບເອົາອາຍຸມັນພຸ້ນດອກ.

- ເມື່ອນັ້ນສີທົນກໍມີຄວາມທຶງຫວງຢ່າງຍິ່ງ ແລະເວົ້າໄປ

ວ່າ ເອີ, ມັກບັກກືກໍມັກສາ ຈັ່ງແມ່ນຄືດຕ່າງຊາດຕ່າງເຊັ່ນເພິ່ນ
ເນາະ !

- ສຸວັນນີເວົ້າໄປຫົງຫົວເຕີຫົວເຕີນຂຶ້ນວ່າ ຄືດຕ່າງຊາດ
ເພິ່ນຫັ້ນແລ້ວມັນຈຶ່ງໄດ້ພິວແປກປລາດ ໃຜຊິເຮື້ອງໄປຈັ່ງໃດກໍເຮື້ອງ
ສາ. ທັມມະຊາດນີ້ນັ້ນ ນ້ອງເກັບໝາກເວີໄດ້ໜ່ວຍນຶ່ງ ປູ່ໃນສວນ
ຈານຄູ ແລ້ວນ້ອງເວົ້າວ່າ ໂຫຈັ່ງແມ່ນໝາກກ້ຽງນ້ອຍໜ່ວຍງາມ
ເບິ່ງແມ ຄືຊິຫວານເອົາແທ້ ແລ້ວເພິ່ນບໍ່ທັນປອກຄັກປອກແນ່ກໍ
ກັດເອົາສາດວ້າຍ ໆ ປານພິຕາຍອຶດຕາຍປາກ ເບິ່ງເພິ່ນຫງີ່ ເພິ່ນ
ຫງໍ່ໆ ທັງແລບລີ້ນເຫຼືອກຕາວ່າຊັ້ນ ! ໂຫ ໆ ໆ ! ຈັ່ງແມ່ນເປັນ
ເຣີເປັນຮ້າຍ.

- ຊັ້ນກໍແມ່ນນ້ອງບໍ່ມັກລາວຈຶ່ງເປີຍຈັ່ງຊັ້ນ.

- ມັນບໍ່ເປັນຊັ້ນດອກ ບໍ່ມັກກໍຍ້ອນເຂົາຄືດຄວາມສົ້ມຄວາມ
ເຄັມໃສ່ນ້ອງສາວເຂົາ ເປັນຕາໜ່າຍ.

- ຄັນຊັ້ນ ນອກນັ້ນກໍບໍ່ມັກໃຜຈັກຄົນຫວາ ?

- ຈັກຊິຖາມໄປເປັນປໂຍດສັງ ສີທັນ.

- ບໍ່ເປັນປໂຍດກໍເວົ້າຫຼີ້ນໄປຊັ້ນແລ່ວ ຄືຊິແມ່ນນ້ອງຄືດ
ບາເຈົ້າຮູ້ຜູ້ໃດຜູ້ນຶ່ງດີເນາະ.

- ເຊົາ ໆ ສີທັນ ອ້າຍຄືດຜິດດອກ ນ້ອງບໍ່ທັນປາກໄດ້ຍ້າງ

ວ່າ ຫຼື ວ່າເນື້ອໜ້າເນື້ອໃນ ເພື່ອຊອກຫາຊັບສິນເງິນທອງໄດ້ແດ່ເລັກນ້ອຍພຸ້ນບຸ ຄັນເອົາກໍຊິເອົາຜູ້ແກ່ຫັ້ນແລ້ວ.

- ເອີ ຊັ້ນ ຄັນຊິເອົາຜູ້ເຖົ້າຜູ້ແກ່ກໍເອົາຊ້ຳສາເດຽວນີ້.

- ບໍ່, ບາດແກ່ຕົນແກ່ໂຕໄປພຸ້ນດອກ ດຽວນີ້ໄດ້ບໍ່ໄດ້ກະໄວ້ຫັ້ນກ່ອນ ບໍ່ທັນປາກໄດ້ເທື່ອດອກ.

- ສີຫິນເວົ້າໄປໂດຍບໍ່ຈຽມສິບວ່າ ອ້າຍຮູ້ຈັກແລ້ວ ສຸວັນນີ ຄວາມນີ້ແຈ້ງປານຟ້າ ອ້າຍບໍ່ສົນນ້ອງດອກ.

- ເມື່ອນັ້ນສຸວັນນີມິດປູ່ບໍ່ປາກ ແລ້ວສີຫິນກໍຄ່ອຍຫັງບເຂົ້າແດ່ນາງຫຼັບແລ້ວ ເພາະສູ້ຄວາມປາກນອນບໍ່ໄດ້ ເໝືອນເດັກທັງປວງຊຶ່ງປາກຢູ່ ແດ່ຫາກນອນຫຼັບແລ້ວ

- ເມື່ອເຂົ້າໃຈວ່າສຸວັນນີບໍ່ໄດ້ຍິນ ຄວາມທີ່ຕົນເວົ້າບົດສຸດທ້າຍອັນບໍ່ຂອບນັ້ນ ສີຫິນກໍດີໃຈ ແລ້ວກໍປິ່ນຫຼັງໃສ່ນາງ ເພື່ອຄຶດໄປທາງອື່ນໃຫ້ສວ່າງໃຈ.

- ຈະປະພຶດໄປຢ່າງໃດກໍຕາມ ສີຫິນກໍນອນບໍ່ຫຼັບ ແລະບຸດໜິດຈິດທາດ ເຖິງຄຶດໄປຫາອາຈິນໃໝ່ ອາຈິນເກົ່າກໍປະເດັນຂຶ້ນສເມີ. ເຖິງລຸກໜີຈາກກອງໄຟໄປເປັນຊາວສາມສິບເທື່ອກໍຕາມ ກໍຫາກກັບມາປີ່ນສັ້ນປູ່ຍັກ ໆ ບ່ອນເກົ່ານັ້ນ ປານໄດ້ກິນງ້ວນ ແລ້ວກໍປີ່ນອີງຕົ້ນໄມ້ໃຫຍ່ ທີ່ຣິມເດັກໜຸ່ມທັງສອງພ່ອງສິ່ງເບິ່ງພວກເຂົານອນ. ເມື່ອນັ້ນສີຫິນກໍພິຈາຣນາໃນໃຈວ່າ "ແດ່ກ່ອນກູເປັນທັງງບໍ່

ຄິດພໍ້ສຸວັນນີນີ້ ຢູ່ໃນບ້ານກໍວ່າລາວນີ້ຜູ້ນຶ່ງຂນສາວ. ເປັນຜູ້ມີສີສັນວັນນະຈືດຈາງ ແຕ່ໃນໜ້າຫາກສົດໃສເໝືອນນາລາປ່າ. ໂອຍ, ເປັນໜ້າຊົມສອງຣີມສບແລະດວງດັງອັນນ້ອຍກົມນັ້ນເດ ! ອາຍຸປານນີ້ແລ້ວຍັງບໍ່ທັນຖອດຮ່າງເທື່ອ ແຕ່ເລົາຄືງອອດຫຼອດປານລູກນົກຂຸ້ມ ຮູບບາງຮ່າງເບົາເໝືອນນົກແຈນແອນ ເຫດໃດຊາວບ້ານຈຶ່ງເລືອງກັນຊົມເຊີຍແຕ່ສາວແຂ່ງໃຫ່ງໃຫຼ່ຫື້ມ ແລະສີແດງຊ້ານັ້ນຜູ້ນີ້ກໍເນື້ອບາງຮ່າງນ້ອຍແຕ່ເປັນໜ້າຊົມເຊືອຢູ່ ເບິ່ງເນື້ອໜັງກໍບໍ່ຊົງຄົນເປັນພຍາດພເຍົາມາ ແລະເປັນໜ້າຮັກໜ້າແພງຢູ່ດັ່ງລູກແກະເຜືອກ ! ອີກປະການນຶ່ງ ຫົວຄິດປັນຍາກໍບໍ່ໜີກັນກັບຄຳຜົວ ຄົນເອົາກໍຊິດີໃດ ຄືຊິໄດ້ເພິ່ງໄດ້ອີງ ຄືຊິບໍ່ໄດ້ຍາກອົກຍາກໃຈນຳ ຄືຊິພາຢູ່ຊຸ່ມກິນເປັນເຫົ້າ--- ນອກນັ້ນລາວກໍມີຈິດໃຈຊື່ນບານຢູ່ສເມີ ບໍ່ຮູ້ໂສກຍົນເຫງົາແລະຮູ້ຮອບຄອບລະວີອີກດ້ວຍ; ນີ້ເຫັນວ່າບໍ່ເປັນຄົນໂລບການ ຢູ່ກິນພໍພຽງຄວາມຕ້ອງການ ແຕ່ດຸໝັ້ນ ນີ້ກໍເປັນໜ້ານິຍົມເຫົ້າຈິງ ແລະເປັນໜ້າອັສຈັນອີກດ້ວຍ ຫາລົມນີ້ໄປຄືຊິບໍ່ມີແລ້ວ ອັນນີ້ບໍ່ເພິ່ນວ່າຍິງຖືກຄຳສອນນັ້ນ ! ພ່ອງເວົ້າພ່ອງອຸສາປິ້ນໜ້າໜີໄປທາງອື່ນ ແລະວ່າຄວາມອີກວ່າ ເຫດໃດກູຈຶ່ງມາກ່ຽວຂ້ອງນຳເຂົາຈັ້ງຊີ້ ພໍ່ເຖົ້າກູບໍ່ປາກເຫັນມາເປັນແນວນີ້ ແລະໃຫ້ເຮືອນໃຫ້ບ້ານກໍຊິວ່າກູເປັນບ້າແລ້ວ--- ອີກປ່າງນຶ່ງເຂົາກໍບໍ່ມັກກູ ໂອຍເນາວ່າເດັກນ້ອຍເນາະອັນນີ້ ! --- ເຂົາວີວ່າກູເຖົ້າແກ່ຊະລາການ

ແລ້ວວ່າຊັ້ນ--- ບໍ່ມີໃຜຊິເວົ້າຮອດຈອດເຖິງເຂົາ ແລະຄິດຍບວ່າເຂົາເປັນຄົນທຸກຈົນ ທີ່ຈິງເຂົາກໍ່ເປັນຄົນຍາກແຄນ ແຕ່ຮູ້ລະເວັ້ນຄວາມທຸກລຳບາກ ການນຸ່ງຖືກໍ່ເປັນອັນຂາດຫຍັງບອຶດປາກໝາກແຄນ ສູ້ຊົນໝັ່ນທຸກເພື່ອຫາຄວາມສຸກສະບາຍສິ່ງດຽວ ພໍ່ເປັນຊົ່ວນີ້ຊົ່ວດາວ. ເຖິງໄດ້ລູກໄດ້ຜົວເຂົາກໍ່ຈະເຮັດໃຫ້ລູກຜົວໄດ້ຄວາມສະບາຍບຳສເມີ--- ເວລານີ້ຄັນກູຫາກລຸກໄດ້ໄປເປັນຕາມໃຈຕົນເອງ ກູຄົງຊອກເມັຍເອົາເອງເປັນແຜ້ ດີກວ່າຫອບກະດູກໄປສົມສູ່ຊູ້ຫ້ອງປ່າງເສົ້າໝອງຈົ້ງຊື້.

- ຍິ່ງສີທົນພິຈາລະນາຫາສຽບ ຄວາມສົລວົນຍິ່ງຖົມມາແລ້ວລາວກໍ່ຍ່າງຫາຍໄປໃນໝອກນົວພໍ່ປະມານຊາວບາດຄືນ ແຕ່ບໍ່ຮູ້ເມື່ອວ່າ ຕົນຫຼົງກັບຄືນບ່ອນເກົ່າເທື່ອປານໃດ; ຫຼົງຄູ້ເຂົ້າລົງຂອກຂ້າງເດັກທັງສອງທີ່ກຳລັງນອນຈົ່ມຢູ່. ໃນຍາມດຽວນັ້ນ ເມື່ອເຂົາຊວ່ານໂຊມດົມຈູບລູກຊາຍທີ່ນອນກອດນາງສຸວັນນີຢູ່ ຍາມນັ້ນສີທົນກໍ່ສລົບໄປ ຈົນວ່ານາງສຸວັນນີສະດຸ້ງຕື່ນເພາະອາຍອຸ່ນຫາຍໃຈມາດາດແກ້ມຂອງຕົນ ນາງຈຶ່ງມືນຕາຂຶ້ນເບິ່ງທັງໜ້າຮາດ ແຕ່ບໍ່ຮູ້ວ່າແມ່ນຫຍັງ. ເມື່ອນັ້ນສີທົນຟ້າວຖອຍຫຼົງໜີ ໃນທັນທີທັງເວົ້າວ່າ ພໍ່ບໍ່ເຫັນຮຸ່ງລູກເອີຍ ! ເກືອບລົ້ມທັບໝູ່ເຈົ້າໃຫ້ເຈັບນໍ.

- ນາງສຸວັນນີບໍ່ຮູ້ວ່າຈະເຊື່ອໄປຢ່າງໃດ ເລີຍເຊື່ອນຫຼັບໄປອີກ ສ່ວນສີທົນກໍ່ບັ່ງນໄປຢູ່ຂ້າງກອງໄຟເບື້ອງໜ້າ ແລະສະບານ

ວ່າຈະບໍ່ຍ້າຍຈາກທີ່ຈິນຮອດຍາມນາງຕື່ນ. ແຕ່ເຖິງອິດກໍ່ເປັນການຍາກແສນເຕັນທີ ຈິນເກືອບເປັນບ້າ.

ທີ່ສຸດພໍທ່ຽງຄືນ ໝອກຊຸ້ນກໍຫວາງໄປແດ່ແລ້ວ ແລະສີທິນກໍມອງເຫັນດາວສົ່ງແສງໃສສ່ອງສັບຫວ່າງໄມ້ ພຣະຈັນກໍຄາຍຈາກເມກມົວແລະສົ່ງແສງແຈ່ມໃສ ມາກະຈາຍມຸມໝອກທີ່ປະດັບປາຍປູ່ຕາມບ່ອນຫຍ້າອັນຊຸ່ມອື່ນ ເໝືອນມະນີໃສຫວ່ານໄປເກັ່ຽຣະດາດ ປ່າໄມ້ຍັງຢືນຄືນຢູ່ໃນຄວາມມືດມົນ ແຕ່ທີ່ພຸ້ມຝູງພຸ່ມໄມ້ແລະເຟືອຍໃບກໍປະກົດເໝືອນເຜດຜີ ທີ່ລຸກຂື້ນຈາກກອງພອນ. ແປວໄຟກໍສົ່ງແສງຣະດາດຍາດໜ້າໜອງ ຝູງກົບຂຽດສົມເພາະອໍແອແຊສຽງເປັນເພືອງນັບ ງ່າພຸ່ມຄຸມເຟືອຍທີ່ເປັນອຸມຸງແຫ່ງຕົ້ນໄມ້ຕາຍຢືນທັງຫຼາຍ ກໍຫງຶ່ງເປືອກປາກພິດອັບມ້ານໜ້າຂື້ນ ທັງຕາກງ່າອອກຊື້ປາຍໄຂວ່ຂື້ນກັບປູເທົ່າສີສະຂອງຊາວພະເນຈອນ ດູເໝືອນແຂນຜີເຜດທີ່ມີຮ່າງກາຍຈ່ອຍຜອມ ທີ່ນັ້ນເປັນທີ່ສວາດສເວີຍແລະໜ້າຊົມເຊີຍ ແຕ່ເປົ່າປຽວກາຍໃຈຂອງສີທິນ ຈິນເລື້ອຍລ້າບ້າຈິດ ເຖິງລ້ອງລຳທຳເພງຂື້ນ ທັງແກວ່ງຄ້ອນກ້ອນຫີນລົງໃນນ້ຳເພື່ອຣະງັບຄວາມຢ້ານກົວໃນທີ່ສງັດກໍດີ ທີ່ຈິງເຂົາໝາຍປາກປຸກນາງລຸກເພື້ອນ, ແຕ່ເມື່ອຫຼຽວໄປກໍເຫັນນາງລຸກມາສ່ອງເບິ່ງໂອກາດແລ້ວ ເຂົາເລີຍເອີ້ນບອກນາງໃຫ້ຕຽມຕົວ ເພື່ອເດີນທາງຕໍ່ໄປໃນເວລານັ້ນວ່າ.

- ໃນສອງຊົ່ວໂມງອີກ ໃກ້ຈະແຈ້ງອາກາດແຮງຈະໜາວ ແລະເຮົາກໍຈະທົນບໍ່ໄຫວ ເຖິງຟືງໄຟກໍທົນປາກ ດຽວນີ້ເຮົາຕ້ອງໄປ ຂ້າງໜ້າເຮົານີ້ຈະພົບເຮືອນຫຼັງໃດຫຼັງນຶ່ງພໍຈະໄດ້ພັກເຊົາ ປ່າງນ້ອຍກໍຄົງມີທູບເລົ້າຫຼືດຽງນາເພື່ອຊຸນ ຊານຊາຮອດແຈ້ງ.

- ເມື່ອນັ້ນ ນາງສຸວັນນີກໍບໍ່ມີຄວາມແກ້ໄຂຢ່າງໃດ ເຖິງນາງຍັງທົວນອນປູ່ກໍວານ ນາງກໍຮີບຈັດແຈ່ງແຕ່ງຕົວເພື່ອໄປຕາມສີທົນ.

- ສີທົນຄ່ອຍອຸ້ມເອົາລູກບໍ່ໃຫ້ຕື່ນ ທັງເອົາສຸວັນນີພ້ອມຍ່າງ ດ້ວຍວ່ານາງບໍ່ຍອມເອົາຜ້າວຸ້ມຂອງນາງ ທີ່ຫົ່ມໃຫ້ຄໍາຈັນນັ້ນຄືນ.

- ເມື່ອນັ້ນທັງສອງກໍຍ່າງທຽມຂ້າງກັນໄປ ເວລານັ້ນສີທົນພວມຫາຍງ້ວງແລະຊຶມຊື່ນ ແຕ່ເມື່ອຮູ້ສຶກວ່ານາງຍ່າງບຽດຂ້າງຕົນ ຄວາມມຶນທຶນກໍເຕົ້ານາຕື່ນ ຈຶ່ງວ່າພີດໜີຈາກນາງເປັນສອງສາມເທື່ອ ປະໃຫ້ນາງຍ່າງຜູ້ດຽວ ແຕ່ເມື່ອຫຼຽວເຫັນນາງຍັງຍ່າງຊ້າຫຼັງເຂົາກໍປຸດປືນຖ້າ ເມື່ອນາງຫັງບມາໃກ້ຊິດເຂົາກໍກອດວຸ້ມເອົາຈົນໜິດແຮງ ຈຶ່ງວ່ານາງມີຄວາມເສັ່ງໃຈແລະອັສຈັນ ແຕ່ບໍ່ຫານປາກ.

- ທັງສາມກໍພາກັນຮ່າວໄປ ໂດຍບໍ່ຮູ້ແຫ່ງທາງໃດເລີຍ ຫຼັງກັງຄືນເຂົ້າວອນວັ່ງເດີນອີກ ຈົນຫຼຽວເຫັນທາມອັນເລີກກວ້າງ

ຫວ່າງເປົ່ານັ້ນຕື່ນ ເຂົາເຈົ້າກັບກ້ຽວວົນໄປມາຫາຮອບເກົ້າຢູ່ຢ່າງນັ້ນສເມີ ເມື່ອໄລເລໄປມາເປັນດົນນານ ຈິ່ງຫລຽວເຫັນແສງສວ່າງເຟືອບໄມ້ ແລ້ວສີຫົນກໍຫ້ວງໄປວ່າ.

- ເດ ! ດີແລ້ວເວີຍ ຫັ້ນເດເຮືອນຄົນ ເຂົາກຳລັງລຸກດັງໄຟບັງເດິກຢູ່ເນາະ ?

- ແຕ່ວ່າບໍ່ແມ່ນໄຟດັ່ງຄວາມຄຶດ ແມ່ນແສງໄຟກາງກາດທີ່ດີນຄຸມໄວ້ເມື່ອພາກໄປ ແລະເມື່ອລົມໜາວຕ່າວພັດ ກໍກັບລຸກຄືນອີກ.

- ເຂົາເຈົ້າໄດ້ພາກັນຍ່າງເປັນສອງຊົ່ວໂມງ ແລວກ້ຽວໄປວຽນມາ ຊ້ຳເຖິງແຕ່ທີ່ເກົ່າ.

24/VII
ຫ້າມຈຳໜ່າຍ

## ໙. ເມື່ອດາວຣະດາດຟ້າ

- ເມື່ອນັ້ນສີທົນກໍຮ້າຍຈົ່ມຂຶ້ນທັງທຶບດີນວ່າ, ເຈົ້າຊ້ຳດອກເປັນຈັ່ງຊີ້ ! ຈັ່ງໃດກໍມີແນວກຸ້ມເຮົາແລ້ວ ຄັນຊິໜີຈາກນີ້ ໄດ້ກໍແຈ້ງສວາຍພຸ້ນແລ້ວ ບ່ອນນີ້ເຫັນຊິມີ ຜີເຂັດຜີຂວງອີຫຼີ ດອກ.

- ເຈົ້າເທາະ ຢ່າຈົ່ມຢ່າວ່າຫຼາຍ (ສຸວັນນີຕອບ) ທາງເຮົາມີແນວໃດກໍຫາທີ່ເຮັດໄປ ມາດັງໄຟຂຶ້ນໃຫ້ມັນລຸກສາ ບັກນ້ອຍຂ້ອຍກໍກຸ້ມກອດໄວ້ດີແລ້ວເຫຼາະ ຢ່າວິກໃຈເທາະ ນອນກາງດາວຫາດຊາຍແກ່ຄືນດຽວ ກໍບໍ່ມີວ່າຊິໃຫ້ມັນເປັນອັນອື່ນຍ້ອນ. ອ້າຍເຊືອງວ່າງມ້າໄວ້ໃສ່ສີທົນ ລືມແລ້ວພັດວ່າ ? ຊ້າເພີ້ເອີຍ ບາວຊອກຫາມັນຈັ່ງງ່າຍແທ້ເດຫັ້ນ.

- ເອົາ ! ຕຸ້ມລູກໄວ້ຖ້າແດ່ ຊິໄປຊອກເອົາສະນອນມັນໃນພຸ່ມຫັ້ນມາ ບໍ່ມີ ໃຫ້ເຄືອງມືນ້ອງປານໃດດອກ.

- ສຸວັນນີຕອບໄປໂດຍສາມາດວ່າ ບ່ອນນອນກໍຢູ່ຫັ້ນເດ ! ເຄືອງມືທີ່ນັ້ນມັນຊິພໍເປັນຫຍັງ ບໍ່ມີປານບາດຫອກບາດງ້າວ.

- ເມື່ອນັ້ນສຸວັນນີກໍວິກແຕ່ງແປງສະນອນໃຫ້ຄຳຈັນ ຊຶ່ງເວລານັ້ນກຳລັງນອນຈົ່ມຢູ່ ແລະບໍ່ຮູ້ສຶກຍັງການເດີນທາງໃນຊົ່ວຄາວສີທົນກໍຂຶ້ນຟືນໃສ່ໄຟຈົນລຸກເຮືອງທົ່ວບໍລິເວນ, ແຕ່ນາງສຸວັນນີຊ່ວຍ

ເຂົາອີກບໍ່ໄດ້ ເຖິງວ່ານາງບໍ່ມີຄວາມຈິນວ່າລ້າເມື່ອຍກໍດີ ແຕ່ນາງຫາກລ້າຖອຍແລ້ວ ຈົນຈັ້ງບໍ່ຢູ່ ທັງໜ້າກໍມ້ານ ສົບກໍແຫ້ງ ແລະຕາງກະໂຕກໍສັ່ນໜາວກັບ ໆ ຈົນເນື້ອກາຍອ່ອນຍອບລົງປານຜັກໜຶ້ງ ເມື່ອນັ້ນສີທົນກໍຄ່ອຍໂຊມເອົານາງໄປຜິງໄຟ ເວລານັ້ນຄວາມຫງ່ວມເຫງົາເສົ້າໂສກ ຄວາມເມດຕາກະຣຸນາຄວາມອ່ອນນ້ອມ ກໍເຂົ້າຖືຈິດຂອງຊາຍໃຫ້ວັບເສັງ ບັງຄວາມຮ້ອນຮົນທາງຂັບ ເມື່ອນັ້ນວາຈາຂອງເຂົາກໍອ່ອນຫວານແລະກິເລດກໍສົ້ນໄປ ແລ້ວເວົ້າວ່າ.

- ສຸວັນນີເອີຍ ! ອ້າຍມາຮັກນ້ອງແທ້ເດ ແຕ່ຈົນໃຈນໍາແຕ່ນ້ອງບໍ່ຮັກຕອບທໍ່ນັ້ນແລ້ວ ຄັນນ້ອງຫາກຍອມເອົາອ້າຍເປັນຜົວເມື່ອໃດ ອ້າຍກໍຈະບໍ່ຕ້ອງໄດ້ຖາມພໍ່ເຖົ້າແມ່ເຖົ້າ ແລະຍາຕິວົງວານແລະຈະບໍ່ມີໃຜມາຫ້າມປາມອ້າຍໄວ້ໄດ້ ໃນການມອບວາງກາຍໃຈໄວ້ແກ່ນ້ອງ ອ້າຍເຂົ້າໃຈແລ້ວ ແນວໃດນ້ອງຄິງພາລູກເຕົ້າຂອງອ້າຍໄດ້ຄວາມສຸກຍ້ອນ ນ້ອງຄິງພາໃຫ້ພວກເຂົານັບຖືລືໜ້າແມ່ເຖົ້າເຂົາທຸກເມື່ອໄປ ແລະອ້າຍກໍຈະບໍ່ໄດ້ເປັນຫ່ວງປ່ວງໃຈປານໃດ. ຈະໄດ້ຢູ່ເປັນສຸກສໍາຣານຍ້ອນນ້ອງສເມີ ອ້າຍມີຄວາມໄຝ່ໃຈໃນນ້ອງທຸກເມື່ອ ແລະດຽວນີ້ອ້າຍກໍຄຶດຮັກມັກນ້ອງເຫຼືອທີ່ສຸດ ຄັນວ່ານ້ອງຄຶດໃຄ່ໄດ້ຮ້ອຍສິ່ງພັນແນວກໍຕາມ ອ້າຍຈະພິເຄາະຊອກໃຫ້ນ້ອງຈົນໝົດກໍາລັງ ອ້າຍຂໍສະບານວ່ອນພົມບົນຣາດເທາະ ຄັນບໍ່ເປັນດັ່ງນັ້ນແທ້ ຂໍໃຫ້ນ້ອງຄຶດເຫັນອ້າຍແດ່ທ້ອນ ແລະຂໍຈົ່ງເຂົ້າໃຈວ່າ

ຄວາມຮັກຂອງອ້າຍພໍພຽງໃດ ຂໍຢ່າເອົາອາຍຸສາມສິບນັ້ນມາເປັນກາງຫ້ອນນ້ອງເອີຍ ຄວາມນີ້ເຫັນຜິດໄປ ທີ່ຈິງອາຍຸອ້າຍກໍບໍ່ແກ່ປານໃດ ສາວທັງຫລາຍຍັງຄິງຄຶດວ່າອາຍຸຂອງອ້າຍລື່ນເຂົາພຽງສິບ ຫຼືສິບສອງປີທໍ່ນັ້ນ ຄວາມອຸປມາຂອງອ້າຍດັ່ງນີ້ກໍເຫັນວ່າຜິດຄອງໄປຢູ່ ແຕ່ອ້າຍໄດ້ຊາບຂ່າວວ່າປະເທດອື່ນບໍ່ຖື ໄປດັ່ງນີ້ ກົງກັນຂ້າມເຂົາຖືເອົາຜູ້ສາມາດກຸ້ມຄອງປ້ອງກັນ ແລະຊີດຊ່ວຍຜູ້ຍັງໜຸ່ມນ້ອຍຕໍ່ໄປໄດ້ຕລອດ ແລະຖືຜູ້ສັດຈິງກ້າຫານນັ້ນກວ່າອື່ນ ໆ ກວ່າຜູ້ຍັງໜຸ່ມຊຶ່ງມີກິຣິຍາເລວຊາມນັ້ນ ອີກປະການນຶ່ງຈະນັບເອົາປີເປັນອາຍຸກໍບໍ່ຄວນ ຄວນນັບເອົາກຳລັງບາກບັ່ນຫັ້ນມັ້ງນັ້ນເຫັນດີກວ່າ ເມື່ອຄົນຜູ້ໃດຜູ້ນຶ່ງ ຫາກຊຸດໂຊມຮ່າງກາຍລົງເພາະພຍາດພເບົາ ຫຼືປະພຶດຈິດໃຈໄປທາງທຸຈຣິດ ຄົນນັ້ນເຖິງຈະເຖົ້າຊະຣາກ່ອນອາຍຸໃນຊາວປີ ແຕ່ອ້າຍນີ້--- ຣວ້າຍ ! ນ້ອງດຸດບໍ່ຟັງເພາະສຸວັນນີ.

- ບໍ່, ນ້ອງເອົາຫູໃຕ່ງຢູ່ສີຫົນ ແລະໄດ້ຍິນຄັກທຸກຂໍ້ຄວາມແຕ່ນ້ອງຄຶດເຖິງຄວາມສັ່ງຂອງແມ່ນ້ອງວ່າ ຄັນເມັຽມີອາຍຸຫົກສິບ ຫຼື ຫົກສິບຫ້າປີແລະຜົວມີອາຍຸເຈັດສິບ ຫຼື ເຈັດສິບຫ້ານັ້ນ ຜູ້ເປັນເມັຽຕ້ອງໄດ້ທຸກລຳບາກເມື່ອເຖົ້າ ດ້ວຍວ່າເວລານັ້ນ ຜົວທຳມາຫາກິນກໍບໍ່ໄດ້ແລ້ວ ແລະຈຳເປັນຕ້ອງງົມງົວຫາລ້ຽງຊີບ ເປັນອະກຸສົນຢູ່ໃນເວລາໃກ້ຈະຕາຍ ແລະຄົນທັງຫຼາຍມັກຕາຍແຕ່ດົນແກ່ໜ້າກໍເພາະດັ່ງນີ້ແລ້ວ.

- ພໍ່ແມ່ໂບຮານເວົ້າດັ່ງນີ້ກໍແມ່ນ ອ້າຍກໍເຫັນຖືກຢູ່ສຸວັນນີ

ແຕ່ເພີ່ນຫາກເຄີຍລະເຫຼີງໂພດ ໃນເມື່ອບ້ານີເຫື່ອແຮງ ເມື່ອບ້ານີໂອກາດດີ ຊຶ່ງຄວນຂີນຂວາຍໄວ້ເພື່ອເຖົ້າແກ່ຊະຣາ. ແຕ່ອ້າຍນີ້ເຖິງເຖົ້າແກ່ຊະຣາ ກໍຄືຈະບໍ່ທຸກຍາກລຳບາກເຖິງພຽງນັ້ນດອກ ເພາະດຽວນີ້ອ້າຍກໍໄດ້ທ້ອນໂຮມໄວ້ແດ່ແລ້ວພໍສົມຄວນ. ເມື່ອປູ່ກັບພໍ່ເຖົ້າແມ່ເຖົ້າ ອ້າຍກໍໄດ້ສູ້ອຸກກະທຳການເປັນອັນມາກ ແລະບໍ່ໄດ້ຈັບຈ່າຍໃນທາງເປົ່າດາຍ ທີ່ຈິງຄວາມຮັກມັກນ້ອງຫາທາງປຽບບໍ່ໄດ້ແລ້ວ ! ແລະສເນຫານີ້ອາດທຳໃຫ້ອ້າຍໜຸ່ມບ່າວລົງກວ່າເກົ່າອີກ. ທັງຫຼາຍເລົ່າລືວ່າ ຜູ້ທີ່ມີຄວາມສຸກສຳຣານກາຍໃຈນານເຖົ້າແລະເມື່ອຮັກນ້ອງເປັນດັ່ງນີ້ແລ້ວ ກາຍໃຈອ້າຍກໍຊຸ່ມບານ ແລະອ້າຍຮູ້ສຶກວ່າອ້າຍຄົງໜຸ່ມກວ່າບັກກີ ຊຶ່ງບໍ່ຮູ້ຮັກນ້ອງເພາະຄວາມໂງ່ຂອງມັນນັ້ນ ແລະໂດຍຄວາມອ່ອນເດັກຂອງມັນ ໆ ຈຶ່ງບໍ່ສ່ອງເຫັນວ່ານ້ອງເປັນຄົນດີຄົນງາມແລະຫາຍາກ. ສຸວັນນີເອີຍ ປ່າຟ້າວຄຽດຟ້າວຊັງອ້າຍຫຼາຍເນີ ແລະອ້າຍກໍບໍ່ໄດ້ເວົ້າຫັງງພໍພິດອົກພິດໃຈນ້ອງດອກ. ແຕ່ກ່ອນອ້າຍກໍໄດ້ພາຄຳພໍສຸກສະບາຍ ແລະເມື່ອເຂົາຫຼັບຕາໄປ ເຂົາຄົງໄປໂຂດໍ່ຈ່າຍົມພີບານ ວ່າອ້າຍໄດ້ເພື່ອນພາເຂົາຢູ່ໃນຄວາມຜາສຸກສຳຣານສົ້ນຊີວິດ. ແລະໃນເວລານັ້ນເຂົາກໍໄດ້ບອກອ້າຍຫາເມັຽໃໝ່. ອີກແລງວານນີ້ປະກົດວ່າຄຳພໍມາບັນດານໃຈຄຳຈັນອີກເມື່ອມັນເຊືອບຫຼັບ ,ວ່າຈັ່ງໃດນ້ອງກໍຄົງໄດ້ຍິນແລ້ວ ? ໃນເມື່ອສິບນ້ອຍມັນເໜັງ ແລະແສງດາວນັກກະດ້າງເບິ່ງຟ້າປູ່ນັ້ນ ເຮົາ

ທັງສອງບໍ່ຮູ້ບໍ່ເຫັນນຳໃດ ? ປະກົດວ່າມັນເຫັນແມ່ມັນອີຫຼີ ແລະ ແມ່ມັນເອງຄືງປາກໄດ້ນ້ອງເປັນຜູ້ສືບແທນ.

- ສຸວັນນີມີຄວາມອັສຈັນແກ່ທວນເວົ້າໄປວ່າ, ເຖິງນ້ອງມັກຮັກອ້າຍກໍເປັນການຊອບທັມແທ້ແລ້ວ ດ້ວຍວ່າຄວາມເວົ້າອ້າຍນັ້ນລ້ວນແຕ່ຄວາມສັດຈິງ ແຕ່ປ້ານພໍ່ແມ່ພີ່ນ້ອງບໍ່ຍິນດີນຳ ຊິໃຫ້ນ້ອງເຮັດຈັ່ງໃດ ທາງຮັກທາງແພງກໍຮັກກໍແພງຢູ່ແຕ່ປຸນຊິເອົາ ! ອ້າຍເປັນຜົວບໍ່ໄດ້ ແລະຈິດໃຈຂອງນ້ອງບໍ່ປະກອບໃຫ້. ເຖິງອາຍຸອ້າຍແກ່ແລ້ວຮ່າງກາຍອ້າຍຫາກຍັງໜຸ່ມ ພາໃຫ້ນ້ອງຈຽມແລະນັບຖືເໝືອນລຸງອາວຫຼື ພໍ່ລ້ຽງພຸ້ນແລ້ວ ບາງທີອ້າຍກໍຍັງເອີ້ນນ້ອງເປັນນ້ອງສາວຫຼື ຫຼານສາວຢູ່ ກວ່າການນັບຖືວ່າເປັນຊູ້ຫຼື ເມັຽ. ທີ່ສຸດເພື່ອນຝູງຂອງນ້ອງກໍຈະດູໝິ່ນດູແຄນ ເຖິງບໍ່ຫົວຊາບັງຄວາມຫຽາບຊ້ານັ້ນກໍດີ ເຖິງວັນແຕ່ງດອງຄອງມຸງຄຸນ ນ້ອງກໍເຫັນຈະມີຄວາມອັບອາຍຂາຍໜ້າເປັນແທ້.

- ແມ່ນຄວາມເຫັນຂອງເດັກນ້ອຍດອກອັນນີ້ (ສີທົນຕອບ) ຈັ້ງແມ່ນເຈົ້າເວົ້າຄືເດັກນ້ອຍເນາະ ສຸວັນນີ.

- ເອີ ! ນ້ອງເປັນເດັກນ້ອຍຫັ້ນແລ້ວ ຈິ່ງຈຽມຜູ້ມີຄວາມຊອບທັມ ອ້າຍກໍເຫັນຢູ່ຕວານ້ອງເປັນເດັກນ້ອຍ ສົມພໍອ້າຍຈິ່ງວ່ານ້ອງເປັນເດັກບໍ່ຮູ້ຈັກຄວາມຫັ້ນແລ້ວ ! ນ້ອງບໍ່ທ່ອນຮູ້ຈັກຄວາມບໍ່ຜູ້ມີອາຍຸແກ່ກວ່າກິນຈັກເທື່ອ

- ໂອຍ ! ເທວະບຸດເທວະດາເອີຍ ! ຈົ່ງແມ່ນເວົ້າແກ້ເວົ້າປົດເນາະ ສຸວັນນີເອີຍ ຈົ່ງຊັ້ນກໍບໍ່ແມ່ນເຈົ້າຮັກຂ້ອຍທີ່ນັ້ນແລ້ວ ຄັນຮັກແຕ່ກໍບໍ່ມີວ່າຈະຕິດງຽບພ້ຽນຄວາມເປັນຈັ່ງຊີ້ ອັນນີ້ແມ່ນຊັງກັນດອກ.

- ສຸວັນນີເສັງໃຈວ່າສີທົນເອັ້ນເຈົ້າ ໆ ຂ້ອຍ ໆ ຈຶ່ງຕ້ອຍຄວາມໄປວ່າ, ຮວ້າຍ ! ນີ້ກໍບໍ່ແມ່ນໂທດຂອງນ້ອງ ນ້ອງກໍພິຈາຣະນາຟັງປູ່ນີ້ແລ້ວ ແຕ່ຄຶດໄປທີ່ໃດບຶ່ງປຸນຊີເອົາອ້າຍເປັນຜົວບໍ່ໄດ້.

- ສີທົນບໍ່ຕອບຄວາມໃດ ເຂົາເອົາຫົວມຸບເຂົ້າສອງຫວ່າງຝ່າມື ແລະນາງບໍ່ຮູ້ວ່າສີທົນນ້ຳຕາໄຫຼໃຫ້ໂສກຫຼື ຄຽດຂຶ້ນຢ່າງໃດຫຼື ນອນຫຼັບຢູ່ກໍບໍ່ຮູ້. ເມື່ອນາງເຫັນເພື່ອນທາງເຫງົາດັ່ງນັ້ນກໍໝອງໃຈ ຫຼື ວ່າສີທົນຄຶດໄປຢ່າງໃດກໍບໍ່ຊາບ ແຕ່ນາງບໍ່ຫານຕິງຫຼື ຕໍ່ຄວາມໄປອີກ, ເມື່ອເຫັນເປັນຄວາມອັສຈັນຕັນໃຈດັ່ງນັ້ນແລ້ວ ນາງກໍນອນບໍ່ຫຼັບ ແລ້ວນາງກໍນັ່ງຄອງຖ້າໃຫ້ແຈ້ງໂດຍຄວາມຣີບຮ້ອນຄ່ອຍດຸນອມຟືນໄຟໃຫ້ມີແສງຢູ່ ແລະຄອຍຮັກສານົວຣະບັດເຝົ້າຖ້າ. ເຖິງນາງພາກພຽນປິ່ນປົວບົວລະບັດດັ່ງໃດກໍດີ ສີທົນກໍຄືຈະບໍ່ເຫັນແລະຈື່ຈຳໄດ້ຄວາມເປັນໄປໃນທ່ວງທີ. ທີ່ຈິງສີທົນບໍ່ຫຼັບ. ບໍ່ວກຄຶດເຖິງອາການທີ່ໄດ້ຜ່ານມາ ແລະບໍ່ມຸ່ງໝາຍໄວ້ເນື້ອໃນການຈະປະພຶດຕໍ່ໄປອີກຢ່າງໃດ ຫຼື ຈະລອງນົວະເຍົ້າເລົ້າໂລມນາງອີກ ກໍບໍ່ໃຊ່ການ. ເຂົາມີຄວາມແຄ້ນໃນໃຈເໝືອນພູເຂົາໂສກມາເຕັງທວງ. ເຂົາປາກຈະຕາຍເສັ່ງດີກວ່ານັ້ງ ດ້ວຍບໍ່ມີທາງຄຶດຕໍ່ໄປ ຫຼື ເຖິງຄຶດ

ກໍເປັນການຂັດສົນຈົນໃຈລ້າ ໆ ຄັນແມ່ນແນວໃຫ້ເປັນດັ່ງເດັກນ້ອຍ ເຂົາຄົງໃຫ້ຂຶ້ນໜ້າສຽງຄໍ. ແຕ່ເຖິງຈະຮ້ອງໃຫ້ກໍບໍ່ຊ່ວາງ ເພາະເຂົາບໍ່ໄດ້ຮັບຄວາມສົນຄວາມເຄັນຢ່າງໃດຈາກນາງສຸວັນນີ. ເມື່ອພິຈາຣະນາໄປມາ ຄວາມໂສກເຄັ້ນນັ້ນກໍອັດເອື້ອນໄປເອງ ໂດຍບໍ່ຕ້ອງຮ້ອງຮຽກຫາກຳລັງຈິດ ຫຼື ຄວາມໂອ່ຍຄາງມາບັງຄັບຊ່ວຍ.

- ເມື່ອແຈ້ງພໍສວຍລວຍ ສຽງນັ້ນເມືອງທາງເບື້ອງທົ່ງກໍສນັ່ນເຕືອນ ສີຫົນກໍເງີກໜ້າອອກຈາກຝ່າມືແລ້ວລຸກຂຶ້ນ. ເມື່ອນັ້ນເຂົາຈຶ່ງເຫັນນາງສຸວັນນີບໍ່ນອນເໝືອນກັນ ແລະບໍ່ຮູ້ຈະເວົ້າຈັ່ງໃດເພື່ອເຕືອນນາງກໍ່ເດີນໄປໜ້າ ມີແຕ່ຄວາມທໍ້ຖອຍລ່ອຍລ້າຢ່າງດຽວແລ້ວເຂົາກໍເອົາຕ່າງນ້ຳບັກສັງຂານໄປເຊື່ອງໄວ້ອີກໃນພຸ່ມໄມ້ ເມື່ອໄດ້ແຂນລຸກແລ້ວຈຶ່ງເວົ້າໄປວ່າ.

- ສຸວັນນີ ດຽວນີ້ເຮົາຕ້ອງໄປໃຫ້ຕລອດທາງ ນ້ອງຈີໃຫ້ອ້າຍໄປສົ່ງຮອດບ້ານພະຂາວພຸ້ນຫຼື ບໍ່ ?

- ໃຫ້ພົ້ນປ່ານີ້ເສັຽກ່ອນ (ນາງສຸວັນນີຕອບ) ເມື່ອຮູ້ຈັກທາງໄຕ້ທາງເໜືອແລ້ວ ເຮົາຈຶ່ງໄປຄົນລະທາງ.

- ສີຫົນບໍ່ຕອບ ເຂົາເຈັບໃຈ ດ້ວຍວ່ານາງບໍ່ຫາໄປສົ່ງຮອດບ້ານພະຂາວ. ຄວາມຈິງນາງສຸວັນນີບໍ່ຫາໄປສົ່ງ ກໍຍ້ອນສີຫົນເວົ້າບໍ່ຂອບ ແຕ່ສີຫົນບໍ່ຮູ້ເມື່ອຄິງ ຈັກວ່າຕົນໄດ້ເວົ້າຢ່າງໃດ ເມື່ອໄປໄດ້ປະມານສອງຮ້ອຍບາດຕີນ ເຂົາຈຶ່ງພົບຄົນຕັດຟືນທີ່ຊຸທາງເສັ້ນດີ

ໃຫ້ໂດຍເວົ້າວ່າ; ເພື່ອຜ່ານທົ່ງກວ້າງໄປໃຫ້ໄຕ່ຕາມທາງແຍກສອງ ເສັ້ນ ເສັ້ນນຶ່ງລັດຊື່ ເສັ້ນນຶ່ງເລືອກໄປຂ້າງຊ້າຍຈັກໜ່ອຍ ຈຶ່ງໄປຮອດສອງບ້ານນີ້ ຊຶ່ງຫຼຽວເຫັນກັນຢູ່ ທັງທາດຫຼວງແລະພະຂາວ.

- ເມື່ອເຂືອໄດ້ສະແດງຄວາມຂອບໃຈແລ້ວກໍກາຍໄປ. ດາວນຶ່ງຄົນຕົດພົບກໍຮ້ອງກັບຄົນແລະຖາມວ່າ, "ບໍ່ມີມ້າໃຜເສັຽບໍ່ ! ຂ້ອຍເຫັນມ້າເຖິກມົນດົວນຶ່ງຢູ່ເດີນບ້ານຂ້ອຍຫັ້ນ ຫຼືວ່າໝາໄປໄລ່ມັນມາບຸ ມັນຈຶ່ງໄດ້ແລ່ນຫາທີ່ເພິ່ງ ໝາຂ້ອຍເຫົ່າຢູ່ໝົດຄືນ ພໍແຈ້ງມາຂ້ອຍຈຶ່ງລົງມາເບິ່ງ ຂ້ອຍຈຶ່ງເຫັນມັນຢືນຊຸບຢູ່ກ້ອງຕູບເລົ້າຂ້ອຍຫັ້ນ ດຽວນີ້ຍັງຢູ່ຫັ້ນແລ້ວ. ຄັນແມ່ນຂອງໝູ່ເຈົ້າກໍໄປເອົາສາ.

- ກ່ອນອື່ນ ສີທົນກໍໄດ້ບອກສີສັນຮູປພັນມ້າຂອງຕົນແລ້ວ ເມື່ອໄດ້ຍິນກໍເຂົ້າໃຈທັນທີວ່າແມ່ນມ້າຂອງຕົນ. ສີທົນກໍກັບຄືນໄປເອົາຕ່າງ ສ່ວນສຸວັນນີໄດ້ຂໍຊ່ວຍເອົາລູກໄປຮອດພະຂາວ ເມື່ອວ່າສີທົນກັບມາແຕ່ທາດຫຼວງແລ້ວຈຶ່ງແວ່ເອົາ ແລະນາງໄດ້ເວົ້າວ່າ.

ຄວາມເປື້ອນເປີໄດ້ຕິດມັນມາແຕ່ຄືນນີ້ຢູ່ ນ້ອງຊິໄດ້ຜັດທ່າຍສິ່ງເສື້ອ ລ້າງໜ້າລ້າງຕາແລະຣີມປາກຣີມສົບໃຫ້ມັນດັບດີເສັຽກ່ອນ ເມື່ອມັນສະອາດແລະໂກ້ແລ້ວ ຈຶ່ງຈະພາມັນໄປປານຄອບຄົວໃໝ່ຂອງອ້າຍ.

- ສີທົນຕອບໄປທັງຕື່ນຕົນວ່າ: ໃຜວ່າອ້າຍຊິໄປທາດຫຼວງ ນາງເກີອ້າຍບໍ່ໄປກໍມີ.

- ໄປນາສີທົນ (ສຸວັນນີລອບວ່າ) ເປັນຫຍັງຈຶ່ງບໍ່ໄປ !

- ນ້ອງຢ້າວປາກໃຫ້ອ້າຍເອົາເມັຽໜີຈາກແທ້ເນາະ ຟ້າວ ປາກໃຫ້ຫວິດຫູຫວິດຕານ້ອງແທ້ ໆ ເນາະ.

- ສຸວັນນີລອບໄປວ່າ: ຣອ້າຍສີທົນ ຢ່າຄິດມາເທາະຄວາມ ເສົ້າໝອງກາງຄືນນັ້ນ ເພາະເປັນຂອງຊົ່ວຊານ ມັນພາໃຫ້ສິລວັນ ຈິດແລະບໍ່ໃຫ້ຄິດຄວາມສະດວກ. ບັດນີ້ວົ້ງໃຈໃຫ້ທ່ຽງສາ ນ້ອງຂໍສັນ ຍາວ່າເລື່ອງນັ້ນນະ ຈິບໍ່ໃຫ້ມັນຜິວໄປທາງໃດດອກ ຄວາມຄິດໃນຄືນ ມືດນັ້ນນະ.

- ຣອ້າຍ ! ສີທົນເວົ້າວ່າ: ເວົ້າກໍເວົ້າທະເນຄັນປາກເວົ້າ ນະ ອ້າຍບໍ່ເຄີຍຫຼິບລີ້ນປີ້ນຄວາມຈັກເທື່ອດອກ ສິ່ງທີ່ອ້າຍໄດ້ເວົ້າ ແລ້ວນັ້ນ ກໍລ້ວນແຕ່ຄວາມສັດຈິງທັງລ້ຽນ ຊິອາຍໃຜເນາະ.

- ເອີ ! ຖ້າອ້າຍໄປ ແລະຄັນເມັຽອ້າຍຮູ້ຈັກວ່າອ້າຍຍັງມີ ທາງກ່ຽວຂ້ອງ ກໍຈະເປັນການເສັຽຫວັງຂອງອ້າຍຊັ້ນຕວາ ດັ່ງນັ້ນ ໃຫ້ອ້າຍຈຽມສົບຈຽມປາກດີມາກ ແລະຢ່າຖືເອົານ້ອງເປັນພິເສດໃນ ກາງປະຊາຊົນເນີ ໃຫ້ຄິດຫາພໍ່ເຖົ້າສຸທິສານຫຼາຍ ໆ ເພີ່ນກໍຫວັງ ວ່າ ອ້າຍຄົງປະຕິບັດຕາມຄວາມມຸ້ງໝາຍຂອງເພີ່ນປູ່ສເມີ ເອົາ ເທຼາະສີທົນ ລາໄປກ່ອນເນີອ້າຍ ! ສ່ວນຄຳຈັນນ້ອງຊິຮັກສາໄວ້ ບໍ່ ໃຫ້ມັນນຳໄປກວນອ້າຍຢູ່ບ້ານທາດຫຼວງພຸ້ນດອກ ແລະນ້ອງຈະກຳ ເອົາໄວ້ເປັນຂອງກາງ.

- ເມື່ອສີຫົນເຫັນລູກກີນບ່ຽວແຂວນນາງສຸວັນນີຢູ່ ພໍ່ນາ ເລີຍເວົ້າໄປວ່າ ມຶງຊິໄປນຳສາວຫວະ ?

- ເມື່ອເຂົ້າໃຈເນື້ອຄວາມອັນເປີດເຜີຍນັ້ນແລ້ວ ຄຳຈັນຈຶ່ງ ຕອບໄປວ່າ ແມ່ນແລ້ວພໍ່ ລູກຊິໄປນຳນ້າສາວສຸວັນນີທີ່ຮັກລູກນັ້ດອກ ເມື່ອພໍ່ໄດ້ເມັ່ງແລ້ວ ພໍ່ຈຶ່ງມາເວົ້າອ້ອນເອົາລູກແດ່ເນີ ແຕ່ລູກປາກຢູ່ ກັບແມ່ສຸວັນນີເທົ້າ ໆ.

- ສີຫົນເວົ້ານຳນາງສຸວັນນີວ່າ! ນ້ອງເຫັນບໍ່ມັນເວົ້າຈັ່ງໃດ? ນີ້ຫຼ້າຄຳຈັນ ພໍ່ກໍປາກໄດ້ສາວເປັນແມ່ລູກຫັ້ນແລ້ວ ແຕ່ສາວບໍ່ຍິນ ຍອມ ພິເຄາະເນີລູກເອີຍ ໃຫ້ໄດ້ເປັນແມ່ແທ້ ໆ ເນີ.

- ບໍ່ເປັນຫຍັງດອກພໍ່ (ຄຳຈັນຕອບໄປ) ລູກຊິໃຫ້ສາວວ່າ ເອີ ໆ ໂລດ ເພາະສາວຮູ້ເອົາໃຈລູກຄືຫັງງນີ້.

- ເມື່ອນັ້ນຄຳຈັນກໍຈາກພໍ່ໄປກັບນາງສາວ ຝ່າຍສີຫົນກໍ ຢືນຊຶງຢູ່ຄົນດຽວເປັນຍິນໂສກ ແລະສົງໃສຍິ່ງກວ່າຄາວກ່ອນນັ້ນອີກ.

# ໑໐. ສາວຊ່າຢູ່ໃນບ້ານ

- ເມື່ອໄດ້ປັດແປງເຄື່ອງນຸ່ງ ແລະທີ່ນັ່ງຫຼັງມ້າອັນທະລັງທະລາຍໃຫ້ຮຽບຮ້ອຍແລ້ວ, ສີທົນກໍສະດິກຂຶ້ນຫຼັງບັກສັງຂານ ແລ້ວກໍໄຕ່ຕາມຮ່ອມທາງເພື່ອໄປຫາທາດຫຼວງ.

- ເມື່ອນັ້ນສີທົນຄິດວ່າ ຈະບໍ່ທໍ້ຖອຍຈັກປາດເລີຍ ແລະຕ້ອງລະເສັຽຍັງຄວາມກັງວົນ ເມື່ອຄືນອັນພາສັ່ນເຊັນເໝືອນຄວາມຝັນຮ້າຍນັ້ນ.

- ເຂົາໄປຈອບພໍ່ເພັຽບຸສດີ ກໍາລັງນັ່ງຢູ່ບົນເຕົາອີ້ຂຽວຕອງອ່ອນ ອັນຕັ້ງຢູ່ຕີນປະຕູເຂົ້າເຮືອນຫຼັງຂາວ ເຮືອນນັ້ນມີຂັ້ນໄດຫົກຂັ້ນທີ່ເປັນລຳດັບກັນຂຶ້ນແຕ່ພື້ນພຽງ ນີ້ທໍາໃຫ້ເຫັນວ່າເຮືອນຫຼັງນັ້ນມີຊັ້ນລ່າງ ຕ່າງດິນທີ່ອ້ອມເດີ່ນປູຊາຍນັ້ນກໍທໍາດ້ວຍປູນ, ເຫັນວ່າເປັນສະຖານງາມ ໜ້ອຍຄົນທີ່ສຸດທີ່ຈະບໍ່ຫຼົງວ່າແມ່ນເຮືອນເຈົ້າຣັ່ງ.

- ເມື່ອນັ້ນຜູ້ຈະເປັນພໍ່ເຖົ້າກໍມາຕ້ອນຮັບສີທົນ, ແລະເມື່ອໄດ້ຖາມຂ່າວຄາວ ຄວາມພາສຸກສະບາຍຂອງຄອບຄົວຂອງເຂົາ ຢູ່ລະຫວ່າງຫ້ານາທີແລ້ວ ເພັຽບຸສດີຈຶ່ງຖາມເຖິງຄວາມມຸ້ງໝາຍ ໃນການທີ່ເຂົາໄດ້ມາຫາໃນເວລານັ້ນໂດຍຮຽບຮ້ອຍວ່າ, ເຈົ້າກໍມາທ່ຽວຫຼິ້ນທາງນີ້ລາງເທື່ອເນາະ ?

- ພໍ່ນາຈຶ່ງຕອບໄປວ່າ, ນາປານດອກ ກັບເອົາຂອງຝາກ ພໍ່ເຖົ້າບົ້ນນາກ້ອນ ແລະເພິ່ນກໍໄດ້ສັ່ງຄວາມມາ ຖາມຂ່າວພ້ອມແດ່ ສ່ວນຂ້ອຍນີ້ ປະສົງຢ່າງໃດເຈົ້າກໍຄົງຮູ້ຈັກຢູ່.

- ເພັງບຸສດີຕອບຄວາມ ທັງຕົບທ້ອງໃສ່ແປ້ະ ໆ ວ່າ ໂທ ໆ ຂ້ອຍຮູ້ຈັກແລ້ວ ຮູ້ແລ້ວ ເຫັນແລ້ວ ເຂົ້າໃຈແລ້ວ ! ແລະ ຕໍ່ຄວາມອີກວ່າ, ແຕ່ບໍ່ມີແຕ່ເຈົ້າຜູ້ດຽວນາລົມ ອ້າຍບ່າວເອີຍທາງ ໃນພຸ້ນມີສາມຄົນແລ້ວ ທີ່ປະສົງຢ່າງດຽວກັນກັບເຈົ້າ ສົນໃຈນຳແຕ່ ຊີວິກລົງທໍ່ນັ້ນເເຫຼະດຽວນີ້ ບໍ່ຊ່າງເຂົ້າຂ້າງອອກຂາ ເພາະວ່າຝ່າຍ ໃດກໍດີ ຄືກັນໝົດ ສ່ວນທາງຂ້ອຍກໍປາກໃຫ້ເຈົ້າຫັ້ນແລ້ວໄດ້ ດ້ວຍ ວ່າຫົວພໍ່ສຸທິສານກໍມີໄຮ່ຮົ້ວດິນນາ ແລະເຈົ້າກໍເປັນຜູ້ເຮັດ ລູກສາວ ຂ້ອຍກໍໃຫຍ່ແລ້ວ ແລະເຂົາກໍເປັນຜູ້ປະຄັບປະຄອງສົມບັດເຂົາ ເອົາ ແຕ່ຄວາມຄິດເຂົາເປັນ. ເຂົ້າມາ ໆ ! ນາສເນີວົວໃຫ້ເຂົາຮູ້ໜ້າລົ້ງ ຕາ ແລະຂ້ອຍກໍປາກໃຫ້ເຈົ້າເປັນເອກໝູ່.

- ເມື່ອສີທົນເຫັນວ່າຕົນເກີນຈຳນວນໄປແລ້ວ ເພາະແຕ່ ກ່ອນຄິດວ່າຈະມີແຕ່ຕົນຄົນດຽວມາເວົ້ານາລົມ ເມື່ອເຫັນດັ່ງນັ້ນກໍ ຕື່ນຕົນແລະເວົ້າວ່າ, ຂໍໂທດຂໍອະພັຍນຳຫຼາຍ ໆ ບໍ່ແມ່ນຂ້ອຍຊີມາ ຍາດນາຊິງຜູ້ໃດດອກ.

- ເພັງບຸສດີຕອບໄປໂດຍບໍ່ດໃສ່ອັນດີວ່າ, ຄັນເຈົ້າຄິດວ່າບໍ່ ມີໃຜມາກ່ອນກໍບໍ່ແມ່ນແລ້ວ ອ້າຍບ່າວເອີຍ ຂອງວ່າເຈົ້າມານຳຫຼັງ

ເພິນ ເຈົ້າຄຶດຜິດໄປແລ້ວ ໃຜກໍມັກຄຳວັນຊູ່ຄົນ ແຕ່ເຂົາຄຶດຢາກ ແຕ່ຊິເລືອກເອົາທີ່ນັ້ນ ເຂົ້າໄປໃນຫ້ອງພຸ້ນ ຢ່າຖອນມັນບ້າ! ບາດ ຊິງກໍຊິເປັນຫັງງວ່າ ເຂົາກໍເປັນຍິງສົມຄວນຢູ່.

- ເພັ່ງບຸສດີພ່ອງເວົ້າພ່ອງຊຸກໂຫຼ່ສີຫົນເຂົ້າໄປ ເປັນຊວ່າ ຊົ້ນລົ້ນເລີງ ທັງຮ້ອງໃສ່ລູກສາວວ່າ, ໝ! ຄຳພັນມາກິນອີກຜູ້ນຶ່ງ!

- ການປອກຊົ້ນແຕ່ຫົກກຫົ້ ເພື່ອສະແດງຕົວສີຫົນຕໍ່ນາງ ໝ້າຍກາງຄນະເຈົ້າຊູ້ດັ່ງນັ້ນນັ້ນ ທຳໃຫ້ພໍ່ນາອຸກໃຈແລະລະອາຍຈົນ ປຸນຈະຫຼຽວເບິງໝ້ານາງສາວ ແລະຈຳພວກບໍລິວານນັ້ນບໍ່ໄດ້.

- ຍາງໝ້າຍຄຳພັນກໍພໍເບິງພໍແຍງ ແຕ່ວ່າວາດຊົງແລະ ການແຕ່ງຕົວຂອງນາງທຳໃຫ້ສີຫົນໜ່າຍ. ນາງມີສັນດານດົ້ດົງ ແລະຖືຕົວ ນາງດັດຜົມແລະແບ່ງໃຫ້ເປັນສາມບ່ອນ ນຸ່ງສິ້ນໄໝຄຳ ແລະໃສ່ເສື້ອດອກໄມ້ແດງ ອັນບໍ່ຖືກຕ້ອງກັບອາຍຸແລະຄວາມເປັນ ໝ້າຍຂອງຕົນ.

- ການນຸ່ງຖືແລະທ່າທາງອັນບໍ່ຢູ່ລົມເຜົາຢ່າງນີ້ ເຖິງບໍ່ ເຂົ້າຂ້າງອອກຂາ ສີຫົນກໍຍັງຖືວ່າເຖົ້າແລະຂີ້ຮ້າຍຢູ່ ເຂົາຄຶດວ່າ ເຄື່ອງເອ້ ແລະຄວາມເວົ້າຄວາມລົມອັນເປາະເປີ້ຍ ແລະປອກປຽວ ຂອງນາງໝ້າຍ ຄືກັນກັບເດັກນ້ອຍຜູ້ມີອາຍຸແລະຫົວຄິດ ທີ່ນາງ ສຸວັນນີທີ່ນັ້ນ ສ່ວນຫຼາຍການເວົ້າຫຼິ້ນເວົ້າຫົວຂອງນາງໝ້າຍຫືນ ຫືໂພດ ແລະແຕ່ງເພດກໍບໍ່ຫາເນື່ອຫາຍາມ.

- ອ້າຍບ່າວທັງສາມກໍນັ່ງອ້ອມພາລ້ຽງ ທີ່ເຕັມໄປດ້ວຍສຸຣາແລະອາຫານຈານແກ້ມ ຊຶ່ງແຕ່ງມາສະເພາະແຕ່ເຊົ້າວັນນັ້ນ ດ້ວຍວ່າເພັ້ຍບຸສດີມັກອ້າງສິ່ງຂອງ ແລະນາງໝ້າຍກໍບໍ່ປ່ອຍໃນທາງຈັບຈ່າຍຖ້ວຍຈານອັນງົດງາມ ແລະມັກຊຸມແຊວເໝືອນຜູ້ຊອກຫານັ່ງກິນເງິນດອກເບ້ຽ. ສ່ວນສີທົນບໍ່ໄສເຂົ້າໄສຂອກ ມີແຕ່ພິຈາຣະນາໄປມາເລັກນ້ອຍທໍ່ນັ້ນ ດ້ວຍວ່າເກີດມາກໍມີເທື່ອດຽວນີ້ໄດ້ຊຸມເຂົ້າຊຸມເຫຼົ້າບຳເພີນ. ເມື່ອນັ້ນເພັ້ຍບຸສດີກໍຂນານເຂົາເຂົ້າໄປນັ່ງບຳຄນະແຂ່ງຂັນ ແລະເຖົ້າເອງກໍນັ່ງລົງຊິດຂ້າງສີທົນທັງເລົ່າໂລມເຂົາໂດຍດີ. ສ່ວນຂອງດ້ອນເນື້ອປ່ານັ້ນ ເຖິງສີທົນໄດ້ຈິກອອກມາໃຊ້ແດ່ແລ້ວກໍຍັງໄດ້ຜົນສົມຄວນຢູ່ ນາງໝ້າຍປະກົດຍິນດີ. ສ່ວນເຈົ້າບ່າວທັງສາມນັ້ນ ກໍພໍແຕ່ເສືອດດາເບິ່ງໂດຍຄວາມປມາດ.

- ສີທົນຫົນຫວຍແລະກິນກໍບໍ່ຄ່ອຍສະດວກ, ເມື່ອເຫັນດັ່ງນັ້ນຫົວພໍ່ບຸສດີຈຶ່ງເວົ້າປອກວ່າ.

- ເຈົ້າສັງມາຂີ້ຫຼົ້ມແທ້ ໃຫ້ມັນຢູ່ລ້າ ໆ ເຣັດຫຍັງຈອກນັ້ນ ຢ່າໃຫ້ຄວາມຮັກຕົວອາຫານເຜ ເພາະວ່າເຈົ້າຊູ້ຫ້ອງໂຂ່ງບໍ່ມີພຍາບ່ອຍປານຜູ້ກີ້ກເຫຼົ້າລົງຈັກໜ່ອຍໃດ. ສີທົນເຄືອງໃຈດ້ວຍວ່າເຂົາເຣື້ອງວ່າວິນເປັນຜູ້ມັກແລ້ວ. ແລະວາດຣັກຂອງນາງໝ້າຍອັນເສືອດແສງຕາລົງຂ້າງລຸ່ມແລະຫົວຍິ້ມ ເໝືອນຄັກໃນໃຈວ່າຕົນເປັນຜູ້ດີຜູ້ງາມນັ້ນ ທຳໃຫ້ສີທົນມີອາການປາກໂຕ້ຖຽງຍັງຄວາມກູໝັ້ນ

ເຊັ່ນນັ້ນ ແຕ່ເຂົາຢ້ານຈະເສັຽຄວາມສຸພາບ ແລ້ວກໍເລີຍຍິ້ມຫົວແລະອິດໄປ.

- ອ້າຍບ່າວທັງສາມ ປະກົດແກ່ສີຫົນວ່າເປັນຄົນບໍ່ຮູ້ຈັກຫັຽງ. ດ້ວຍວ່າກ່ອນຈະໃຫ້ນາງໜ້າຍຮັກແລະຍິນດີ ກໍໄດ້ສລະຊັບແລະເວລາເປັນຫຼວງຫຼາຍເສັຽກ່ອນ. ຜູ້ນຶ່ງມີອາຍຸປະມານສີ່ສິບປີ ມີຮູປຮ່າງຕ່ຳຕຸ້ຍຄ້າຍເພັ້ຽບຸຄຄົນເອງ ຜູ້ຖ້ວນສອງເປັນຄົນຕາປ່ຽວແລະມັກກິນເຫຼົ້າກວ່າສິ່ງອື່ນ ຜູ້ຖ້ວນສາມພໍເປັນບ່າວແວງ ແຕ່ປາກສະແດງຕົນວ່າຕົນເປັນຄົນຮູ້ມາກ ກໍເວົ້າໜ້ອຍ ໆ ໂດຍບໍ່ມີສັບນິຄົມ ເພື່ອໃຫ້ເຂົາເອັນດູ. ສ່ວນນາງໜ້າຍກໍຫົວສະອິດສະອ້ອນ ເໝືອນຍິນດີນຳຄວາມຫຽາບຊ້າຂອງຄົນພວກນີ້ແທ້, ແຕ່ເຖິງເຣັດໄປຢ່າງໃດກໍບໍ່ນັບວ່າຮັກແພງກັນໄດ້ເລີຍ. ແຕ່ຫົວທີ່ສີຫົນຄິດວ່າຕົນມັກເຂົານາງຟັງໄປຟັງມາຈຶ່ງຮູ້ເມື່ອວ່າ ມີຜູ້ບິວະເບົ້າຕົນເປັນພິເສດ ຊຶ່ງໝາຍປາກໃຫ້ຕົນກ້ຽວພັນເຂົ້າກວ່າເກົ່າອີກ. ເມື່ອຮູ້ດັ່ງນັ້ນແລ້ວກໍອິດໄວ້.

- ເມື່ອເລີກພາເຂົ້າແລ້ວ ເຖິງຕອນຄ່ຳນາງໜ້າຍກໍຊວນໄປທ່ຽວບ້ານນອງບອນ ຊຶ່ງຢູ່ຫ່າງໄກທີ່ນັ້ນລະວ່າງເຖິງຫຼັກກິໂລແມັດ ເພາະໃນວັດນັ້ນຕັ້ງບຸນ ສ່ວນສີຫົນນັ້ນເມື່ອຍຫຼາຍແລ້ວ ມີແຕ່ຄຶດຫາໂອກາດເພື່ອນອນເຊົາເມື່ອຍທີ່ນັ້ນ ແຕ່ເຂົາບໍ່ເຄີຍໝາງບຸນສິນກິນທານ ກໍເລີຍໄປນຳໝູ່.

- ຖຸບິນກໍເຕັ້ນແຕ່ຄືນ. ສ່ວນບາງໜ້າຍກໍບິວລະບາດໄປ ເປັນອ້ອງແອ້ງອິງອາດ ທັງແຫນແຫ່ໄປດ້ວຍບໍຣິວານເຈົ້າຊູ້ທັງສາມ ຄອນ ໆ ບາງກໍໄປບຽດຜູ້ນັ້ນ ຄອນ ໆ ກໍວາງຜູ້ນັ້ນມາສີຜູ້ນີ້ ທັງປຶດຄໍໃຫ້ສູງຂຶ້ນ ແລະເບີດສີສະເປັນເທົ່ເລົ້ ໆ ໄປ.

- ທີ່ນັ້ນບັງບໍ່ພໍ ນາງບັງຫວັງໃຫ້ມີຜູ້ທີ່ສົນຫຽມຂ້າງອີກ ແຕ່ສີຫີນເຫັນເປັນໜ້າປາກຫົວ ໃນການແຫ່ແຫນແຜນກັ້ງໂຕ່ງສົ້ນ ອັນນັ້ນ ກໍເລີຍຖອຍອອກເປັນໄລຍະພໍສົມຄວນ ທັງຊອກໂອກາດເວົ້າລົມຫຼີ້ນໄປທາງອື່ນກັບເພິ່ງບຸສດີ ພໍບໍ່ໃຫ້ຄົນທັງຫຼາຍວ່າຕົນເປັນໝູ່ດຽວກັບພວກນັ້ນ.

## ໑໑. ຜູ້ ປັນບາຍ

- ເມື່ອເຖິງວັດແລ້ວ ນາງໝ້າຍກໍ່ປຸດປີນຖ້າ ເພື່ອເຂົ້າວັດ ພ້ອມບໍລິວານທັງປວງ ສີທົນບໍ່ຍອມໄປນຳ ກໍ່ເລີຍຫຼົບໜີອອກຈາກ ຫົວພໍ່ບຸສດີ ເພື່ອໄປລົບຫາລົບອື່ນທີ່ລື້ງເຄີ່ງກັນ, ແລ້ວກໍ່ເຂົ້າໄປລານ ທາງອື່ນ, ຄວາມນີ້ທຳໃຫ້ນາງໝ້າຍເສັຽໃຈເປັນຢ່າງຍິ່ງ.

- ເມື່ອໄຫວ້ພຣະພາວັນນາເສັດແລ້ວ ນາງກໍ່ທຳລົບໃຫ້ມີ ໄຊຊະນະທົ່ວໄປໃນກາງວັດໃນທາງລຳວົງ ແລະນາງກໍ່ໄດ້ຟ້ອນສົມມັກ ກັບບ່າວທັງສາມ. ສີທົນຜູ້ເປັນຜູ້ເບິ່ງກໍ່ເຫັນວ່ານາງຟ້ອນຄ່ອງ. ເມື່ອ ນັ້ນເພັຽບຸສດີຈຶ່ງເວົ້ານຳເຂົາທັງລົບໃຫ້ວ່າ, ເປັນຈັ່ງໃດເຣີຍ! ເຈົ້າ ດຸດບໍ່ພາລູກສາວຂ້ອຍຟ້ອນກວະ? ຈັ່ງແມ່ນມັກອາຍ!

- ພໍ່ນາຈຶ່ງຕອບວ່າ ຂ້ອຍປະຟ້ອນມາແຕ່ເມັຽລາຍພຸ້ນ ແລ້ວ.

- ຮວ້າຍ! (ເພັຽບຸສດີທ້ວງວ່າ) ຂອງວ່າເຈົ້ານາຊອກເມັຽ ຄວາມໂສກເສົ້າແຕ່ເກົ່າກ່ອນກໍລະສາດີ.

- ສີທົນຕອບໄປວ່າ ບໍ່ເປັນຊັ້ນດອກພໍ່ເອີຍ ດຽວນີ້ຂ້ອຍຄຶດ ວ່າຂ້ອຍແກ່ລົບແລ້ວ ເລີຍບໍ່ປາກຟ້ອນປາກລຳຊ້ຳ.

- ເພັຽບຸສດີ ພ່ອງເວົ້າພ່ອງດຶງແຂນເຂົາໄປທີ່ເປົ່າຫວ່າງ

ວ່າ, ນີ້ນະເມື່ອເຈົ້າເຂົ້າມາເຮືອນພໍ່ ເຈົ້າກໍຄືຈະມີຄວາມອຸກໃຈ ດ້ວຍວ່າເຈົ້າເຫັນເຂົາມາກ່ອນແລ້ວ ແຕ່ຂ້ອຍເຫັນວ່າເຈົ້າກໍເປັນຜູ້ໃດແດ່ເຮັດຈັ່ງຊີ້ບໍ່ດີໃດ. ລູກສາວພໍ່ເກີບລືມບ່າວຄັ້ງແຕ່ສິກຈາກບວດນຳຜົວ ບໍ່ແມ່ນແນວຊີໃຫ້ບີງເຂົ້າມາຫາຊາຍ.

- ລູກສາວພໍ່ຊີເອົາຜົວແຕ່ຫຼາຍປີແລ້ວ ແຕ່ງວນນີ້ຜູ້ດຽວກໍຍັງບໍ່ທັນຕົກລົງເອົາເທື່ອຫວະ ?

- ເຂົາຊີຟ້າວໄປເຮັດຫຍັງ ເຂົາເຮັດຈັ່ງຊີ້ກໍດີແມ່ນໃດ. ເຫັນວ່າເຂົາຈະປົ່ງກິນກະຈອບກະຈອນ ເຈົ້າວຸດຖືວ່າເຂົາບໍ່ດີ ເຂົາເປັນບີງວາດໃຫຍ່ ຜົວຈຶກເຂົາກໍຮູ້ຈັກ.

- ສີກີນລອບໄປວານວີງວ່າ, ດີຊີບໍ່ເປັນຈັ່ງຊັ້ນດອກ ດ້ວຍວ່າຜູ້ມັກກໍມີທັງສາມຄົນ ຄັນນາງຮູ້ຈັກຮ້າຍຈັກດີ ນາງຄົງຄືດວ່າເກີນໄປສອງຄົນແລ້ວ ແລະເຂົາກໍຈະບອກໃຫ້ສອງຄົນນັ້ນບໍ່ມາແລ້ວ.

- ຮວ້າຍ ! ເຈົ້າວຸດບໍ່ເຂົ້າໃຈຫຍັງເນາະ ຜູ້ເຖົ້ານັ້ນກໍບໍ່ມັກຜູ້ລາປ່ຽວກໍບໍ່ມັກ ຜູ້ບ່າວແດງກໍບໍ່ມັກ. ພໍ່ຮູ້ຈັກໃຈມັນແລ້ວ ເມື່ອຈະໄລ່ພວກເຂົາໜີ ທັງຫຼາຍກໍຈະຄືດວ່າມັນບໍ່ປາກໄດ້ຜົວສາແລ້ວ ກໍຄືດວ່າເຂົາປາກປູ່ເປັນໝ້າບປູ່ຊັ້ນແລ້ວ ຄັນເປັນຈັ່ງຊັ້ນຊີມີຄົນມາຫາຫວະ ?

- ໂອ່, ອີ່ເນາະ ! ໝວດນີ້ເປັນຜູ້ຈ່າວວ່າດີ ?

- ກໍຈັ້ງຊັ້ນແລ່ວ ມັນຊິຜິດຮ່ອນໃດ ເຈົ້າເດບໍ່ມັກຫວະເປັນຈັ້ງຊັ້ນ ?

- ຈັກແຫຼ້ວ ມັກໃຜມັກມັນ.

- ບໍ່ຖືກໃຈເຈົ້າດີບໍອ້າຍບ່າວ ເອົາແຕ່ຊິຕິກລິງກັນ ຄັນມັກພໍ່ຊິຄຶດຊ່ວຍ ເອົາໄວ້ໃຫ້ເຈົ້າຜູ້ດຽວຫັ້ນແລ່ວ.

- ເອີ ! ຄັນຂ້ອຍຫາກບໍ່ໄດ້ ແລະຄັນຊິໃຫ້ຂ້ອຍສລະເວລາແຫ່ແຫນກັບປູ່ຈັ້ງຊີ້ ຈັກປານໃດຊິໄດ້.

- ເອົາແຕ່ເຈົ້າເປັນ ຄັນວ່າເຈົ້າຊ່າງເວົ້າຊ່າງລົມຊ່າງເຍົ້າຊ່າງເຍີ້ຍ ຊ່າງອື່ນຊ່າງອອຍ ໃຫ້ຖືກອົກຖືກໃຈເຂົາ ມັນຊິໄປໃສ. ແຕ່ໃດ ໆ ມາຄັນມັນມັກມັນຫາກລົມນຳດອກ ສ່ວນຫຼາຍມັນບໍ່ຟ້າວປາກໄປເປັນຂ້ອຍຜູ້ຊາຍ ເມື່ອມັນມີອຳນາດເອົາຜູ້ຊາຍມາເປັນຂ້ອຍດັ່ງນີ້. ຈັ່ງຊີ້ແລ້ວ ຄັນວາດວາອາຈົນຫາກຖືກຕ້ອງຄ່ອງກັບມັນບໍ່ມີຍາກປານໃດນາ ຄັນເຈົ້າມັກໃຜດນັ້ນ ເວົ້າບໍ່ໄດ້ແລ່ວ ຄັນມັນມັກອີຫຼີ ມັນຄົງເຊົາຫຼີ້ນສ້ອຍກັບບ່າວຫຼາຍຄົນ . ສະນັ້ນເຈົ້າຢ່າຟ້າວເສັຽໃຈໄວຫຼາຍ ໃຫ້ມາຄູ່ອາທິດ ພາເຂົາເຕັ້ນຟ້ອນແລະສະແດງໃຫ້ເຂົາເຫັນວ່າເຈົ້າເປັນຄົນມີໄມ້ມີມື. ເມື່ອເຂົາເຫັນວ່າເຈົ້າເປັນໜ້າຮັກແລະຄ່ອງດີກວ່າໝູ່ ມື້ໃດມື້ນຶ່ງເຂົາຄົງບອກໃຫ້ເຈົ້າຮູ້ຈັກ ວ່າໄດ້ຫຼືບໍ່ໄດ້ກໍດີ.

- ລືທົນໄດ້ໄປວ່າ ຂໍອາພັຍນຳຍາພໍ່ຄວາມນີ້ນະ ! ລູກສາວ

ພໍ່ເປັນຜູ້ມີອຳນາດເຮັດການໃຈ ແລະຂ້ອຍກໍບໍ່ເປັນຜູ້ຊິມາກີດຄຽນ, ຄັນແມ່ນຂ້ອຍນີ້ຫວະ ຂ້ອຍຊິບໍ່ເຮັດຈັ່ງຊັ້ນ ຂ້ອຍຊິເຮັດໄປຕາມຊື່ຕາມຈິງ ເພື່ອບໍ່ໃຫ້ເສັຽເວລາຊ້າການຂອງຜູ້ຊາຍ ເພາະບາງຄົນກໍຄາການງານຫາລ້ຽງຊີບ ແລະບໍ່ມີເວລາພໍມາອ້ອນ ໆ ວຽນ ໆ ນຳແດ່ສາວຜູ້ດູໝິ່ນຜູ້ຊາຍຈັ່ງຊິ້. ແຕ່ທີ່ສຸດຄົນຖືວ່າການມັກມ່ວນມັກຊື່ນມັກຫຼິ້ນມັກຫົວເປັນເຄື່ອງອາຊີບແລ້ວນັ້ນກໍການດອກ. ທີ່ຈິງຂ້ອຍຂໍເວົ້າການຊື່ໃຫ້ຟັງ ຄື ມື້ເຊົ້ານີ້ພໍ່ຄົງຄິດຜິດໃນຄຳປະສົງຂອງຂ້ອຍເມື່ອຊິເວົ້າໃຫ້ຟັງຄັກ ໆ ແຕ່ຫົວທີ ພໍ່ກໍບໍ່ຄອຍໃຫ້ເວົ້າ ຈົນກັບຫາເວົ້າຄວາມບໍ່ດີ. ການທີ່ຂ້ອຍມານີ້ ບໍ່ແມ່ນຊິມາຂໍລູກສາວເຈົ້າດອກຂ້ອຍຫວັງມາຂໍຊື້ງົວຄູ່ນຶ່ງນຳ ປາກເອົາໄປຂາຍຕລາດນັດໃນວັນອາທິດໜ້າ ເພາະພໍ່ເຖົ້າກໍປາກໄດ້ດີກັນ.

- ເພັຽບຸສດີເຈົ້າໄປໂດຍສງົບວ່າ ພໍ່ຮູ້ຈັກແລ້ວສີທົນເອີຍເຫັນວ່າລູກສາວພໍ່ປູ່ກັບຜູ້ບ່າວ ເຈົ້າກໍກັບກອກໄປທາງຕ່າງ ເອົາແຕ່ມັນແລ້ວ. ຄັນວ່າຜູ້ນ້ອຍດີຜູ້ນັ້ນຜິດຍິນຮ້າຍ ເຈົ້າຊິພົ້ນໄປຈັ່ງໃດໃຜກໍບໍ່ຂົ້ນເຫັງດອກ ອີກປະການນຶ່ງ ເຈົ້າກໍບໍ່ທັນໄດ້ລົງຄວາມຄັກຄັນປາກຊື້ງົວຊື້ ໆ ນັ້ນເຫົ້າປູ່ທິງພຸ້ນແລ້ວ ລາຄານີ້ຈັ່ງໃດຈຶ່ງຄ່ອຍສົນທະນາກັນ. ກີນແລງນຳພໍ່ກ່ອນຈຶ່ງຄ່ອຍເມືອ.

- ຂອບໃຈແລ້ວ ດຽວນີ້ພໍ່ບັງລາງານປູ່ ສ່ວນຂ້ອຍນີ້ ຄັນເຫັນເຕັ້ນຫຼອກເຕັ້ນລຳປູລ້າ ໆ ດາຍ ໆ ດຸດທົນຫວຍ ເວັ້ນໄວ້ແຕ່ມີ•

ການງານພິລຶກພຶກໜາເພື່ອຄວາມສະມາຄົມສາມັກຄີທັ້ງປຸ ຄັນຈະ ເອົາແຕ່ການຫຼີ້ນເປັນປະທານດັ່ງນີ້ ດູດບໍ່ຈັກຄວາມຢູ່ ຂ້ອຍຊິໄປ ເບິ່ງງົວພຸ້ນດອກ ແລ້ວຈິ່ງຊິກັບໄປເຮືອນເຈົ້າພຸ້ນໂລດ.

- ເມື່ອສີທົນເອົາງົວຫຼີກອອກຈາກທີ່ນັ້ນແລ້ວ ແລະເມື່ອ ເຂົາເສັຽຫວັງອັນເປັນສຸກແລ້ວ ເຂົາກໍຄຶດຢາກໄປອຸ້ມລູກ ແລະພົບ ໜ້ານາງສຸວັນນີເສັຽກ່ອນ. ທຸກປະການທີ່ເຂົາໄດ້ເຫັນແລະໄດ້ຍິນໃນ ເຣື່ອງນາງເອກຜູ້ອັປໂຍດ ເຣື່ອງບິດາຜູ້ກັບກອກລອກລິກໃຫ້ເສັຽ ວັທນະທັມ ຊຶ່ງເປັນການຊັກນຳໃຫ້ລູກສາວຕົນລຸ່ນເຄີຍໄປໃນທາງ ອວດໂດງແລະຫຼົງໄຫຼ ແລະການລະເລງເພງຫຼີ້ນທາເວລາບໍ່ໄດ້ ຂອງຊົນບົດທີ່ນັ້ນ ປະກົດເປັນການຝ່າຝືນຮີດຄອງຊາວຊົນພົລເມືອງ ທົ່ວໄປ ການສ່ຳຊຸມອັນໄຣ້ຜົນ ອັນທາງນອກກ້ຽງທາງໃນເປັນໜາກ ເດືອ ອັນວຸ້ນວາຍຄາຍຈິດເຫຼືອເຫດ ຊຶ່ງຄົນເຣັດນາກະທຳສວນບໍ່ ເຄີຍມີ ແລະໂດຍຕົງກັນຂ້າມ ອັນພາໃຫ້ກະສິກອນຫງ່ວມເຫງົາ ເສົ້າໂສກໃນເວລາເລີກຄາວເລີກໄດອັນທີ່ໄດ້ບາກບັ່ນ ອັນພາໃຫ້ເສັຽ ເວລາຊ້າການເປັນສອງສາມຊົ່ວໂມງນັ້ນ ທຳໃຫ້ສີທົນຄຶດຮອດລູກ ແລະນາງສາວຜູ້ລ້ຽງເຄີຍເຫຼືອທີ່ສຸດ.

ແຕ່ເຂົາຫຼຽວຄອຍເວລາວາດໄປທົ່ວທົ່ງກໍບໍ່ເຫັນ ບໍ່ເຫັນ ທັງນາງສາວແລະລູກຊາຍ ທີ່ຈິງກໍ່ແມ່ນຍາມຄົນລ້ຽງງົວລ້ຽງຄວາຍ ປະຈຳທົ່ງ ເຫັນແຕ່ສັດຕົວອື່ນຕາມທົ່ງເຮື້ອ ແລະຜູ້ລ້ຽງສັດຄົນອື່ນ

ເຂົາຈຶ່ງຖາມຫາບໍາເດັກຄົນນຶ່ງທີ່ລ້ຽງຄວາຍຢູ່ທີ່ນັ້ນວ່າ ສັດຝູງນີ້ແມ່ນຂອງຊາວບ້ານພະຂາວບໍ່ ? ແລະເດັກຕອບວ່າ, ແມ່ນແລ້ວ.

- ສີຫົນຕໍ່ໄປວ່າ, ແມ່ນໃຜບໍ່ເປັນຜູ້ລ້ຽງສັດຝູງນີ້ ຢູ່ບ້ານໃດມີແຕ່ເດັກນ້ອຍຜູ້ຊາຍຫວະລ້ຽງສັດ ?

- ບໍ່, ລ້ຽງແຕ່ມື້ດຽວນີ້ແລ້ວ ເພາະວ່າຜູ້ຍິງເຂົາໜີແລ້ວ.

- ຊັ້ນ ຍິງຜູ້ໃໝ່ທີ່ມາມື້ເຊົ້ານັ້ນເດ ?

- ໂອ່ນັ້ນຫວະ ເຂົາກໍໜີແລ້ວຄືກັນ.

- ຮວ້າຍ ! ທັນໜີແລ້ວຫວະ ? ບໍ່ເຫັນເດັກນ້ອຍຜູ້ນຶ່ງໄປນໍາເຂົາບໍ່ ?

- ເອີ, ເຫັນເດັກນ້ອຍນັ້ນໃຫ້ໄປ ເຂົາພາກັນໜີ ໄດ້ປະມານສອງຊົ່ວໂມງນີ້ແລ້ວ.

- ອີຫຼີ ຫວະ ! ໄປໃສ ?

- ເຂົາກໍໄປທາງເຂົາມາພຸ້ນແຫຼະຕີ ຂ້ອຍກໍບໍ່ໄດ້ຖາມ.

- ສີຫົນບຶງສົງໄສແລະເວົ້າໄປວ່າ, ເປັນຈັ່ງໃດເຂົາຈຶ່ງໜີ ?

- ໂອນໍ ! ຂ້ອຍກໍຊິຮູ້ຈັກນໍາຫວະ.

- ຫຼື ວ່າບໍ່ຕົກລົງກັນໃນຄ່າຈ້າງຮາງວັນບໍ່ ? ອັນນີ້ກໍຕົກລົງກັນແລ້ວນາຈຶ່ງມາ.

- ໃຜຊິຮູ້ຈັກນໍາ ຂ້ອຍເຫັນແຕ່ເຂົາເຂົ້າມາແລ້ວກໍອອກໄປທໍ່ນັ້ນແຫຼະ.

- ເມື່ອນັ້ນສີທົນກໍລ່ວງເຂົ້າໄປຖາມໄທບ້ານ ແຕ່ຜູ້ໃດກໍບໍ່ບອກ. ແຕ່ສີທົນກາກຊູຊີຖາມກໍໄປ ເມື່ອເວົ້າໄປເວົ້າມາສີທົນກໍໄດ້ເງື່ອນວ່ານາງອອກໄປຊື່ໆ ແລະພາລູກເຂົາທັງໄຫ້.

- ແຕ່ຄວາມສົງໃສຍັງບໍ່ຫາຍ ເຂົາຈຶ່ງຖາມໄປອີກວ່າ, ຫຼືວ່າມີຜູ້ຂົມເຫັງເຂົາ ?

- ອັນນັ້ນແມ່ນລູກເຈົ້າຫວະ ? ເປັນຫຍັງມັນຈຶ່ງໄປນຳສາວຜູ້ນັ້ນ ເຈົ້າຢູ່ໃສ ເຈົ້າຊື່ຫຍັງ ?

- ເມື່ອນັ້ນສີທົນເຫັນວ່າ ຂນົບທັມນຽມບ້ານເມືອງເຂົາເປັນດັ່ງນັ້ນກໍຖາມໄປທາງອື່ນ ທັງທົບທວນໂດຍຮີບຮ້ອນ ແລ້ວຖາມຫາຜູ້ເປັນເຈົ້າໜ້າທີ່ເພື່ອສົນທະນາກັນ.

- ບ່າວນາຄົນນຶ່ງຈຶ່ງຕອບວ່າ, ນາຍເພິ່ນບໍ່ຢູ່ ເມື່ອເພິ່ນໄປບ່ອນໃດເພິ່ນກໍຢູ່ບໍ່ດົນ ເລີຍໜ້າເລີຍໃນໄປ ເອົາແຕ່ທຸລະເພິ່ນເປັນ.

- ສີທົນຍິ່ງອຸກໃຈ ຈຶ່ງເວົ້າໄປວ່າ, ຮວ້າຍ ! ຍິງສາວຄົນນັ້ນໄປທາງໃດ ເຈົ້າກໍບໍ່ຮູ້ແດ່ຫວະ ?

- ເມື່ອນັ້ນພວກເຂົາກໍພາກັນຫົວຍຸ້ມເປ໊ຍ ແລະສັບໃສ່ເມັງເປັນສຳຄັນ ແລ້ວກໍຕອບວ່າຄົນບໍ່ຮູ້ບໍ່ເຫັນ ວ່າບໍ່ແມ່ນທຸລະຂອງຄົນ. ຮູ້ໄດ້ແຕ່ວ່າ ນາງສຸວັນນີພາລູກເຂົາໄປທາງຫຼວງພຸ້ນ. ສີທົນແລ່ນລັດທາງໜອງບອນ. ເວລານັ້ນນາງໜ້ານແລະຊາຍທັງສາມຍັງບໍ່ທັນທາງຫຼວງເທື່ອ ແລະເຖົ້າເພັ້ງກໍເໝືອນກັນ ຄົນໃຊ້ເຮືອນນາງ

ໜ້າບບອກວ່າ ມີຍິງຄົນນຶ່ງກັບເດັກນ້ອຍມາຖາມຫາເຮົາ ແຕ່ວ່າ ເມື່ອບໍ່ຮູ້ໜ້າລ້ຽງຕາກັນແລ້ວ ຄົນໃຊ້ກໍເລີຍບໍ່ເວົ້ານຳ ແລະບອກໃຫ້ພວກເຂົາໄປໜອງບອນພຸ້ນ.

- ສີຫົນເສັງຫາວ ຈິ່ງຖາມໄປວ່າ, ຮວ້າຍ ! ເປັນຫຍັງຈັ່ງບໍ່ເວົ້ານຳເຂົາແດ່ ເຂົາກໍເປັນຄົນຄືກັນຫັ້ນດວາ ຫຼືວ່າພວກເຈົ້າບໍ່ເຄີຍເວົ້ານຳຄົນຊັ້ນບໍ່ ?

- ສາວໃຊ້ວອບວ່າ ໂອຍ ! ເທວະດາເອີຍ ເຮືອນເຈົ້າຮັ່ງຄືຫຼັງນີ້ຕ້ອງລະວັງຮັກສາ ບໍ່ໃຫ້ຄົນຕ່າງໜ້າຕ່າງຕາເຂົ້າອອກຕາມລຳພັງ. ຂ້ອຍຂໍບອກເຈົ້າຕາມຈິງ ເຈົ້ານາຍເພິ່ນບໍ່ຮູ້ຈັກຄົນທົວໜ້າ ແລະຂ້ອຍກໍບໍ່ຫານຕ້ອນຮັບເອົາຜູ້ໃດຜູ້ນຶ່ງທັ່ງນັ້ນເອງ.

- ປະເພນີຂີ້ດຽດນີ້ເອົາມາແຕ່ໃສ ? ຄັນວ່າເປັນຈັ່ງຊີ້ແທ້ ຂ້ອຍຂໍເປັນຄົນທຸກສາດີກວ່າຮັ່ງ ຊຶ່ງຢູ່ໃນຄວາມສະທ້ານຢ້ານກົວເລື້ອຍ ໆ ຈັ້ງຊີ້. ລາໄປກ່ອນເດີ ! ປະເພນີຂີ້ຮ້າຍເອີຍ !

- ເຂົາໄດ້ຂ່າວນຳເຮືອນໃກ້ຄຸ້ດວ່າ ໄດ້ເຫັນຍິງສາວແລະເດັກນ້ອຍ. ເມື່ອເຫັນເດັກນັ້ນກາຍໄປແລະນຸ່ງສົ້ງເສື້ອຂາດຫຽ້ນແລະດ່າງດາວ ແລະນາງສຸວັນນີກໍເໝືອນກັນນຸ່ງສິ້ນຕາບຈຸບດ່ງຄົນຂໍທານ ໄທບ້ານກໍໄດ້ປັ້ນເຂົ້າທານໃຫ້. ນາງສາວໄດ້ຮັບເອົາປັ້ນນຶ່ງເພື່ອທຸ່ນທ້ອງເດັກ ແລ້ວກໍຟ້າວແລ່ນໜີເຂົ້າປ່າ.

- ສີທົນຊຶ່ງຄຶດປູ່ຄາວນຶ່ງ ແລ້ວຖາມໄປວ່າ, ເຈົ້າມາທາງວຽງບໍ່ໄດ້ມາທາງພີ້ຫວະ ?

- ເຂົາຕອບວ່າມາ ແລະໄດ້ຂີ່ມ້າສັບສົນນາງສາວແລະເດັກນັ້ນໄປ.

- ບໍ່ແມ່ນເຂົາໄລ່ຕາມນາງສາວນັ້ນໄປຫວະ ?

- ຄົນຮ້ານເຂົ້າແກງຜູ້ນຶ່ງ ຈຶ່ງຕອບໄປທັງຫົວວ່າ.

- ໂອຍ ! ໃຜຊິຮູ້ຈັກນໍາບໍ ! ກໍຄືຫຼືຫັ້ນແລ້ວ ແຕ່ຂ້ອຍບໍ່ຄຶດວ່າເຂົາຊິໄລ່ນໍາສາວ ແຕ່ວ່າຄັນເຂົາທັນເທາະ !---

- ຂອບໃຈແລ້ວ, ເອົາເທາະ !--- ເມື່ອນັ້ນສີທົນກໍແລ່ນໄປຫາມ້າ. ເມື່ອໄດ້ຖົມອານໃສ່ຫຼັງນັກສັງຂານແລ້ວ ກໍໂດດຂຶ້ນແລະຫອບຜ່ານທົ່ງໄປກຶ້ນ ໆ

- ຫົວໃຈຂອງເຂົາເຕັ້ນຕຶກ ໆ ປານຄຶກຄໍາເຂົາ ທັງໂມໂຫທັງເຫື່ອປາດໜ້າບ້ອຍກາລົງສອງຟ່າຍໜິກ. ແລ້ວສອງເທົ້າກໍເຕັກສ້ວງມ້າ. ນັກສັງຂານກໍລິວໄປເປັນປີກ ເພາະມັນເຫັນວ່າແມ່ນທາງກັບຄືນບ້ານ.

## ໑໔. ຍ່າເຖົ້າຄຶນບຶ່ງ

- ທັນໃດສີທົນກໍໄປຮອດບ່ອນເຂົາໄດ້ແຮມຄືນທີ່ຂ້າງໜອງ. ໄຟຍັງຄວັນກຸ່ນຢູ່. ທີ່ນັ້ນມີຍ່າເຖົ້າຄຶນບຶ່ງກຳລັງເກັບເອົາຟືນຊຶ່ງບາງສ່ວນບີ ໄດ້ເກັບທ້ອນໄວ້. ສີທົນລົງມ້າເພື່ອຖາມຫາ. ຍ່ານັ້ນຫູໜວກເລີຍບໍ່ຕອບຕາມຄວາມຖາມວ່າ, "ແມ່ນແລ້ວລູກເອີຍ ແມ່ນໜອງຜີເຜດ ແຕ່ກ່ອນເວົງນີ້ເຂົາເອີ້ນວ່າວັງສັງວອນ ເປັນບ່ອນເຂັດຂວາງແທ້ ໆ ໃດ ຖ້າບໍ່ຮູ້ຈັກ ພຸດທັງ ທັມມັງ ສັງຄັງ ບໍ່ຄວນເຂົ້າມາໃນນີ້. ຖ້າບໍ່ຮູ້ຈັກຈົມສາມຄວາມນີ້ກ່ອນ ເຫັນເປັນທຸກລຳບາກຍ້ອນ".

- ສີທົນຫງຸບເຂົ້າມໍ່ ໆ ແລະຮ້ອງຂຶ້ນໜັກແຮງວ່າ, ຂ້ອຍບໍ່ໄດ້ຖາມແນວນັ້ນດອກຍ່າ ເຈົ້າບໍ່ເຫັນສາວຜູ້ນຶ່ງກັບເດັກນ້ອຍກາຍມາທາງນີ້ບໍ່ ?

- ເດັກນ້ອຍນັ້ນຕາຍຈຸ່ມນ້ຳແລ້ວ.

- ສີທົນໜັງຫົວລຸກເບື່ອກ ! ແຕ່ຍ່າເຖົ້າເລີຍຕໍ່ຄວາມໄປວ່າ, ອັນນີ້ແຕ່ດົນແລ້ວ ເດັກຜູ້ນຶ່ງປູ່ບໍ່ປູ່ກໍມາຕາຍໃນໜອງນີ້ຫັ້ນເດກອງພອນມັບ ປູ່ທົວໜອງຫັ້ນເດ ຄັນເຖິງຍາມນ້ຳມາກມາກໍເຫັນພໍພົ້ນນ້ຳແຕ່ໜ້ອຍດຽວທໍ່ນັ້ນ. ຖ້າຜູ້ໃດຫຼົງມານີ້ໃນເມື່ອຄືນ ແນວໃດກໍໜີບໍ່ພົ້ນ ເຖິງຈະບ່າງຮ້ອຍເລົ້າພັນຫຼົບກໍກັບເຂົ້າດອນນີ້ຂອງເກົ່າ ຈົນແຈ້ງພຸ້ນແລ້ວຈຶ່ງໜີໄດ້.

ຄັນໄດ້ຍິນດັ່ງນັ້ນແລ້ວ ພໍ່ນາກໍສະເດືອກເດິງເຄາະຮ້າຍ ທີ່ສັງຫອນໃນສົບປ່າເຖົ້າຈົນຂົນຫົວລຸກຄີງພອງ ຄັນເຫັນວ່າຈະບໍ່ໄດ້ຄວາມຕໍ່ໄປອີກ ສີທົນກໍສະດີກຂຶ້ນຫຼັງມ້າແລ້ວກໍລັດປ່າໄປ ທັງຮ້ອງຫາຄຳຈັນໝົດສຽງຄໍ ທັງຄິວທັງເຄາະໄມ້ໄງ້ຟົດໄປ ເພື່ອທຳໃຫ້ມີສຽງບຸກບິນຂຶ້ນຕາມທາງເດີນ. ແລ້ວກໍປຸດຟັງສຽງໃດສຽງນຶ່ງພໍຂານຕອບ ແຕ່ເຂົາໄດ້ຍິນສຽງເຂາະງົວເນືອງນັນພຸ້ນພໍ້ຕາມພຸ່ມໄມ້ ແລະສຽງໝູບາດກັບກິນຮຳ.

ບຸດນຶ່ງສີທົນກໍໄດ້ຍິນສຽງມ້າແລ່ນຕາມສົ້ນເຂົາມາ ແລະຜູ້ຂີ່ນັ້ນເປັນຄົນອາຍຸພໍ່ປານກາງ ສີສັນດຳແດງກ້າວລົ້ນ ນຸ່ງສົ້ງເສື້ອເຫຼືອງແລະໃສ່ສນັບຂາ. ຄົນຜູ້ນັ້ນຮ້ອງໃສ່ເຂົາໃຫ້ປຸດ ສີທົນບໍ່ເຄີຍໄດ້ຈອບເຈົ້ານາຍທາງວຽງຈັກເທື່ອ ແວ່ນິດໃສອັນແຄ້ນເຄືອງນັ້ນດວນໃຫ້ເຂົາຄ່ວງຄຶກວ່າ "ແມ່ນມັນຫັ້ນແລ້ວ ! ສີທົນອ່າຍຄືນແລະສົ້ງແນມເບິ່ງຄົນຜູ້ນັ້ນແຕ່ຫົວເຖິງຕີນ ແລ້ວກໍຄອຍຖ້າເຂົາຈະວ່າຢ່າງໃດ. ຄົນຜູ້ມາຕາມຫຼັງປູ່ເສີຍ ໆ ທັງໜ້າຮາດແລະເວົ້າວ່າ, ເຈົ້າບໍ່ເຫັນສາວຜູ້ນຶ່ງອາຍຸສິບຫົກກັບເດັກນ້ອຍຜູ້ນຶ່ງມາທາງນີ້ບໍ່ ?

ສີທົນຕອບໄປທັງໃນໃຈວ່າ: ເຈົ້າປາກເຮັດຫຍັງໃຫ້ເຂົາ?

ເຖິງບອກໄດ້ກໍບໍ່ແມ່ນທຸຣະຂອງເຈົ້າດອກ ເພື່ອນເອີຍ! (ຜູ້ນັ້ນຕອບວ່າ) ແຕ່ບໍ່ແມ່ນແນວຊື່ອຳ ນຶ່ງຄົນນັ້ນແມ່ນນຶ່ງທີ່ມາຮັບຈ້າງລ້ຽງຄວາຍໃນປີນີ້ ແຕ່ຂ້ອຍບໍ່ຮູ້ຈັກເຂົາ--- ເພື່ອເຂົາມາຮອດ

ຂ້ອຍກໍເຫັນວ່າເຂົາຍັງໜຸ່ມໂພດ ຈະໃຊ້ວຽກໄຮ່ການນາກໍບໍ່ໄດ້. ຂ້ອຍໄດ້ສແດງຄວາມຂອບໃຈພໍ່ເຂົາ ແລະໄດ້ໃຊ້ຄ່າປ່ວຍການໃຫ້ເຂົາ ແລ້ວເຂົາກໍຄຽດ. ເຂົາຟ້າວໜີໂພດຈົນລືມຂອດເງິນຢູ່ໃນຫັ້ນ ດີແຕ່ບໍ່ມີຫຍັງປານໃດ ມີແຕ່ສອງສາມອັດທໍ່ນັ້ນ. ຂ້ອຍມານີ້ກໍເພື່ອຢາກເອົາຂອດເງິນສົ່ງເຂົາ ແລະໃຊ້ຄ່າປ່ວຍການໃຫ້ເຂົາຕາມຄວນ.

- ສີກິນເປັນຜູ້ສັດຈິງ ເມື່ອໄດ້ຍິນດັ່ງນັ້ນແລ້ວກໍຖືເຊື່ອແລະເວົ້າໄປທັງເຊັງແສງຕາໃສ່ເຈົ້ານາຜູ້ສົງໄສແລະເວົ້າໄປວ່າ. ເປັນແນວໃດຂ້ອຍກໍຢາກຮູ້ຈັກນຳ ເພາະເຂົາເປັນຍິງໄທບ້ານຂ້ອຍ ຂ້ອຍຮູ້ຈັກເຂົາຄັກແນ່ ແນວໃດເຂົາຄິງຢູ່ນຳໝູ່ນີ້ແຫຼະ ໄປ ! ໄປນຳກັນ ຈັກໜ່ອຍຊິເຫັນດອກ.

- ເຈົ້ານາກອບວ່າ ແມ່ນແລ້ວໄປນຳກັນ ! ແຕ່ຄັນບໍ່ພົບໃນມໍ່ ໆ ນີ້ ຂ້ອຍຊິໄດ້ໄປຫາງອື່ນ.

- ພໍ່ນາຄືດວ່າ "ເອີ ! ໃຫ້ມຶງໄປ ໄປໃສກູຊິແຕມມຶງຢູ່ດອກເຖິງຈະກ້ຽວວຽນຢູ່ໃນດົງສັງວອນນີ້ຈັກຮ້ອຍຮອບພັນຮອບ ກູກໍຈະບໍ່ວາງມຶງເລີຍ !" ແລ້ວຈຶ່ງຮ້ອງໄປວ່າ.

- ຖ້າກ່ອນ ຫັ້ນເດ ! ທັງຊີ້ມືໃສ່ພຸ່ມທີ່ເໜັງຕີງຢູ່ນັ້ນທັງຮ້ອງໄປວ່າ ເອີຍ ! ຄຳຈັນ ! ແມ່ນລູກຫວະເບາະ ?

- ເມື່ອເດັກຈື່ສຽງພໍ່ໄດ້ ກໍແລ່ນອອກມາຫາທັງເຕັ້ນທັງດີດປານກວາງ ແຕ່ເມື່ອເຫັນພໍ່ຢືນຢູ່ກັບເຈົ້ານາແລ້ວ ກໍຢຸດຢືນເປັນສົງໃສ.

- ພໍ່ນາຈຶ່ງເອີ້ນຫາລູກ ພ່ອງໂຕນລົງຫຼັງມ້າວ່າ ມາເຜ ລູກຣີບມາຫາພໍ່. ແລ້ວກໍຈັບແຂນລູກພ່ອງຖາມວ່າ, ນາງສຸວັນນີເດ?

- ສາວລື້ປູ່ຫັ້ນ ສາວບໍ່ຫານອອກມາ ສາວປ້ານຄົນຮ້າຍຜູ້ນີ້ ລູກກໍ່ປ້ານຄືກັນ.

- ເອີເອົາແຫຼະຢ່າປ້ານລູກ ພໍ່ປູ່ນີ້ດອກ--- ສຸວັນນີເອີຍ ? ສຸວັນນີ ! ອ້ານດອກ ອອກມາສາ.

- ສຸວັນນີຫັງບອອກມາ ພ່ອງສ່ອງພ່ອງຄານ ເມື່ອນາງຫຼຽວເຫັນສີຫົນຢືນປູ່ກັບເຈົ້ານາ ນາງກໍໂດດກອດຄໍພໍ່ນາໄລດເໜືອນພໍ່ກັບລູກ.

- "ໂອຍ ! ສີຫົນຂ້ອຍເອີຍ ຊ່ວຍເອົາຂ້ອຍແດ່ເນີ ປູ່ນຳອ້າຍໄຄແດ່ ຄືຊິບໍ່ປ້ານປານໃດ"

- ສີຫົນອິນຄືງລຸກ ເມື່ອເຂົາເຫັນສຸວັນນີໜ້າມ້ານ ແລະສົນເສືອກໍຂາດສ້ອຍດ້ວຍແໜງໜາມໃນເວລາແລ່ນໜ່າຍ ເພື່ອຊອກຫາທີ່ຄືບພໍ່ຊົນ ເໜືອນແມ່ນ້ຳງແລ່ນຜ່ານນາຍພານ. ແຕ່ສີໜ້າເຂົາບໍ່ຫຼ່າເພາະຄວາມປ້ານຫືຄວາມອາຍ.

- ສີຫົນເວົ້າໄປຫັງສົງແນມເບິ່ງກິຣິຍາຂອງນາງວ່າ, ເຈົ້ານາຍເພີ່ນປາກເວົ້ານຳເຈົ້າ.

- ນາງຈຶ່ງຕອບໄປເປັນອາດຫານວ່າ, ນາຍຂ້ອຍຫວະຈັ່ງຊີ້ ຂ້ອຍບໍ່ນອມເປັນແຫຼ່ງນູ້ຈັ່ງຊີ້ຈັກເທື່ອດອກ ! ອ້າຍຫັ້ນນະສີຫົນ

ເປັນເຈົ້າເປັນນາຍຂອງນ້ອງ--- ນ້ອງປາກຂໍໃຫ້ອ້າຍພານ້ອງກັບຄືນເມືອສາດີກວ່າ--- ນ້ອງຂໍເປັນຂ້ອຍອ້າຍເພາະສີທົນ.

- ເຈົ້ານາງດາງຕິອົດບໍ່ໄດ້ ກໍເລີຍຫຍັບເຂົ້າຫາແລະເວົ້າວ່າ, ເອີ ! ອີນ້ອຍ, ໂຕລືມອັນໃດອັນນຶ່ງຢູ່ເຮືອນເຮົາ ແລະເຮົາໄດ້ຄືມາໃຫ້, ນີ້ເດ !

- ສຸວັນນີຕອບໄປວ່າ. "ບໍ່ ໆ ນາຍເອີຍ, ຂ້ອຍບໍ່ໄດ້ລືມຫຍັງດອກ ແລະຂ້ອຍກໍບໍ່ຂໍ້ຫຍັງກັບເຈົ້າດອກ"

- ເຈົ້ານາຕອບໄປວ່າ. "ຟັງຈັກໜ່ອຍນາ, ຂ້ອຍມີຄວາມເວົ້າ--- ຂ້ອຍ--- ໄປ--- ປ່າ--- ຊູ່ປ້ານ--- ສອງຄວາມທໍ່ນັ້ນແຫຼະ"

- ເວົ້າແຮງ ໆ ກໍຊິເປັນຫຍັງ--- ຂ້ອຍບໍ່ມີຄວາມລະຫັດກັບເຈົ້າຫຍັງດອກ.

- ຊັ້ນກໍມາເອົາເງິນສາດີ.

- ເງິນຂ້ອຍວ່າດີ ? ເຈົ້າບໍ່ໄດ້ຕິດໜີ້ຂ້ອຍ ສັງຫາເວົ້າຫາວວ່າແນວນັ້ນແທ້ !

- ສີທົນຄ່ອຍເວົ້າວ່າ. "ນີ້ຂ້ອຍກໍສົງໃສ. ກໍການສຸວັນນີ--- ອ້າຍຊິເວົ້າໃຫ້ຟັງ--- ອ້າຍກໍປາກຮູ້ຈັກມັນຊິເຮັດຈັ່ງໃດ--- ແລ້ວນ້ອງຈຶ່ງຄ່ອຍເວົ້າໃຫ້ອ້າຍຟັງ. ລອງເບິ່ງດູ, ຫຍັບເຂົ້າໄປໃກ້ ໆ ມັນຫັ້ນ ອ້າຍແນມຢູ່ດອກ"

- ສຸວັນນີຫຍັບເຂົ້າໄປຫາມ້າພຽງສາມກ້າວ. ເຈົ້ານາກໍເອົາມືເທົ້າຫົວອານແລະສັບວ່າ.

- "ນີ້ນະ ! ນ້ອຍ, ເງີນເຈົ້າ, ຢ່າເວົ້າໄປເວົ້າມາທາງໃດເດີ. ຍິນບໍ່? ເຮົາເຫັນວ່າເຈົ້າບໍ່ສົມຄວນພໍ່ສູ້ງກາ--- ແຕ່ບໍ່ແມ່ນເພາະວ່ານີ້, ເອົາໃຈເອົາ--- ນີ້ໃດມື້ນຶ່ງເຮົາຊິໄປຫາດອກ ຄັນເຈົ້າບໍ່ໃຫ້ພື້ອໄປທາງໃດເຮົາຊິໃຫ້ກູງບນຶ່ງອີກ--- ແລ້ວຄັນເຈົ້າປາກໄດ້ຫຍັງໃຫ້ບອກມາ ເມື່ອໜ້າຄັນປາກມາເອົາບ່າວບາບ່ຳເຮົາ ໆ ຊິໄປເອົາມາໃຫ້ອອກມາຖ້າເຮົາປູ່ກາງທົ່ງເນີ ! ເຈົ້າປາກໄດ້ຫຍັງຮີບບອກ ເຮົາຊິຈັດຫາໄປພ້ອມ.

- ເມື່ອນັ້ນ ນາງສຸວັນນີກໍຟາດເງີນໃສ່ໜ້າເຈົ້ານາຍນິດແຮງທັງຮ້ອງຂຶ້ນວ່າ, "ນີ້ແຫຼະຂອງຕ້ອນກູ ກູຂອບໃຈນຳມຶງຫຼາຍ ໆ ແລະບາດມຶງກາຍໄປທົ່ງບ້ານກູ ໃຫ້ບອກໄວ້ກ່ອນເນີ ພວກຜູ້ບ່າວບ້ານກູຫາກຊິໄປຕ້ອນມຶງດອກ ເພາະພວກເຂົາຮັກແລະນັບຖືຫຼາຍ ເຕັມທີ່ ເຈົ້ານາຍຜູ້ຈັ່ງຊິຜູ້ຫວັງຮັກແລະປ້ອງກັນຍິງທຸກຍາກລຳບາກຄືມຶງນີ້ ! ມຶງຈົ່ງຄອຍເບິ່ງເທີ"

- ເມື່ອນັ້ນເຈົ້ານາຈຶ່ງຕອບໄປດ້ວຍຄວາມໂກດ ພ່ອງເງືອດຄ້ອນຂນາບວ່າ ມຶງເປັນຄົນຂີ້ດີວະ ຄົນສັບຫຼັບ ອີຫຼາຍລົ້ນ ! ມຶງຫາເວົ້າເພາະບໍ່ມີ ບໍ່ແມ່ນມຶງມາຊອກເງີນນຳກູຫວະ ເອີ ! ກູຮູ້ຈັກອຸບາຍມຶງແລ້ວນາວນີ້ !

- ສຸວັນນີຄອຍຫຼັງຄືນທັງຢ້ານສັ່ນ. ຄາວນັ້ນສີທົນກໍໂດດຈັບໃຫ້ງມ້າເຈົ້ານາ ແລ້ວຖູທົ່ງໄປໝົດແຮງວ່າ, ກູຮູ້ຈັກແລ້ວນາດນີ້

ເຂົ້າໃຈແລ້ວ ! ຄວາມກັບກອກຫຼອກລິ້ນຂອງມັນ--- ມາ, ລົງມາດິນພີ້ ອັນຍາເອີຍ ! ຮີບລົງມາ ເຮົາຈິ່ງຄ່ອຍວ່າກັນສອງຕໍ່ສອງ.

- ເຈົ້າບໍ່ຄຶດວ່າຈະສູ້ ກໍເລີຍສົ້ນເຕັກສ້ວງມ້າເພື່ອຜ່າຍໜີ ທັງເງືອດຄ້ອນຈະຕີນີ້ພໍ່ບາໃຫ້ປະໄຫງ້ ແຕ່ສີຫົນຫຼົບໄດ້ ແລ້ວກໍຈັບຂາເຈົ້ານາຊາກລົງດິນ ຊຶ່ງວິກລົງໃນພຸ່ມຂີ້ແຮດ. ເຖິງເຈົ້ານາບິກບີນເພື່ອລຸກຂຶ້ນສູ້ເທົ່າໃດກໍຕາມ ພໍ່ບາຫາກຫົວເຂົາເຕັກໜ້າອົກໄວ້ຢູ່ແລ້ວ ທັງເວົ້າໄປໂດຍຄວາມໂມໂຫວ່າ. ມຶງເປັນຄົນບໍ່ມີຫົວໃຈ ຄັນກູປາກຕ້ວງມຶງບໍ່ຍາກຈັກດີ້ ແຕ່ກູຫາກບໍ່ປາກກະທຳຮ້າຍແກ່ຜູ້ໃດ ແລະເຖິງຈະໃສ່ໂທດໃສ່ກັນມຶງເທົ່າໃດ ມຶງກໍບໍ່ຮູ້ຮ້າຍຮູ້ດີຈັກເທື່ອດອກ !--- ແຕ່ຄັນມຶງຫາກຍອມຮັບສາຣະພາບເສັງຕໍ່ໜ້າຍິງຄົນນີ້ ກູຊິປ່ອຍມຶງລຸກຂຶ້ນ !

- ເມື່ອເຈົ້ານາຮູ້ສຶກວ່າແມ່ນການຊິງຊູ້ແລ້ວ ກໍເວົ້າຫຼີ້ບ ໆ ຫົວ ໆ ໄປວ່າ "ຍອມກໍຍອມ ຄັນອະນຸຍາດໃຫ້ດື່ມເຫຼົ້ານຳກັນແລະຈູບແກ້ມນາງນຶ່ງ" ເພາະເຂົາຄຶດວ່າ ຄວາມຜິດຂອງເຂົາບໍ່ໜັກໜາ ພໍເປັນແຕ່ຄວາມເວົ້າ.

- ສີຫົນຕອບໄປວ່າ, "ຢ່າເຮັດລຳບາກກູຫຼາຍ" ແລ້ວກໍຊຸກຫົວເຈົ້ານາໃສ່ພື້ນດິນ ພ່ອງເວົ້າວ່າ. ກູແຮງບໍ່ປາກພົບນ້ຳໜ້າມຶງ. ເອົາເທີ ! ມຶງປາກຮ້າຍກໍຮ້າຍມາເບິ່ງດູ ຄັນມຶງໄປທາງນັ້ນຈຶ່ງຄ່ອຍແວ່ຫາກູແດ່ເນີ.

- ເມື່ອນັ້ນພໍ່ນາກໍຈັບເອົາຄ້ອນໜານແຫ່ງ ຂອງເຈົ້ານາ ມາທຸບໃສ່ຫົວເຂົ່າເພື່ອສະແດງກຳລັງແຂນຂອງຕົນ ແລ້ວກໍແກວ່ງເຂົ້າປ່າເປັນທ່ອນ ໆ ທັງສະແດງທ່າທາງຂຶ້ງຄຽດ.

- ຄັນຈັບແຂນລູກຊາຍ ແລະຍິງສາວໄດ້ແລ້ວ ກໍພາກັນບ່າງໜີໄປທັງສັ່ນໂມໂຫ.

# ໑ປ. ເມື່ອກັບມາບ້ານຫາຄອບຄົວ

- ປະມານສິບຫ້ານາທີ ພວກເຂົາເຈົ້າກໍພົ້ນຈາກປ່າໜາມ ອັນແຮກແລ້ວ ບັດນີ້ມ້າບັກສ້ຽງຂາວກໍພາເຂົາເຈົ້າໄດ່ຕາມຖນົນຫຼວງ. ເມື່ອພົບພໍ່ສິ່ງຄຸ້ນເຄີຍ ສ້ຽງຂາວກໍແຫນຫົງທຸກທີ ໄປ ເວລານັ້ນຄໍາ ຈັນກໍເລົ່າສິ່ງທີ່ລືມຈໍາໄດ້ແລະເປັນໄປແລ້ວນັ້ນໃຫ້ພໍ່ຟັງວ່າ.

- "ພໍ່ແມ່ເຮົາໄປຮອດ ຄົນຜູ້ນັ້ນກໍມາຫາ ນ້າສາວສຸວັນນີຢູ່" ຄອກສັດບ່ອນເຮົາໄປຮອດໃນທີວທີ ເພື່ອແຍງລູກສັດງາມ. ນ້ອຍຂື້ນ ຫຼົບຢູ່ຮາງຫຍ້າ ຄົນຜູ້ນັ້ນບໍ່ເຫັນນ້ອຍ ແລ້ວເຂົາກໍຍ່າງມາຫາສາວ ແລ້ວກອດເອົາ---

- ສີທົນເວົ້າໄປທັງສັ່ນວ່າ, ນ້ອງງຸດປະໃຫ້ເຂົາຈັບທອະ ສຸວັນນີ ?

- ນ້ອງຄິດວ່າແມ່ນທັມນຽມສມັຍໃໝ່ໃນເມື່ອພໍ້ກັນ ຢູ່ບ້ານ ເຮົາລາວເຫື່ອກັນີ ທັງນະວາເມື່ອມີຜູ້ໃດຜູ້ນຶ່ງມາເຂົ້າເປັນບ່າວບາ ແມ່ເຖົ້າເຈົ້າເຮືອນ ກໍບັງມາຕ້ອນຮັບແລະຈູງແຂນໄປຫາທີ່ນັ່ງທີ່ເຊົາ ຫັ້ນເດ. ອັນນີ້ນ້ອງກໍຄິດວ່າແມ່ນສະຖານຮັກແພງກັນ ແລະສັດຈິງ ຕໍ່ກັນ.

- ຄໍາຈັນເມື່ອເຫັນວ່າຕົນເປັນເຄົ້າມີທານ ກໍຄຸບຂຶ້ນອີກວ່າ

ຄົນຜູ້ນັ້ນເວົ້າບໍ່ມ່ວນໃຫ້ອີກ ຄວາມນັ້ນນ້ອຍບໍ່ປາກເວົ້າຈັກເທື່ອ ປາກ
ລືມຊ້ຳສາແຕ່ພໍ່ໄດ້ຍິນກາລືມແລ້ວ--- ຄັນພໍ່ປາກຟັງນ້ອຍຊິ---

- ບໍ່ ໆ ! ລູກເອີຍ ພໍ່ບໍ່ປາກໄດ້ຍິນ ປາກໃຫ້ລູກລືມສາ
ຄວາມນັ້ນ.

- ເດັກຕອບວ່າ, ຊັ້ນນ້ອຍກາລືມແລ້ວ--- ແລ້ວຄົນຜູ້ນັ້ນກໍ
ຖຽດເພາະສາວວ່າຊິໜີ ຄົນຜູ້ຂີ້ຮ້າຍນັ້ນກໍວ່າ ປາກໄດ້ຫຼັງເຂົາກາ
ຊິເອົາໃຫ້ ຮ້ອຍນຶ່ງ--- ສອງຮ້ອຍ--- ສາວກາຖຽດຄືກັນ ແລ້ວເຂົາ
ກໍໜຸ້ງບເຂົ້າຫາສາວ ເຮັດຄືຊິຕີນັ້ນແຫຼະ ນ້ອຍປ້ານນ້ອຍແລ່ນກອດ
ສາວທັງຮ້ອງໄຫ້ຂຶ້ນ--- ຄົນຮ້າຍນັ້ນວ່າຈັ່ງຊິແຫຼະ ແມ່ນຫຼັງອັນນີ້
ມັນມາແຕ່ໃສບັກອັນນີ້ ? ເອົາມັນໜີໄວ ໆ ເຂົາເງືອດຄ້ອນຊິວີນ້ອຍ
ແຕ່ສາວຮັບໄວ້ແລະຕອບວ່າ ຂໍນຳກ່ອນນາຍເອີຍ ແລ້ວຈຶ່ງຄ່ອຍເວົ້າ
ກັນ ດຽວນີ້ຂ້ອຍຊິພາເດັກນ້ອຍນີ້ໜີໄປຫາດຫຼວງພຸ້ນກ່ອນ ຊິກັບ
ມາອີກດອກ--- ພໍອອກຫວິດຄອກສັດ ສາວກໍເວົ້ານຳນ້ອຍວ່າ, ໄປ !
ບັກຫຼ້າເຮົາ ຢູ່ບໍ່ໄດ້ດອກຈັ່ງແມ່ນມັນຮ້າຍ ປາກແຕ່ຂີ່ມເຫງພວກ
ເຮົາ ແລ້ວນ້ອຍກັບສາວກໍອອກທາງເບື້ອງຫຼັງ ຜ່ານທົ່ງນ້ອງນຶ່ງ
ໄປຊອກຫາພໍ່ຢູ່ຫາດຫຼວງແຕ່ພໍ່ບໍ່ຢູ່ຫັ້ນ ແລະເຈົ້າເຮືອນເຂົາກໍບໍ່
ປາກໃຫ້ເຮົາປີ້ນຖ້າຢູ່ບ້ານເຂົາ ແລ້ວຄົນຜູ້ຂີ່ມ້າດຳນັ້ນກໍໄລ່ຕາມເຮົາ
ມາ ພວກເຮົາກໍຜ່າຍໜີໄປໄກ ໆ ທັງແລ່ນເພື່ອໄປລີ້ ຄົນຜູ້ນັ້ນກໍ
ນຳເຮົາມາອີກ ຄັນເຮົາເຫັນມັນພວກເຮົາກໍລີ້ ຄັນມັນກາຍແລ້ວ

ພວກເຮົາກໍພາກັນແລ່ນມາທາງບ້ານເຮົານີ້ ແລ້ວກໍເຫັນພໍ່ມາແລະ ພໍ່ກໍເຫັນພວກເຮົາຢູ່ຫັ້ນ ຈັ່ງຊັ້ນແລ້ວພໍ່ ເພາະນ້າສາວ ນ້ອຍບໍ່ໄດ້ ຫຼີງຄວາມໃດເພາະ.

- ບໍ່, ບັກຫຼ້າເວົ້າການຊື່--- ແດ່ດຽວນີ້ສີທົນເອີຍ ເປັນ ພຍານໃຫ້ນ້ອງແດ່ ຄັນໃຫບ້ານເຮົາຖາມວ່າເປັນຫຍັງມັນບໍ່ປາກຢູ່ ພຸ້ນນັ້ນ ໃຫ້ອ້າຍແກ້ໄຂຊ່ອຍນ້ອງແດ່ ວ່າບໍ່ແມ່ນຍ້ອນຄວາມຂີ້ຄ້ານ ຂີ້ແນະ ບໍ່ປາກເຮັດວຽກກະທຳການ--- ຂໍເພິ່ງແດ່.

- ສີທົນເວົ້າຕໍ່ສຸວັນນີວ່າ ນ້ອງເດ ອ້າຍກໍຂໍໃຫ້ນ້ອງຖາມ ໃຈນ້ອງເອງເບິ່ງ ຄັນຈຳເປັນຕ້ອງປາບຄົນສັນດານດີ້ເພື່ອປ້ອງກັນຜູ້ ຍິງນັ້ນ ຄົນຜູ້ຊ່ຳອ້າຍຊິຖືວ່າຊະຣາແລ້ວຫຼືຍັງ ? ອ້າຍປາກລອງ ພົບຜູ້ຖືບັກກີ ຫຼືບ່າວໜຸ່ມງາມຜູ້ອື່ນ ໆ ເບິ່ງ ຄັນບໍ່ແປ້ສາແລ້ວ--- ຖືລູກອ້າຍໄດ້ເວົ້ານັ້ນ ນ້ອງຊິຄິດວ່າຢ່າງໃດ ?

- ຄືວ່າ, ອ້າຍໄດ້ທຳຄຸນຄວາມດີໃຫ້ແກ່ນ້ອງ. ແລະນ້ອງ ກໍຂໍຂອບໃຈຕໍ່ອ້າຍເປັນຢ່າງຍິ່ງ ເທົ້າວັນຕາຍ.

- ໝົດທໍ່ນັ້ນຫວະ ?

- ເດັກຕໍ່ຄວາມໄປວ່າ, ພໍ່, ນ້ອຍດຸດລືມຄວາມສັນຍາຕໍ່ສາວ ເທື້ອໜ້າກ່ອນເພາະ ເມື່ອຮອດເຮືອນສາກ່ອນຈຶ່ງຄ່ອຍເວົ້າ ແລະແມ່ ເຖົ້າກາເວົ້າໃຫ້ເພິ່ນຟັງນຳອີກ.

- ຄຳສັນຍາຂອງເດັກນັ້ນທຳໃຫ້ສີທົນຄຶດສະເທືອກ, ເປັນ

ໂອກາດທີ່ເຂົາຕ້ອງອະທິບາຍໃຫ້ພໍ່ເຖົ້າແມ່ເຖົ້າເຂົາຟັງ ໃນການທີ່ເຂົາທໍ້ຖອຍຕໍ່ການເປັນໄປໃນເຣື່ອງລົມເອົານາງໜ້າຍນັ້ນ ໂດຍບໍ່ຕ້ອງຊີ້ແຈ່ງຄວາມຄິດຄວາມເຫັນຂອງຕົນໂດຍກົງ. ເມື່ອຕົນຢູ່ເປັນສຸກສະບາຍແລ້ວ ຈະແນນນຳໃຫ້ຜູ້ອື່ນໄດ້ສຸກນັ້ນກໍງ່າຍ ແຕ່ເມື່ອຖືກອາຣິຕິຕຽນດ້ວຍຂ້າງໃດຂ້າງນຶ່ງແລ້ວ ກໍເປັນອັນຂັດສົນ.

- ດີແຕ່ເດັກກຳລັງນອນຫຼັບ ໃນເວລາເຂືອກັບເມືອຮອດເຮືອນແລ້ວ ສີຫົນກໍຄ່ອຍວາງເດັກລົງຕຽງເພື່ອບໍ່ໃຫ້ມັນຕື່ນ ແລ້ວເຂົາກໍອະທິບາຍເຫດການທຸກສິ່ງທຸກຢ່າງທີ່ຄວນເວົ້າ. ພໍ່ເຖົ້າສຸທິສານເວລານັ້ນນັ່ງຢູ່ປະຕູເຮືອນ ແລະຟັງລູກເຂີຍເລົ່າເຣື່ອງໂດຍຄັກແນ່. ເມື່ອເຖົ້າເຂົ້າໃຈໃນຄວາມອອດໂຖງຂອງນາງໜ້າຍ ທັງຕ້ອງສລະເວລາໄປເອົ້າໄປລົມຢູ່ເລື້ອຍ ແລະຍັງບໍ່ທັນຄັກວ່າຈະໄດ້ນັ້ນແລ້ວ ພໍ່ເຖົ້າກໍງຶກຫົວແລະເວົ້າໄປວ່າ, ຄັນເປັນດັ່ງນັ້ນແທ້ກໍບໍ່ແມ່ນຄວາມຜິດຂອງເຈົ້າສີຫົນ ທ່ອນຊິເປັນໄປໄດ້--- "ແລະເມື່ອເຖົ້າໄດ້ຊາບວ່າເຂົາພານາງສຸວັນນີກັບຄືນມາຫ້ອນວ່າ . ສີຫົນປາກເອົານາຍຜ່າຍຈາກຄວາມຂົ້ມເຫັງ ແລະຮ້າຍກາດຂອງເຈົ້ານາຜູ້ບໍ່ສົມຄວນ ເຖົ້າກໍງຶກຫົວແລະເວົ້າໄປວ່າ, ທັ່ນແມ່ນໂທດຂອງເຈົ້າສີຫົນ ນີ້ກໍອາດເປັນໄດ້---"

- ເມື່ອສີຫົນໄດ້ເລົ່າເຣື່ອງ ແລະຄວາມຊອບທັນໃຫ້ສອງເຖົ້າຟັງສຸດແລ້ວ ແມ່ເຖົ້າກໍທອດໃຈໃຫ່ຍ ແລະສອງເຖົ້າກໍເບິ່ງໜ້າ

ກັນ. ບັດນີ້ພໍ່ເຖົ້າເຈົ້າເຮືອນກໍລຸກໄປທັງເວົ້າວ່າ. "ເອົາເທາະ ເອົາແຕ່ພົນມະຊາດເປັນເຫຼະ ຄວາມຮັກແລະໄມຕີບໍ່ມີ ໃຜຂົ່ມເຫັງໃຜ"

- ສີທົນ ! (ແມ່ເຖົ້າບອກວ່າ) ມາກິນເຂົ້າແລງສາລູກເອີຍ! ຄວາມບໍ່ຖືກຕ້ອງຄ່ອງກັບພາໃຫ້ເຮົາໝອງ ແຕ່ວ່າພຍາແຖນບໍ່ເຄີຍປັ້ນຖືກຈັກເທື່ອດອກ ບໍ່ໄດ້ບ່ອນນີ້ກໍໄປຊອກເບິ່ງບ່ອນໃໝ່ຊັ້ນແລ້ວ.

- ພໍ່ເຖົ້າສອຍລອຍຄວາມເມັຽວ່າ. ເອີ ! ຈັ່ງຄ່ອຍຊອກເບິ່ງບ່ອນໃໝ່.

- ເມື່ອນັ້ນທັງຄອບຄົວກໍສງັດສງຽງ ແລະມື້ໜ້າມາຄຳຈັບກໍລຸກພ້ອມໄກ່ ໂດຍບໍ່ຄິດເຖິງເຫດການອັນພິລຶກໃນວັນວານນີ້. ມັນບໍ່ຄິດຮູ້ເມື່ອຫຍັງເລີຍວັ້ງເດັກບ້ານບອກຜູ້ອື່ນ ມີແຕ່ຄຶດປາກຫຼົບໝາກຂີ້ຄວາຍຫຼື ພັດງົວກັບນ້ອງທີ່ນັ້ນ.

- ສີທົນກໍດີກັນ ເຂົາກໍເຮັດວຽກໃຫ້ລືມຄາວ ແຕ່ບໍ່ສວ່າງເຫງົາໄດ້ ຈົນວ່າຊາວບ້ານເຫັນວ່າງ່າງຫຼງ. ເຂົາບໍ່ຫານປາກນຳນາງສຸວັນນີແລະຈົນບໍ່ຫານເບິ່ງໜ້າ. ສ່ວນຫຼາຍຄັນຄົນຖາມວ່ານາງໄປຢູ່ທົ່ງໃດຫຼື ທົບໃດ ເຖິງຮູ້ຈັກປານໃດເຂົາກໍບໍ່ຫານເວົ້າຮອດ. ເຖິງເຂົາຮູ້ຢູ່ວ່ານາງຕ້ອງເປັນທຸກລຳບາກກໍດີ ເຂົາກໍບໍ່ຫານບອກພໍ່ເຖົ້າແມ່ເຖົ້າ ໃຫ້ເອົານາງມານຳເຂົ້າບ່າວນາໃນປີໜ້າ. ແຕ່ນາງບໍ່ທຸກດອກ ແລະແມ່ປ້າຈຳປາກໍບໍ່ເຂົ້າໃຈວ່າ ດ້ວຍເຫດໃດຟືນໃນກ້ອງໄຕ້ລ່າງບໍ່ໝົດເປັນ ແລະເຂົ້າໃນເລົ້າເຖິງຍັງແຕ່ຕ້ານບຸງສອງບຸງ ກິນ

ເປັນເດືອນສອງເດືອນກໍບໍ່ໝົດ. ເຜືອກມັນຫົວຜັກຫົວຫງ້າກໍຕົ້ນແຖມຂຶ້ນຊັກໃຊ້ ແລະເຖິງຈະມີຜູ້ໃດຜູ້ນຶ່ງມາລັກເອົາກ້ງຫາບກໍຄົງບໍ່ຮູ້ເມື່ອ ເຖົ້າຈຳປາສົງໄສແຕ່ບິບດີ ເຖົ້າໄດ້ເຕືອນລູກສາວບໍ່ໃຫ້ເວົ້າໄປເວົ້າມາທາງໃດ ເພາະຢ້ານຄົນທັງຫຼາຍຕື່ນຫ້ວງແລະຢ້ານເຂົາວ່າ ແມ່ແລະລູກເປັນໝໍມົນ. ເຖົ້າຄືດວ່າ ແນວໃດກໍແມ່ນຜີມາປັ່ນໃຫ້ແກ່ລາວຈະນີມົນຄູບາອາຈານມາຊໍາຣະຣະໜີ ກໍແຕ່ເມື່ອພຍາຍົມຜີບານມາຮ້ອງຮຽກເອົາຂວັນລາວທໍ່ນັ້ນ.

- ນາງສຸວັນນີເຂົ້າໃຈດີ ໃນການເປັນໄປ ແຕ່ນາງບໍ່ຫານເວົ້າກໍ່ສີທົນ ເພາະຢ້ານຄວາມຫຼັງກັບເກີດຄືນມາ--- ກໍເລີຍມິດປູ່ຄືບໍ່ຮູ້ບໍ່ເຫັນອັນໃດນັ້ນເລີຍ.

# ໑໔. ແມ່ເຖົ້າເຈົ້າເຮືອນ

- ວັນນຶ່ງ ເມື່ອເຖົ້າແມ່ຢູ່ສອງຄົນກັບລູກເຂີຍ ເຖົ້າຈຶ່ງເວົ້າວ່າ, ລູກເອີຍ,ແມ່ປະກົດເຫັນວ່າເຈົ້າຢູ່ບໍ່ດີມີບໍ່ແຮງແລ້ວແລ່ວ ເພາະລູກປະເຂົ້າປະນ້ຳ ບໍ່ມ່ວນບໍ່ຊື່ນຄືແຕ່ເກົ່າມາຫຼັງ. ເຫັນຊິມີຜູ້ໃດຜູ້ນຶ່ງ ຫຼືພໍ່ແມ່ນີ້ເອງຫຼັງເຮັດໃຫ້ເຈົ້າບໍ່ດີອົກດີໃຈ ໃຫ້ໄດ້ລຳບາກຍາກແຄ້ນຊັ້ນບໍ່ ?

- ບໍ່ບາແມ່ເອີຍ ຄັນລູກຫາກຄືດເມັດນຶ່ງວ່າເປັນບຳພໍ່ແມ່ ຫຼືຜູ້ໃດຜູ້ນຶ່ງໃນຄອບຄົວຂອງເຮົາແລ້ວ ກໍແມ່ນລູກເປັນຄົນເນຣະຄຸນສາຫັ່ນນັ້ນແລ້ວ ດ້ວຍວ່າແມ່ກໍຮັກລູກ ແລະລູກກໍຮັກແລະນັບຖືແມ່ຄືແມ່ຄີງ ໆ ນີ້.

- ຊັ້ນກໍ ຫຼືວ່າລູກຫາກງ່ອນເຫງົານ້ອນເມັຽຜູ້ເມື່ອລາງເຈົ້າຫັ້ນບໍ ? ກວ່າຈະປະໃຫ້ຕົນເອງເສົ້າໝອງຈອງຫັກຢູ່ດັ່ງນີ້ ກໍຫາເອົາເມັຽໃໝ່ດີພໍ່ເຈົ້າໄດ້ໂອບໂລມຫັ້ນສາເດ ລູກເອີຍ.

- ແມ່ນຄວາມແນໃດນໍ ນີ້ລູກກໍດີຢູ່ແກ່ບຶງແນວພໍ່ແມ່ບອກນັ້ນຄືດບໍ່ເຫັນ ຄັນເຫັນວ່າຊິລືມຄຳນິວ ຊ້ຳພາໃຫ້ຄືດຮອດ.

- ອັນນີ້ ແມ່ນພໍ່ແມ່ດວງຫາຄວາມມັກຂອງເຈົ້າບໍ່ຖືກແລ້ວສິເຫັນ ດັ່ງນັ້ນກໍໃຫ້ລູກຊ່ອຍພໍ່ແມ່ແດ່ ແລະມັກຜູ້ໃດກໍໃຫ້ເວົ້າສາແນວໃດກໍຄົງມີຢູ່ຜູ້ນຶ່ງທີ່ຕ້ອງອົກຕ້ອງໃຈເຈົ້າ ເພາະພຍາແຄນບໍ່

ເຄີຍປັ້ນຄຶກຈັກເທື່ອ ຄັນລູກຫວັງຮ່ວມສຸກກັບຜູ້ໃດຜູ້ນຶ່ງນັ້ນ ກໍລອງ ໄປກ່າວໂອນເບິ່ງ ເຖິງຍິງນັ້ນຂີ້ລ້າຍຫຼື ງາມເຖົ້າຫຼື ໜຸ່ມທຸກຫຼື ຮັ່ງມີ ນັ້ນກໍດີ ພໍ່ແມ່ກໍໄດ້ຄິດລຶງຈັ່ງວ່າທັ້ນແລ້ວ ເອົາແຕ່ໃຈລູກເປັນ ເພາະ ເມື່ອເຫັນລູກເປັນຫາງ່ວນເປັນເຫງົາພໍ່ແມ່ກໍເສົ້າໝອງ ຖ້າລູກເສັຽ ຫວັງພໍ່ແມ່ກໍຫາຄວາມສະບາຍບໍ່ໄດ້.

- ສີທົນຕອບໄປວ່າ ຄັນເປັນຊັ້ນແທ້ ກໍສາທຸຍໍມືນໍາພໍ່ແມ່ ຫຼາຍ ໆ ແລ້ວ ແຕ່ຄວາມກະຣຸນາຂອງພໍ່ແມ່ແກ້ຄວາມຈົນໃຈຂອງ ລູກບໍ່ໄດ້ ເພາະຍິງຜູ້ລູກມັກນັ້ນເຂົາພັດບໍ່ມັກລູກ.

- ເຂົາຍັງໜຸ່ມຍັງນ້ອຍໄພດີເບາະ ຄວາມໜຸ່ມນ້ອຍພາ ໃຫ້ເຈົ້າຈົນໃຈບໍ່ຮູ້.

- ແມ່ນແລ້ວແມ່ເອີຍ ລູກເປັນບ້າຄອຍຜູ້ໜຸ່ມທັ້ນແຫຼະ ຈັກຊິເຮັດແນວໃດຈັ່ງຊິເວັ້ນໄດ້ ລູກກໍຄິດປາກຜ່າຍຢູ່ ແຕ່ເຖິງຈະ ເຮັດວຽກ ຫຼືຢູ່ລ້າ ໆ ກັບລູກເຖົ້າພໍ່ແມ່ກໍບໍ່ຫາຍຄວາມຄິດຫາສິ່ງ ດຽວນັ້ນໄດ້.

- ຊັ້ນບໍ່ແມ່ນເຂົາໃສ່ສເນ່ລູກຫວະສີທົນ ? ຄັນເປັນຊັ້ນແທ້ ກໍບໍ່ມີແນວຊິເປົ່າຊິປາໄດ້ແລ້ວ ມີແຕ່ທໍ່ວ່າ ຍິງສາວຜູ້ນັ້ນປຽນລະທິ ນິດໃສ ແລະກັບຟັງຖ້ອຍຟັງຄວາມລູກນັ້ນສາຈັ່ງຊິຫາຍປ່ວງ. ແລ້ວ ໃຫ້ບອກແມ່ແດ່ຍິງຜູ້ນັ້ນແມ່ນໃຜ ເຂົາຊື່ວ່າຈັ່ງໃດ ?

- ສີທົນຕອບໄປວ່າ ໂອຍ ! ແມ່ເອີຍ ລູກບໍ່ຫານຊິເວົ້າແລ້ວ ປ້ານແມ່ຫົວຂວັນ.

- ແມ່ບໍ່ຕິຽນເຈົ້າດອກສີທົນ ເພາະເຈົ້າກໍຢູ່ໃນຄວາມລຳບາກຍາກໃຈ ແລະແມ່ກໍບໍ່ຢາກໃຫ້ເຈົ້າເປັນໄປກວ່ານັ້ນອີກ ຫຼືວ່າແມ່ນສາວສີໄວຫັ້ນຫວະ ?

- ບໍ່ແມ່ນ, ບໍ່ແມ່ນຜູ້ນັ້ນດອກ ?

- ຫຼືວ່າສາວກຸຫຼາບຫັ້ນຫວະ ?

- ບໍ່,

- ຮອ້າຍ ! ດຸດຊິໃຫ້ແມ່ໄລ່ໝົດບ້ານໝົດເມືອງພຸ້ນຫວະ ເຫດໃດມັນຊິສຸດເປັນ.

- ສີທົນກົ້ມໜ້າລົງ ແຕ່ບໍ່ຫອບຕົກລົງໄປຢ່າງໃດ.

- ແມ່ເຖົ້າສຸທິສານຕໍ່ຄວາມໄປອີກວ່າ ເອີ ! ນີ້ ນີ້ປະໃຫ້ເຈົ້າຄິດສາກ່ອນສີທົນ ບາງທີນີ້ໜ້າມາລູກຊິເຊື້ອໃຈແມ່ ຫຼືປ້າເຈົ້າບຸ ເພາະເຂົາກໍເປັນຜູ້ຊ່າງເວົ້າຊ່າງລົມແດ່.

- ແລ້ວເຖົ້າກໍເກັບເອົາເຄື່ອງທີ່ຊັກແລ້ວໄປຕາກໄວ້ພຸ່ມ.

- ສີທົນກະທຳເໝືອນເດັກທີ່ບໍ່ຫານເວົ້າສິ່ງຕົນປາກໄດ້ ໃນເນື້ອເພິ່ນບໍ່ປາກເວົ້ານຳວົນ. ເຂົານຳແມ່ເຖົ້າເຂົາໄປ ແລ້ວກໍໄຂວ່າແມ່ນນາງສຸວັນນີ.

- ເວລານັ້ນແມ່ເຖົ້າສຸທິສານກໍງົນງົນ ເພາະແມ່ນຍິງທີ່ລາວແນໃສ່ແລະເກືອບຈະອອກປາກແລ້ວ ແຕ່ລາວອົດໄວ້ບໍ່ອອກປາກຫຼືຄິດຫາ. ເມື່ອເຫັນວ່າຄວາມສງົບພາໃຫ້ສີທົນໄດ້ເຫງົາ ເຖົ້າ

ກໍວາງຖຸເຄື່ອງແລະເວົ້າໄປວ່າ. ຊັ້ນກໍຊ່ວຍວຽກແມ່ບໍ່ແດ່ວີ ເອົາຖືຖຸ ນີ້ໄປດູ ແລ້ວຈຶ່ງຄ່ອຍເວົ້ານຳແມ່ອີກ ລູກຄິດຖືກແລ້ວຫວະສີຫົນ ? ຕົກລົງຈັ່ງຊັ້ນແທ້ຫວະ ?

- ໂອຍ ! ແມ່ເອີຍເວົ້າບໍ່ທັນໄດ້ດອກ ໃຫ້ນັບໄດ້ສາກ່ອນຈຶ່ງ ວ່າຕົກລົງ ຄັນເຂົາບໍ່ມັກລູກ ກໍມີແຕ່ເຊົາກັນທໍ່ນັ້ນແລ້ວ ຄັນແມ່ນ ຂອງເຊົາເປັນ.

- ຄັນເຈົ້າເຊົາບໍ່ໄດ້ເດຊັ້ນ ?

- ອັນໃດກໍມີກົກມີປາຍໝົດຫັ້ນແລ້ວແມ່ເອີຍ ອົດຫຼາຍ ທ້ອງໄຄ່ງ ກົງຫຼາຍຫຼັງຫັກ.

- ຄັນລູກບໍ່ໄດ້ດູດຊີບໍ່ເປັນຄົນຕໍ່ໄປຊັ້ນຫວະສີຫົນ ? ເທວະ ດາເອີຍ ! ຄົນຄືລູກນີ້ ແມ່ບໍ່ປາກໃຫ້ເວົ້ານາຄວາມນັ້ນ ຄັນເວົ້າຫຼາຍ ຊ້າຊີກຸ້ງງ. ລູກເປັນຄົນໃຈແຂງ ຄົນກ້າຫານ ຄັນເສັງຫວັງນັກເກີດ ເຄາະຮ້າຍກໍ ເອົາເທາະອົດເອົາລູກເອີຍ ແມ່ຄິດວ່າຍິງສາວຜູ້ທຸກ ຍາກ ຊິ່ງເຈົ້າຫວັງນຳຄວາມຮຸກຄວາມ ຈະເອີ້ນໄປສູ່ນັ້ນ ຄົງບໍ່ຂຶ້ນ ຄວາມດອກ.

- ແມ່ນແລ້ວ ແຕ່ເຂົາຫາກບໍ່ຮັກ.

- ລູກໄດ້ລົມເຂົາວ່າຈັ່ງໃດແດ່ຊັ້ນ ?

- ລູກໄດ້ວ່າ ແມ່ກໍໄດ້ອຸດໜຸນຄ້ຳຊູເຂົາມາກໍຫຼາຍແລ້ວ--- ເຂົາກໍໄດ້ກອບວ່າ ຈະກອບບຸນແທນຄຸນດອກ ແຕ່ເຂົາຫາກບໍ່ຍິນດີ ນຳການແຕ່ງດອງ ເຖິງລາບຍົດກໍການ.

- ຖັນເຂົາເວົ້າດັ່ງນັ້ນກໍແມ່ນເຂົາມີນ້ຳໃສໃຈຈິງ ແຕ່ທໍ່ນັ້ນ ມັນບໍ່ສວ່າງຄວາມກະສັນຂອງເຈົ້າສີທົນ ຖ້າເຂົາບໍ່ລືກລຶງແກ່ເຮົາ ແລະເຮົາບໍ່ລືກລຶງແກ່ເຂົາເສັຽກ່ອນ ຊັ້ນດວາ ?

- ອັນນີ້ແຮງຮ້າຍແລ້ວ ດ້ວຍເຂົາວ່າ ຫົວໃຈເຂົາບໍ່ມັກ ວ່າຊັ້ນ.

- ຖັນເຂົາວ່າເຂົາບໍ່ຄຶດມັກ ແມ່ນເຂົາບໍ່ຢາກໃຫ້ເຈົ້າໄປ ກັ້ງວ ໆ ວຽນ ໆ ອັນນີ້ກໍແມ່ນເດັກຄວນນັບຄວນຖືແທ້ ແລະພາໃຫ້ ເຮົາລືມຄວາມເປັນເດັກຂອງເຂົາ ໂດຍຫາຄວາມຊອບທັມມາແລກ ປ່ຽນ.

- ເມື່ອເຫັນຕິນຄຶດບໍ່ອອກແລ້ວ ສີທົນກໍຕອບໄປວ່າ ຄັນ ເປັນຊັ້ນແທ້ລູກແຮງປ້ານເຂົາອີກຽດລູກແລ້ວ.

- ແມ່ເຖົ້າຈຶ່ງຕອບໄປວ່າ ສີທົນເອີຍ ໃຫ້ລູກສັນຍາວ່າແມ່ ສາ ໃນລະວ່າງສາມວັນເຈັດວັນ ວ່າລູກນັ້ນຊິຢູ່ດີກິນແຊບນອນຫຼັບ ແລະເບີກບານສຳຣານໃຈ ແມ່ຊິລອງໄປກ່າວໂອມເບິ່ງສຸດກຳລັງ ຖ້າ ໄດ້ຫຼືບໍ່ໄດ້ ລູກຫາກຊິຮູ້ຈັກວ່າເຂົາເປັນຍິງຜູ້ຈັ່ງໃດ.

- ອາທິດນຶ່ງລ່ວງມາແລ້ວ ສີທົນກໍໄດ້ທຳຕາມຄວາມສັນ ຍາ ແຕ່ບໍ່ເຫັນແມ່ເຖົ້າສຸທິສານວ່າຢ່າງໃດຢ່າງນຶ່ງພໍສຳຄັນ ແລະ ເພິ່ນເສີຍຢູ່ ພໍ່ນາກໍອຸສາລະງັບຄວາມໂສກໄປ ແຕ່ຮ່າງກາຍເຂົາ ຫາກລ່າເຫຼືອງ ແລະຈິດໃຈຫົນຫວຍ.

# ໑໕. ນາງສຸວນີ

- ສຸດທ້າຍໃນວັນສິນຕອນເຊົ້າ ພໍ່ສີທົນກັບມາແຕ່ຕັກບາດ ແມ່ເຖົ້າກໍຖາມຫາເນື້ອຄວາມ ທີ່ເຂົາຄົງໄດ້ຮັບຈາກນາງສາວຜູ້ທີ່ຮັກ ໃນເມື່ອສອງເຂື່ອໄດ້ລົມກັນທີ່ແຄມທົ່ງ.

- ສີທົນຕອບວ່າ, ບໍ່ມີຫຍັງນາ ລູກບໍ່ເວົ້າໄດ້ລົມນຳລາວ.

- ຄັນລູກບໍ່ລົມເຂົາ ເຮັດຈັ່ງໃດຊິໄດ້ຄວາມຄັກ ຊັ້ນ ?

- ໄດ້ລົມນຳເຂົາແຕ່ເທື່ອດຽວ ແຕ່ຄາວຈາກບ້ານທ່າເດື່ອ ເຮົາໄປບ້ານພະຂາວນຳກັນທີ່ນັ້ນແລ້ວ ແຕ່ນັ້ນມາຄວາມດຽວກໍບໍ່ໄດ້ປາກນຳ ຄືດັ່ງຊິໄດ້ຍິນເຂົາວ່າ "ບໍ່ມັກ" ຄັນຊິໃຫ້ໄດ້ອຸກປູເລື່ອຍ ໆ ຈັ່ງຊີ້ ແຫນງສູ້ປ່າໃຫ້ໄດ້ຍິນສາ.

- ຮວ້າຍ ! ສີທົນ ຊັ້ນກໍໄປລົມເຂົາເບິ່ງໄປ ພໍ່ເຈົ້າກໍພ້ອມຢູ່ ໄປຕົກລົງສາດຽວນີ້ ເປັນຕາໄດ້ແມ່ກໍປາກໄດ້ຍິນນຳ ຢູ່ບໍ່ມີຫຼັກນີ້ຖານຈັ່ງຊີ້ ທ່ອນຢູ່ເປັນແລ້ວ.

- ເມື່ອນັ້ນ ສີທົນກໍອອກໄປຕາມຄວາມມຸ້ງໝາຍຂອງພໍ່ເຖົ້າແມ່ເຖົ້າ. ເຂົາຂຶ້ນໄປເຮືອນແມ່ປ້າຈຳປາທັງກົ້ມໜ້າ ດູອາການເໝືອນຄົນປ່ວຍ ເວລານັ້ນມີແຕ່ນາງສຸວັນນີຜູ້ດຽວນັ່ງຢູ່ແຈຄີໄຟ ກຳລັງຊົງຄິດຢູ່ ຈົນບໍ່ໄດ້ຍິນສຽງບາດຍ່າງຂອງສີທົນເຂົ້າມາຫາ. ເມື່ອນາງເຫັນຊາຍຢືນຢູ່ຕໍ່ໜ້າຕົນ ນາງກໍຕື່ນທັງແຮງທັງໜ້າກໍຫື້ນແດງ.

- ສີທົນພ່ອງຄ່ອຍນັ່ງລົງແລະເວົ້າໄປວ່າ, "ນ້ອງເອີຍ ! ສຸວັນນີເອີຍ ! ການທີ່ອ້າຍມານີ້ກໍເຫັນວ່າເປັນການເສົ້າໂສກເສັຽໃຈແກ່ນ້ອງບໍ່ແພ້ແລ້ວ ນີ້ອ້າຍກໍຮູ້ຢູ່ ແຕ່ເຮັດຈັ່ງໃດບໍ່ເປັນ ພໍ່ເຖົ້າແມ່ເຖົ້າຫາກແຕ່ງມາ ເພື່ອຂໍເອົານ້ອງໄປເປັນລູກເປັນເມັຽ ສືບປ້າວແຫນເຮືອນ ນ້ອງຊິວ່າຈັ່ງໃດ ເປັນຈັ່ງໃດອ້າຍຂໍຮູ້ນຳແດ່ ລໍຟັງຢູ່ດຽວນີ້.

- ສຸດອົກສຸດໃຈແລ້ວຫວະ ? ອ້າຍຮັກນ້ອງອີຫຼີ ຫວະ ?

- ຢ່າເສັຽໃຈເທາະນ້ອຍເອີຍ ນ້ອງບໍ່ມັກອ້າຍກໍຮູ້ຈັກຢູ່ ເພິ່ນຫາກຈຳມາເດ ຄັນນ້ອງຫາກປະຄວາມຫຼັງຈັງຄວາມເກົ່ານັ້ນ ກໍຫາດີບໍ່ໄດ້ແລ້ວ ແຕ່ອ້າຍນີ້ຄືຊິບໍ່ລືມນ້ອງຜູ້ດີແລ້ວ. ອວ່າຍໜ້າມາຫາອ້າຍແດ່ເນີ ອ້າຍກໍເປັນຜູ້ເຮີຜູ້ຮ້າຍແທ້ບໍ ?

- ສຸວັນນີຕອບໄປທັງຍິ້ມຫົວວ່າ, ບໍ່, ອ້າຍຍັງງາມກວ່ານ້ອງຊ້ຳ.

- ຢ່າເວົ້າສຽດຫຼາຍນາ ອີກິນອ້າຍແດ່ເດ ຜົມອ້າຍກໍຍັງບໍ່ທັນຫງອກຈັກເສັ້ນ ແຂ້ວອ້າຍກໍຍັງບໍ່ທັນຄອນຈັກເຫຼັ້ມ ຄັນປາກຮູ້ຄັກວ່າອ້າຍຮັກຫຼືບໍ່ຮັກ ຂໍໃຫ້ນ້ອງເບິ່ງໃນຕາຂອງອ້າຍ ທີ່ນັ້ນນ້ອງຄວນເຫັນຈຸດປະສົງຂອງອ້າຍຄັກແນ່. ແຕ່ສາວທັງຫຼາຍຍັງຮູ້ດູລັກສນະຂອງຊາຍໃນດວງຕາ ຫັ້ນເດ.

- ເມື່ອນັ້ນສຸວັນນີກໍເລືອດເບິ່ງແສງຕາຊາຍໂດຍແທ້ ແຕ່ແກມຫຼີ້ນ ບໍ່ພໍຄາວນາງກໍງວາກໜ້າໜີທັງສັ້ນ.

- ສີທົນກ່ອຍໄປວ່າ, ໂອຍນໍ ! ເທວະດາເອີຍ ຈັ່ງແມ່ນອ້າຍເປັນຜູ້ໜ້າປ້ານແທ້ນໍ ຫຼືວ່ານ້ອງເບິ່ງອ້າຍດີນ້ອງເບິ່ງເຈົ້ານາຫັ້ນບໍ ຢ່າປ້ານເພາະນາ ຂໍນຳຫຼາຍໆ ດັ່ງເປັນຈັ່ງຊີ້ອ້າຍແຮງຊິອຸກໜິກອຸກໃຈແລ້ວ ອ້າຍດີບໍ່ໄດ້ເວົ້າຄວາມສົ້ນຄວາມເຄັ້ນໃຫ້ນ້ອງຢ່າງໃດນາ ດັ່ງວ່າບໍ່ມັກອ້າຍກໍບໍ່ໄດ້ຂົ່ມເຫັງໃຫ້ມັກດອກ ດັ່ງປາກໃຫ້ອ້າຍໜີອ້າຍກໍຊິໜີໃຫ້ມັນຫວິວວ່າງອ້ອງສາ--- ຢ່າເພາະໄປວອກໃຫ້ມັນມີ້ນຄວາມຄຽດຄວາມຊ້ງກັບສາ.

- ເມື່ອນັ້ນນາງສຸວັນນີກໍເດີນມາຫາສີທົນ ເພື່ອຈັບສົ້ນກະແອວໄວ້ ແຕ່ບັງກົ້ມໜ້າໄປທາງດີໄຟນຸ້ມຢູ່ ແລະບໍ່ວ່າຄວາມໃດຕໍ່ໄປ.

- ສີທົນກ່ອຍໄປອີກວ່າ ອ້າຍຮູ້ຈັກແລ້ວ ຂໍອະພັຍນຳນ້ອງແດ່ ນ້ອງຜູ້ເປັນຜູ້ວິຜູ້ງາມ ນ້ອງບໍ່ປາກໃຫ້ອ້າຍເປັນທຸກຫຼາຍ ແຕ່ນ້ອງຫາກບໍ່ມັກອ້າຍ.

- ເປັນຫຍັງຈຶ່ງເວົ້າສຽດເວົ້າສວຍແທ້ (ສຸວັນນີກ່ອຍວ່າ) ສີທົນ ຫຼືວ່າອ້າຍປາກໃຫ້ນ້ອງຮ້ອງໄຫ້ຂຶ້ນນັ້ນ ຊັ້ນຫວະ ?

- ໂອຍນໍນ້ອງເອີຍ ຜູ້ນ້ຳໃຈດີເອີຍ ອ້າຍຮູ້ຈັກແລ້ວວ່ານ້ອງບໍ່ມັກອ້າຍ ນ້ອງເສືອງໜ້າບໍ່ປາກໃຫ້ອ້າຍເຫັນເຖືອນນ້ອງ ນີ້ບໍ່ຫານຈັບແຂນຈັບມືນ້ອງຊ້ຳ ດີດເບິ່ງດູເວລາເຮົາຢູ່ປ່ານຳກັນນັ້ນລູກອ້າຍແລະເຈົ້າເອງຫາກນອນຫຼັບຢູ່ ອ້າຍຫາກເກືອບຫຼົງກອດ

ນ້ອງ ແຕ່ຖ້າອ້າຍຫາກເຮັດດັ່ງນັ້ນ ໂດຍບໍ່ຂໍອະນຸຍາດນຳນ້ອງ ຫຼື ນ້ອງຫາກບໍ່ອະນຸຍາດໃນຄືນນັ້ນ ອ້າຍຄົງໄດ້ຄວາມກິນແໜງແລະ ເສົ້າໂສກເໝືອນດັ່ງໄຟລົນນັ້ນແລ້ວ ນັບແຕ່ຄືນນັ້ນມາ ອ້າຍກໍໄດ້ ຝັນຫາເຈົ້າຢູ່ທຸກ ໆ ຄືນ ໄດ້ຝັນກອດກ້ຽວກັນກັບນ້ອງຢູ່ສເໝີ ແຕ່ ສ່ວນນ້ອງຄົງວ່າເປັນດັ່ງນີ້ ຄືຊິສລົບຕາຍຍ້ອນຄວາມລະອາຍແຫຼະນໍ

ສີທົນຈົມຢູ່ວັງນ້ຳຜູ້ດຽວດັ່ງໃຫຼຝັນ ສ່ວນນາງສຸວັນນີກໍສັ່ນ ຢູ່ວັກ ໆ ສີທົນນຶ່ງສັ່ນກວ່ານັ້ນອີກ ແຕ່ເຂົາຫາກບໍ່ຮູ້ເນື້ອ.

ທັນໃດນາງກໍຫັນໜ້າວໍ່ທັງນ້ຳຕາຍິ້ມຍ້ອຍ ແລະເຫຼືອດ ເບິ່ງສີທົນເປັນຄັດເຄົ້າ ສ່ວນພໍ່ນາງໜ້າອິດູ ຄືວ່າໜົດເທົ່ານັ້ນແລ້ວບໍ່ ນີກາ ງຊີຄືດວ່າກໍ່ຜູກລູກ--- ແຕ່ໃນເວລາດຽວນັ້ນ ສອງແຂນນາງກໍ ຊວ້ານກອດຮັດໄວ້ ແລະມຸບໜ້າເຂົ້າວ່າງເອິກຂອງຊາຍທັງສະອື້ນ ພ້ອງເວົ້າໄປວ່າ ໂອຍ ! ອ້າຍເອີຍ ອ້າຍບໍ່ຮູ້ຈັກບໍວ່ານ້ອງຮັກອ້າຍ?

ຄວາມນີ້ເຫັນຈະພາສີທົນມ້ອຍສລົບໄປ ຖ້າລູກຊາຍເຂົາ ໃນເວລານັ້ນ ບໍ່ຂີ້ນ້ຳໄມ້ຄ້ອນກັບນ້ອງສາວຂອງເຂົາຖືຟືດໄມ້ໄລ່ຕາມ ຫຼັງ ຫອບເຂົ້າມາຈວາດເອົາ ເມື່ອນັ້ນສີທົນກໍໃຈນລູກຍືນໃຫ້ຜູ້ຈະ ເອົາວິນວ່າ.

ເຫັນບໍ່ສຸວັນນີເອີຍ ! ເມື່ອນ້ອງຮັກອ້າຍດັ່ງນີ້ ກໍມີແຕ່ ອ້າຍຜູ້ດຽວໄດ້ຄວາມສຸກຍ້ອນ, ນ້ອກຜູ້ນຶ່ງ, ເອົາ ! ---

- ຈົບ -